## ກຸ່ມຜູ້ຈັດທຳ ການສຶກສາພຣະຄັມພີພາສາລາວ

Copyright © 2001 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ
ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ
ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ,
ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒໐໐໐

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit  2
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
    Joe Haag, Director of Program Planning and Special Moral Concerns,
    Christian Life Commission

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ເຖິງເວລາແລ້ວ</u>
# <u>ບົດຮຽນທີ 1</u>

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 1:1-15
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ມາຣະໂກ 1:1-15
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າ.
<u>ຄຳຖາມເພື່ອການສຳຣວດ:</u> ການປະກາດຂອງພຣະເຢຊູມີຄວາມສັມພັນກັບພວກຜູ້ທຳນວາຍໄວ້ຢ່າງໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ຮູ້ວ່າການປະກາດຂອງພຣະເຢຊູແມ່ນເຣື່ອງທີ່ພວກຜູ້ທຳນວາຍໄດ້ກ່າວໄວ້ໃນສມັຍເດີມນັ້ນເອງ

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>
- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

ທ່ານເຄີຍຄິດເປັນບາງຄັ້ງບໍ່ວ່າ "ເຖິງເວລາແລ້ວທີ່ຂ້າພະເຈົ້າຈະ.....ຫລືເວົ້າຕາມພາສາບ້ານເຮົາແລ້ວເຮົາມັກຈະເວົ້າວ່າຮອດຍາມແລ້ວ." ຄຳວ່າຍາມ ອາດໝາຍເຖິງຍາມນັ່ງ, ຍາມນອນ, ຍາມພັກຜ່ອນ, ຍາມເຮັດວຽກງານ, ຍາມເກີດ, ຍາມຕາຍ, ຍາມເຈັບໄຂ້, ຍາມຢູ່ດີມີແຮງ, ຍາມມ່ວນຊື່ນ, ຍາມໂສກເສົ້າ. ເພາະວ່າພຣະເຈົ້າໄດ້ຊົງສ້າງທຸກ ຢ່າງໃຫ້ມີຍາມຫລືການເວລາຂອງມັນເອງ. ໃນພຣະທັມປັນຍາຈານໄດ້ບັນທຶກໄວ້ຢ່າງດີ. ດັ່ງນັ້ນເຣື່ອງຍາມຫລືເວລາຕ່າງໆຈະມີຄວາມໝາຍສຳຄັນແຕ່ລະຄົນບໍ່ຄືກັນ ສຸດແລ້ວແຕ່ຈະຖືກໃຜແລະຖືກໃນເວລາໃດ. ສິ່ງທີ່ເຮົາກຳລັງຈະເວົ້າກັນໃນວັນນີ້ແມ່ນເຖິງເວລາທີ່ພຣະເຈົ້າຈະສົ່ງພຣະບຸດອົງດຽວຂອງພຣະອົງລົງມາເກີດເປັນມະນຸດ ເພື່ອຊ່ອຍຄົນຈຳນວນຫລວງ ຫລາຍທີ່ຍອມເຊື່ອໃນພຣະອົງຈະໄດ້ຮັບຄວາມລອດພົ້ນຈາກບຶງໄຟນາຣົກ.

## <u>ຂ່າວດີທີ່ສຸດຄືຂ່າວການສະເດັດມາຂອງພຣະບຸດພຣະເຈົ້າ</u> (ມຣກ 1:1-5, 15).

ເຮົາເຄີຍໄດ້ຍິນຂ່າວຫລາຍໆຂ່າວໃນໂລກນີ້ ແຕ່ເຮົາບໍ່ເຄີຍໄດ້ຍິນຂ່າວເຣື່ອງຊີວິດຫລັງຈາກຕາຍແລ້ວອີນຍາມກໍໄດ້ໄປຢູ່ສວັນ. ປະວັດສາດກາຍເປັນຄວາມຈິງ, ຫລາຍພັນຫລາຍປີແຕ່ງການລໍຄອຍຈາກສມັຍຂອງອັບຣາຮາມ ຈົນເຖິງສມັຍພຣະເຢຊູມາບັງເກີດເປັນມະນຸດ ນັບວ່າເປັນເວລາຫລາຍຊົ່ວອາຍຸຄົນ. ພຣະເຈົ້າໄດ້ຊົງສັນຍາໄວ້ກັບ ອັບຣາຮາມ ຄືພຣະອົງສັນຍາວ່າຈະໃຫ້ເຊື້ອສາຍຂອງອັບບຣາຮາມເປັນໃຫຍ່ເຖິງຂັ້ນເປັນຜູ້ໂຜດຄົນທັງຫລາຍໃຫ້ພົ້ນ ຈາກຄວາມຜິດຄວາມບາບແລະຄົນທີ່ພົ້ນຈາກຄວາມຜິດບາບນັ້ນຈະໄດ້ພົ້ນຈາກບຶງໄຟນາຣົກໂດຍຄົນຜູ້ດຽວ. ຄຳສັນ ຍານັ້ນພຣະເຈົ້າໄດ້ສັນຍາໄວ້ເປັນເວລາຫລາຍຮ້ອຍປີ ໃນທີ່ສຸດວັນເວລາແຫ່ງສັນຍາກໍມາເຖິງ ຄືພຣະເຈົ້າໄດ້ສົ່ງພຣະ ບຸດອົງດຽວ ຂອງພຣະອົງລົງມາເກີດເພື່ອໂຜດມະນຸດທັງຫລາຍໃຫ້ພົ້ນ, ພຣະອົງຊົງພຣະນາມວ່າ "**ພຣະເຢຊູຄຣິດ**" ຊຶ່ງແປວ່າ **ພຣະຜູ້ໂຜດໃຫ້ພົ້ນ.** ດ້ວຍເຫດນີ້ຂ່າວການເກີດຂອງພຣະເຢຊູຈຶ່ງຍິ່ງໄປກວ່າຂ່າວດີຈົນກາຍເປັນຂ່າວປະເສີດ.

ທ່ານເອຊາຢາ ແລະທ່ານມາລາກີຜູ້ປະກາດພຣະທັມຂອງອົງພຣະຜູ້ເປັນເຈົ້າໄດ້ທຳນວາຍເຣື່ອງການເກີດຂອງ ພຣະເຢຊູໄວ້ລ່ວງໜ້າຫລາຍຮ້ອຍປີ. ການທຳນວາຍມີເນື້ອຄວາມວ່າ ພຣະເຈົ້າຈະສົ່ງຜູ້ຮັບໃຊ້ຂອງພຣະບຸດໄປລ່ວງໜ້າເພື່ອຈັດຕຽມໃຫ້ຮຽບຮ້ອຍກ່ອນພຣະບຸດພຣະເຈົ້າຈະສະເດັດລົງມາ. ຜູ້ປະກາດພຣະທັມໝາຍເຖິງໂຢຮັນເປັນຜູ້ຖືກສົ່ງມາຈາກສວັນເພື່ອຈັດຕຽມແລະປ່າວປະກາດໃຫ້ທຸກຄົນກັບໃຈ, ຫັນໜີຈາກທາງຊົ່ວທຸກຢ່າງແລ້ວຍອມຮັບເຊື່ອພຣະນາມພຣະເຢຊູ. ພໍໂຢຮັນໄດ້ປະກາດອອກໄປ ມີຄົນຈຳນວນຫລວງຫລາຍພາກັນມາຫາໂຢຮັນ ແລະແລ້ວໂຢຮັນກໍໃຫ້ເຂົາທັງຫລາຍຮັບບັບຕິສະມາດ້ວຍການຈຸ່ມລົງນ້ຳ ແລະໂຢຮັນຍັງບອກພວກເຂົາຕໍ່ໄປວ່າ ຜູ້ທີ່ມາພາຍຫລັງຊຶ່ງໂຢຮັນໝາຍເຖິງພຣະເຢຊູຈະໃຫ້ເຂົາທັງຫລາຍຮັບພຣະວິນຍານໂດຍພຣະເຢຊູຄຣິດ.

<u>ໂອກາດດີທີ່ຄວນສາຣະພາບຄວາມຈິງ </u> (1:4-6,15)

ປາໃຫຍ່ກິນປານ້ອຍ, ປານ້ອຍກິນປານ້ອຍໆ, ປານ້ອຍໆກິນປານ້ອຍໆໆ ແລະປານ້ອຍໆໆກິນປານ້ອຍໆໆໆ ຕາມທັມະຊາດຂອງມັນ ດັ່ງນັ້ນມະນຸດເຮົາຈຶ່ງພະຍາຍາມເອົາຕົວລອດເປັນຍອດດີ. ຄືຜູ້ໃຫຍ່ກໍເອົາປຽບຜູ້ນ້ອຍ, ຜູ້ນ້ອຍກໍເອົາປຽບຜູ້ນ້ອຍໆ ເຮັດແນວໃດຕົນເອງແລະຄອບຄົວຈະມີຢູ່ມີກິນກໍເຮັດ ບາງຄັ້ງກໍຄ້າຍຄືເຮົາເອງໃສ່ໜ້າກາກຕົວະຕົ້ມຫລອກລວງຊຶ່ງກັນແລະກັນ ແມ່ນແຕ່ຜົວເມັຽກໍຍັງຫລັກໃຈກັນເຮັດທຸກຢ່າງເພື່ອຈະເປັນໄປຕາມຄວາມສຸກແຫ່ງໃຈຕົນເອງ. ຄົນຈຳພວກນີ້ຖືວ່າເປັນຄົນສລາດເພາະສາມາດຕົວະຕົ້ມຫລອກລວງໄດ້ຕາມສະບາຍ ໂດຍບໍ່ມີໃຜຮູ້ເຫັນໄດ້. ລາວຜູ້ດຽວທີ່ຮູ້ເຕັມໃຈເຖິງຄວາມຜິດບາບຂອງລາວດັ່ງນັ້ນໃນໃຈຂອງລາວມີແຕ່ຄວາມຢ້ານກົວຕລອດເວລາ, ລາວຢ້ານຈະຖືກຈັບໄດ້ບໍ່ມື້ໃດກໍມື້ນຶ່ງ.

ເຫດນີ້ເອງໂຢຮັນບັບຕິສະໂຕຈຶ່ງປ່າວປະກາດໃນປ່າວ່າໃຫ້ທຸກຄົນຖິ້ມໃຈເກົ່າເອົາໃຈໃໝ່ ເພາະວ່າແຜ່ນດິນສວັນໃກ້ມາຮອດແລ້ວ ຈົ່ງພາກັນຖອດໜ້າກາກອັນຈອມປອມນັ້ນຖິ້ມເສັຽເຖິງແມ່ນບໍ່ມີໃຜໃນໂລກນີ້ຮູ້ກໍຕາມ ແຕ່ຕົວທ່ານເອງເປັນຜູ້ຮູ້ ເພາະພຣະເຈົ້າຊົງເຕືອນທ່ານ. ເມືອງສວັນຂອງອົງພຣະຜູ້ເປັນເຈົ້ານັ້ນນອກຈາກຜູ້ບໍຣິສຸດຜຸດຜ່ອງແລະຕ້ອງເປັນຜູ້ເຊື່ອໄວ້ວາງໃຈໃນພຣະເຈົ້າເທົ່ານັ້ນຈຶ່ງຈະມີໂອກາດໄປຢູ່ເມືອງສວັນໄດ້. ວັນນີ້ເປັນໂອກາດດີທີ່ທ່ານທັງຫລາຍຄວນສາຣະພາບຄວາມຈິງຕໍ່ພຣະເຈົ້າເຖິງເວລາທີ່ເຮົາທັງຫລາຍຄວນທຳລາຍຄວາມຜິດບາບແລ້ວ ເພາະໃນເວລານີ້ແມ່ນເວລາທີ່ພຣະເຈົ້າເປີດໂອກາດໃຫ້ເຮົາກັບເນື້ອກັບຕົວສາຣະພາບກັບພຣະອົງແລ້ວພຣະອົງກໍຈະຊົງອະພັຍໃຫ້ທ່ານທັນທີ.

ຄຳວ່າກັບໃຈຈາກການຊົ່ວຮ້າຍທີ່ໂຢຮັນໄດ້ກ່າວນັ້ນໝາຍຄວາມວ່າ ໃຫ້ປ່ຽນຄວາມຄຶດຈິດໃຈ, ປ່ຽນການກະທຳຕາມໃຈມັກ. ແນວໃດທີ່ຜິດຕໍ່ລູກຕໍ່ຜົວ, ຜິດຕໍ່ຄອບຕໍ່ຄົວ ຕລອດເຖິງການ ຜິດຕໍ່ປະເທດຊາດບ້ານເມືອງເພິ່ນໃຫ້ພາກັນເຊົາເສັຽ ແລະໃຫ້ທຸກຄົນຫັນໜ້າເຂົ້າສູ່ທາງຂອງອົງພຣະຜູ້ເປັນເຈົ້າແລະຟັງຄຳສັ່ງສອນຂອງພຣະອົງຜູ້ຊົງເປັນພຣະເຈົ້າແຕ່ພຽງອົງດຽວ. ຈາກນັ້ນໃຫ້ທຸກຄົນຕັດສິນໃຈຍອມສາຣະພາບ ຄວາມຜິດບາບແລະຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ ແລະພຣະວິນຍານບໍຣິສຸດ ແລ້ວພຣະອົງ ກໍຈະອາພັຍໃຫ້ແກ່ທຸກຄົນທີ່ຍອມສາຣະພາບບາບທັງໝົດ. ດັ່ງນັ້ນຄົນທັງຫລາຍຈຶ່ງພາກັນອອກໄປພົບໂຢຮັນສາຣະພາບຄວາມຜິດບາບຂອງຕົນແລ້ວຮັບບັບຕິສະມາໃນແມ່ນ້ຳຢໍດາເນ (ຂໍ້ 6).

<u>ການບັງເກີດຂອງພຣະເຢຊູແມ່ນຂ່າວປະເສີດ</u> (1:1,7-15)
ຂ່າວການສະເດັດມາບັງເກີດຂອງພຣະເຢຊຄຣິດແມ່ນຂ່າວທີ່ປະເສີດທີ່ສຸດ ເພາະພຣະອົງເປັນບໍ່ເກີດແຫ່ງຄວາມລອດພົ້ນທີ່ມະນຸດທຸກຊາດ, ທຸກພາສາຄອງຄອຍພຣະຜູ້ໂຜດໃຫ້ພົ້ນສະເດັດລົງມາເກີດຕາມຄວາມເຊື່ອຂອງຄົນໃນໂລກ ອັນທີ່ຈິງພຣະຜູ້ໂຜດທີ່ໂລກກຳລັງຄອງຄອຍຫາໄດ້ສະເດັດມາເກີດໄດ້ສອງພັນກວ່າປີແລ້ວແຕ່ຊົງພຣະນາມວ່າ **ພຣະເຢຊູຄຣິດ**   ຊຶ່ງແປວ່າ **ພຣະຜູ້ໂຜດໃຫ້ພົ້ນ**.

ຫລັງຈາກໂຢຮັນໄດ້ຊັກຊວນໃຫ້ຄົນທັງຫລາຍປ່ຽນໃຈກັບເນື້ອກັບຕົວແລ້ວທ່ານຍັງໄດ້ປະກາດ ເຣື່ອງການສະເດັດມາຂອງພຣະເຢຊູຄຣິດເພື່ອໂຜດຄົນຈຳນວນຫລາຍໃຫ້ໄດ້ຮັບຄວາມລອດພົ້ນຈາກບຶງໄຟນາຣົກ. ໂຢຮັນຍັງໄດ້ປະກາດວ່າໂຢຮັນເອງໃຫ້ບັບຕິສະມາດ້ວຍນ້ຳແຕ່ເມື່ອພຣະຄຣິດສະເດັດມາທ່ານທັງຫລາຍຈະໄດ້ຮັບບັບຕິສະມາດ້ວຍພຣະວິນຍານບໍຣິສຸດ. ຮັບບັບຕິສະມາດ້ວຍນ້ຳແລະດ້ວຍພຣະວິນຍານບໍຣິສຸດເປັນເຣື່ອງທີ່ຖົກຖຽງກັນມາເປັນເວລາຍາວນານມີບາງຄົນເຂົ້າໃຈວ່າຄົນຫລັງບໍ່ໄດ້ຮັບພຣະວິນຍານບໍຣິສຸດຈົນເຖິງວັນເພັນຕີຄອດສະໂຕເພາະໃນວັນນັ້ນພວກສາ ວົກພາກັນເລີ້ມຕົ້ນເວົ້າພາສາແປກໆ.

ແຕ່ໃນບົດຮຽນບົດນີ້ຂ້າພະເຈົ້າຈະບໍ່ກ່າວເຖິງເຣື່ອງນີ້ເພາະບໍ່ແມ່ນບົດຮຽນ ເຣື່ອງພຣະວິນຍານແຕ່ຂ້າພະເຈົ້າຢາກກ່າວເຖິງສິ່ງທີ່ຂ້າພະເຈົ້າໄດ້ຮຽນຮູ້ແລະຄວາມເຂົ້າໃຈເຊັ່ນນີ້: ຄືໂຢຮັນກ່າວວ່າທ່ານເອງໃຫ້ບັບຕິສະມາດ້ວຍນ້ຳນັ້ນຖືກຕ້ອງແລ້ວເພາະພຣະວິນຍານບໍ່ແມ່ນຂອງໂຢຮັນ ແຕ່ເປັນຂອງພຣະເຈົ້າດັ່ງນັ້ນແຫລະໂຢຮັນຈຶ່ງກ່າວວ່າຜູ້ທີ່ມາພາຍຫລັງຈະໃຫ້ທ່ານທັງຫລາຍຮັບພຣະວິນຍານບໍຣິສຸດ. ສລຸບແລ້ວຄົນທຸກຄົນຮັບບັບຕິສະມາດ້ວຍນ້ຳບໍ່ວ່າຈະເປັນພິທີຈຸ່ມລົງໃນນ້ຳ ຫລືພິທີພົມນ້ຳລ້ອນແລ້ວແຕ່ແມ່ນການຮັບພິທີຈາກມະນຸດຈາກ ແຕ່ສ່ວນພຣະວິນຍານນັ້ນບໍ່ມີມະນຸດ ຜູ້ໃດໃຫ້ໄດ້ນອກຈາກພຣະເຈົ້າເທົ່ານັ້ນທີ່ໃຫ້ໄດ້.

ພຣະເຢຊູຊົງກ່າວວ່າ " ເວລາກຳນົດມາເຖິງແລ້ວຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃນເກົ່າເອົາໃຈໃຫມ່ແລະເຊື່ອໃນຂ່າວປະເສີດ " (ມຣກ 1:15). ຄຳເວົ້ານີ້ຟັງແລ້ວກໍເຂົ້າໃຈຍາກສຳລັບຜູ້ບໍ່ເຊື່ອຫລືຜູ້ທີ່ພຣະເຈົ້າບໍ່ຊົງເລືອກໃຫ້ເຊື່ອເພາະຄວາມເຊື່ອບໍ່ແມ່ນໄດ້ມາຈາກຜູ້ໃດຜູ້ນຶ່ງແຕ່ແມ່ນພຣະເຈົ້າຊົງປະທານໃຫ້. "ດ້ວຍວ່າທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງແຕ່ພຣະເຈົ້າຊົງປະທານໃຫ້ (ອຟຊ 2:8). ທ່ານຈຳເຣື່ອງທີ່ພຣະເຢຊູພົບກັບຍິງຊາມາເຣັຽທີ່ນ້ຳສ້າງບໍ່? ພຣະເຢຊູໄດ້ຂໍດື່ມນ້ຳຈາກນາງແລະພຣະອົງຈະປະທານນ້ຳແຫ່ງຊີວິດໃຫ້ແກ່ນາງ. ເຣື່ອງນີ້ເຮັດໃຫ້ຂ້າພະເຈົ້າຄຶດເຖິງຄຳວ່າແຜ່ນດິນສວັນໄດ້ມາໃກ້ແລ້ວຄືເຮົາທັງຫລາຍຈຳຕ້ອງມອບໃຈໃຫ້ກັບພຣະອົງແລະແລ້ວແຜ່ນດິນສວັນກໍຈະເປັນຂອງເຮົາເຫມືອນດັ່ງຍິງຊາວຊາມາເຣັຽເອົານ້ຳໃຫ້ພຣະເຢຊູດື່ມ ແລະນາງເອງກໍໄດ້ຮັບນ້ຳແຫ່ງຊີວິດຈາກພຣະອົງ. ເຖິງເວລາເຮົາທັງຫລາຍສົມຄວນຈະໄດ້ຮັບແມ່ນດິນສວັນແລ້ວ ເຮົາຈະຍັງລໍຊ້າຢູ່ເຮັດຫຍັງ?

<u>ຄຳຖາມ</u>
1. ຂ່າວປະເສີດແປວ່າຫຍັງ? ເປັນຫຍັງຈຶ່ງເອີ້ນວ່າຂ່າວປະເສີດ?

2. ພຣະເຈົ້າໄດ້ສັນຍາໄວ້ກັບໃຜ? ແລະຄຳສັນຍາຂອງພຣະເຈົ້າໄດ້ສຳເຣັດໃນເວລາໃດ?

3. ໂຢຮັນໄດ້ປະກາດໃນປ່າໃນເຣື່ອງຫຍັງ? ແລະການປະກາດຂອງໂຢຮັນໄດ້ກ່າວເຖິງພຣະເຢຊູຄຣິດຢ່າງໃດ?

4. ຄໍາວ່າຖິ້ມໃຈເກົ່າເອົາໃຈໃຫມ່ທີ່ໂຢຮັນໄດ້ປະກາດຫມາຍຄວາມວ່າແນວໃດ?

5. ໂຢຮັນໃຫ້ບັບຕິສະມາດ້ວຍນໍ້າ ແລະຜູ້ທີ່ມາພາຍຫລັງຈະໃຫ້ຄົນທັງຫລາຍໄດ້ຮັບພຣະວິນຍານແປວ່າຫຍັງ?

6. ພຣະເຢຊູໄດ້ປະກາດວ່າ " ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ " ຫມາຍຄວາມວ່າຢ່າງໃດ?
ຄໍາວ່າໃກ້ນັ້ນແມ່ນໃກ້ແນວໃດ?

# ຍູ່ຢ່າງພຣະຄຣິດ
# ບົດຮຽນທີ 2

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 4:23--5:16
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ມັດທາຍ 4:23--7:28
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ສອນໃຫ້ເຮົາທັງຫລາຍເຮັດຕາມແບບຢ່າງພຣະອົງ.
ຄຳຖາມເພື່ອການສຳຣວດ: ພຣະປະສົງຂອງພຣະເຈົ້າໃຫ້ຂ້າພະເຈົ້າຢູ່ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍໄດ້ສຳຣວດຕົນເອງທຽບກັບພຣະທັມທີ່ພຣະອົງສອນ.

| ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ |
|---|
| ● ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປຍັງທຸກຄົນເທົ່າທີ່ເຮົາມີໂອກາດໂອ້ລົມແລະຫາໂອກາດໂອ້ລົມ. |
| ● ຊ່ອຍເຫລືອເບິ່ງແຍງທຸກຄົນທີ່ຢູ່ໃນຄວາມຂັດສົນ. |
| ● ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ. |

## ຊົງຊ່ອຍເຫລືອປະຊາຊົນ (4:23-25)

ພຣະເຢຊູໄດ້ສະເດັດໄປທົ່ວແຂວງຄາລິເລເພື່ອສັ່ງສອນແລະຊ່ອຍເຫລືອຄວາມຈຳເປັນຂອງປະຊາຊົນ.ພຣະອົງ ຊົງໂຜດປວງຊົນໃຫ້ດີພະຍາດທຸກຢ່າງ. ເມື່ອປະຊາຊົນທັງຫລາຍຮູ້ເຖິງເຣື່ອງການປົວພະຍາດທຸກປະເພດໃຫ້ຫາຍດີ ເຂົາກໍພາຄົນເຈັບໄຂ້ໄດ້ພະຍາດມາຫາພຣະອົງແລະພຣະອົງກໍຊົງໂຜດເຂົາທຸກຄົນໃຫ້ຫາຍດີເພາະເຂົາມີຄວາມເຊື່ອໃນພຣະອົງ.

ກ. ປົວຄົນເຈັບໄຂ້ ແລະເປັນພະຍາດຕ່າງໆໃຫ້ດີ
ຂ. ຂັບໄລ່ຜີຮ້າຍທີ່ເຂົ້າສິງຮ່າງກາຍຂອງຄົນ
ຄ. ປິ່ນປົວຄົນເປັນບ້າໝູ, ແລະຄົນເປັ້ຽລ່ອຍ.

## ພຣະເຢຊູເທສນາຄັ້ງແຣກ (5:1-12)

ຫລັງຈາກພຣະອົງຊົງເຫັນຄົນຈຳນວນຫລວງຫລາຍມາພຣະອົງກໍຊົງຍ່າງຂຶ້ນໄປເທິງພູແລ້ວພຣະອົງກໍຊົງເລີ້ມຕົ້ນສັ່ງສອນດ້ວຍຄວາມຮັກແພງແລະອ່ອນຫວານ ເຣື່ອງຄວາມສຸກ ເພາະພຣະອົງມີພຣະປະສົງໃຫ້ເຮົາທັງຫລາຍມີຄວາມສຸກສົດຊື່ນສົມຫວັງທັງໃນໂລກນີ້ແລະໂລກໜ້າ(ມັດທາຍ 5). ພຣະອົງຊົງສອນດັ່ງນີ້:

ກ. "ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສັວນເປັນຂອງຜູ້ນັ້ນ" ມີຄວາມໝາຍວ່າຜູ້ໃດຖິ້ມຄວາມຄິດຝ່າຍໂລກ (ບໍ່ຄິດນຳຫລືເອົາໃຈໃສ່ຂອງໃນໂລກ) ແລະເຊື່ອໃນພຣະອົງກໍຈະໄດ້ໄປຢູ່ແຜ່ນດິນສວັນ.

ຂ. "ຜູ້ໃດໂສກເສົ້າກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ" ມີຄວາມໝາຍວ່າ ເສັຽໃຈ ແລະກັບໃຈເພາະຕົນເອງກະທຳຜິດ, ຍຸດຕິຄວາມຄິດຊົ່ວຮ້າຍ. ຍອດສາຣະພາບຄວາມຜິດແລະຄວາມບາບທັງໝົດ

ທີ່ເຮັດຜ່ານມາ ທຸກຄົນທີ່ສາຣະພາບພຣະອົງກໍຊົງເມດຕາ ອະພັຍໃຫ້.

ຄ. "ຜູ້ໃດມີໃຈອ່ອນຫວານກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນສວັນເປັນມໍຣະດົກ" ມີຄວາມຫມາຍວ່າ ເປັນຄົນຍອມຖ່ອມຕົວ, ບໍ່ເປັນຄົນອວດອ້າງ, ບໍ່ເປັນຄົນຈອງຫອງ, ແຕ່ມີໃຈອ່ອນສຸພາບເມດຕາສົງສານ ເຫມືອນພຣະເຢຊູຊົງເມດຕາສົງສານຕົນເອງ ຜູ້ນັ້ນຈະໄດ້ຮັບແຜ່ນດິນສວັນເປັນມໍຣະດົກ.

ງ. "ຜູ້ໃດອຶດຫິວຄວາມຊອບທັມກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງໃຫ້ອີ່ມບໍຣິບູນ" ມີຄວາມຫມາຍວ່າຜູ້ນັ້ນຊອກ ສແວງຫາພຣະເຈົ້າແລະຄວາມຊອບທັມຂອງພຣະອົງ ຄົນນັ້ນພຣະເຈົ້າຈະໃຫ້ມີເນືອງໆ.

ຈ. "ຜູ້ໃດມີໃຈກະຣຸນາກໍເປັນສຸກ ເພາະຜູ້ນັ້ນຈະໄດ້ຮັບພຣະກະຣຸນາຕອບ" ມີຄວາມຫມາຍວ່າຜູ້ນັ້ນມີໃຈເອັນດູສົງ ສານຍອມໃຫ້ຜູ້ ອື່ນຜູ້ໃດທີ່ໃຫ້ຜູ້ອື່ນພຣະເຈົ້າກໍຈະໃຫ້ຜູ້ນັ້ນ.

ສ. "ຜູ້ໃດມີໃຈບໍຣິສຸດກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ" ມີຄວາມຫມາຍວ່າ ເຊື່ອດ້ວຍຄວາມຈິງໃຈ ບໍ່ເປັນຄົນຫນ້າຊື່ໃຈຄົດ, ບໍ່ເປັນຄົນໂລບມາກ, ບໍ່ເປັນຄົນສໍ້ໂກງ ບໍ່ເປັນຄົນກ້ຽງແຕ່ນອກທາງໃນເປັນຫມາກ ເດື່ອ (ຟາຣີຊາຍ) ຄົນນັ້ນຈະໄດ້ເຫັນພຣະເຈົ້າຕໍ່ຫນ້າຕໍ່ຕາຊຶ່ງເປັນກຽດອັນສູງທີ່ໄດ້ເຫັນພຣະອົງ.

ຊ. "ຜູ້ໃດສ້າງຄວາມສງົບສຸກກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ" ມີຄວາມຫມາຍວ່າ ຢູ່ຢ່າງສງົບສຸກ, ຢູ່ຢ່າງຖືກຕ້ອງປອງດອງກັບເພື່ອບ້ານ ພ້ອມທັງສ້າງຄວາມສງົບສຸກ, ອວຍພອນສັຕຣູ (ເພາະ ພຣະເຢຊູຊົງເຮັດຢ່າງນີ້) ເຮັດຕາມແບບຢ່າງພຣະເຢຊູ ກໍຊົງຖືວ່າລູກຜູ້ຟັງຄວາມ.

ຍ. "ຜູ້ໃດຖືກຂົ່ມເຫັງເພາະຄວາມຊອບທັມກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ" ມີຄວາມຫມາຍວ່າ ຜູ້ໃດຖືກກົດຂີ່ຂົ່ມເຫັງ, ຖືກຈັບກຸມ, ຖືກເຮື່ອງຍ້ອນການປະກາດຂ່າວປະເສີດ ພຣະເຈົ້າຈະຊົງຈັດຫາໃຫ້ຜູ້ທີ່ ຖືກເສັຽຫາຍເພາະພຣະນາມຂອງພຣະອົງ.

<u>ຄຳປຽບທຽບຊີວິດຂອງເຮົາ</u> (5:13-16)

ກ. ພຣະເຢຊູຊົງກ່າວວ່າ ເຮົາທັງຫລາຍເປັນເກືອ ແລະເປັນແສງສວ່າງສຳລັບໂລກ. ເປັນໄປບໍ່ໄດ້ເຮົາ ຜູ້ເປັນ ຄົນຈະກາຍໄປ ເປັນເກືອ ແລະເປັນແສງໄຟໄດ້. ທີ່ພຣະອົງຊົງກ່າວວ່າ "ທ່ານເປັນເກືອສຳລັບໂລກ" ຄວາມຈິງເຣື່ອງເກືອ, ເກືອມີຣົດເຄັມທີ່ເຮົາໃຊ້ປຸງອາຫານປະຈຳວັນເພື່ອໃຫ້ມີຣົດຊາດແຊບ, ນອກນັ້ນ ເກືອຍັງສາມາດເອືອບຊີ້ນແລະປາບໍ່ໃຫ້ເນົ່າເຫມັນ, ຍິ່ງໄປກວ່ານັ້ນຫາກຜູ້ໃດກິນເກືອຫລືອາຫານທີ່ມີຣົດ ເຄັມໄປແດ່ ຄົນນັ້ນຈະ ດື່ມນ້ຳຫລາຍແລະດື່ມເລື້ອຍໆອີກຊ້ຳ. ທ່ານເປັນເກືອສຳລັບໂລກ ພຣະອົງຫມາຍ ຄວາມວ່າທ່ານຈະຕ້ອງເປັນຜູ້ຢູ່ກິນເພື່ອເປັນຕົວຢ່າງແລະ ແບບຢ່າງໃຫ້ແກ່ໂລກແລະເມື່ອໂລກເຫັນຊີວິດ ການເປັນຢູ່ຂອງທ່ານໂລກກໍຈະ ຕາມທ່ານ. ເວລານັ້ນທ່ານກໍເປັນ ເກືອທີ່ມີຣົດເຄັມທີ່ເອືອບໂລກບໍ່ໃຫ້ເນົ່າ ແລະໂລກກໍຈະຫິວນ້ຳແຫ່ງຊີວິດ ແລະເຂົາກໍຢາກຈະເປັນຄືທ່ານເມື່ອເຫັນຊີວິດການປະຕິບັດຂອງທ່ານເປັນ ທີ່ເທີດທູນຖວາຍກຽດແດ່ພຣະເຈົ້າ. ພຣະເຢຊູຕ້ອງການໃຫ້ເຮົາເປັນຄຣິສຕຽນທີ່ຄົນອື່ນເຫັນແລ້ວຢາກເປັນ ຄຣິສຕຽນ.

ຂ. ຢ່າງທີ່ສອງພຣະເຢຊົງກ່າວວ່າ "ທ່ານເປັນແສງສວ່າງສຳລັບໂລກ" ແລະເມືອງທີ່ຕັ້ງເທິງພູຈະບັງລັບບໍ່ໄດ້. ຢາກໃຫ້ທ່ານເຂົ້າໃຈວ່າເຮົາທັງຫລາຍບໍ່ແມ່ນແສງສວ່າງໂດຍກົງແຕ່ເປັນແສງສວ່າງແບບແສງສະທ້ອນ ຈາກແສງສວ່າງຂອງພຣະເຈົ້າ. ຕົວຢ່າງ: ຢູ່ຕາມແຄມທາງຫລວງໃຫຍ່ເຮົາຈະເຫັນແສງສວ່າງສ່ອງໃຫ້ເຮົາ ເຫັນຂອບທາງເມື່ອຕາໄຟຣົດເຮົາສ່ອງໄປໃສ່ເຄື່ອງສະທ້ອນນ້ອຍໆຕາມແຄມທາງ. ຫາກບໍ່ມີຕາໄຟຣົດເຮົາ

ສ່ອງອອກໄປກ່ອນແສງນັ້ນກໍຈະບໍ່ມີເລີຽ. ເຮົາທັງຫລາຍເປັນເຫມືອນແສງສະທ້ອນຕາມແຄມທາງເມື່ອແສງສວ່າງຂອງພຣະເຈົ້າສາດສ່ອງໃສ່ຕົວເຮົາງກໍກາຍເປັນແສງສວ່າງສຳລັບໂລກ ເພື່ອຊ່ອຍຄົນທັງຫລາຍໄດ້ດຳເນີນຊີວິດໃນຄວາມສວ່າງ. "ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້" (ຢຮ 15:5)

1. ຂໍ້ສັງເກດ: ເຄື່ອງສະທ້ອນແສງສວ່າງຢູ່ຕາມແຄມທາງນັ້ນບໍ່ແມ່ນຫມົດທຸກອັນສິ່ງແສງຫມົດ ເພາະມີບາງອັນຖືກຂີ້ຄົນປົກບັງໄວ້ຈຶ່ງຫມົດແສງສວ່າງ. ເພື່ອຈະໃຫ້ມີແສງສວ່າງອີກຈຳຕ້ອງຊຳຣະລ້າງໃຫ້ສະອາດຫລືປ່ຽນອັນໃຫມ່. ຫລືເຮົາເປັນຄືດອກໄຟຟ້າດອກນຶ່ງ ຫາກບໍ່ມີພະລັງໄຟຟ້າເຂົ້າມາດອກໄຟນັ້ນກໍຈະບໍ່ສາມາດຮຸ່ງແຈ້ງໄດ້.

2. ຂໍ້ສັງເກດ: ເມືອງທີ່ຕັ້ງຢູ່ເທິງພູຈະບັງລັບໄວ້ບໍ່ໄດ້ ພຣະເຢຊູຫມາຍເຖິງແຂວງຢູດາຍທີ່ຕັ້ງເທິງພູສູງຈະບໍ່ສາມາດກີດກັ້ນເຣື່ອງຂອງພຣະອົງໄດ້. ແສງສວ່າງຂອງພຣະອົງບໍ່ມີອຳນາດໃດກີດກັ້ນໄດ້ ຫລືບໍ່ມີອຳນາດໃດໆສາມາດກີດກັ້ນຂ່າວປະເສີດເຣື່ອງພຣະເຢຊູຄຣິດໄດ້.

ຫລັງຈາກສິ້ນສຸດການສັ່ງສອນໃນວັນນັ້ນປະຊາຊົນກໍແປກປລາດໃຈໃນຄຳສອນຂອງພຣະອົງ "ເພາະວ່າພຣະອົງຊົງສັ່ງສອນ ເຂົາເຫມືອນຜູ້ມີຣິດອຳນາດແລະບໍ່ ເຫມືອນພວກນັກທັມຂອງເຂົາ" (ມທ 7:29). ການທີ່ປະຊາຊົນປລາດໃຈກໍເພາະວ່າເຂົາບໍ່ເຂົ້າໃຈວ່າພຣະອົງເປັນພຣະ ເຈົ້າ ຈຶ່ງພາໃຫ້ເຂົາຄຶດວ່າ "ເຫມືອນຜູ້ມີຣິດອຳນາດ". ໃນພຣະທັມມັດທາຍ 28:19 ພຣະເຢຊູຊົງກ່າວວ່າ "ອຳນາດທັງຫມົດໃນສວັນແລະແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ". ຂໍ້ຄວາມທີ່ພຣະເຢຊູຊົງກ່າວນັ້ນເຮົາທັງຫລາຍເຂົ້າໃຈໄດ້ງ່າຍນ້ອຍດຽວທີ່ອຳນາດທັງແຜ່ນດິນສວັນແລະແຜ່ນດິນໂລກແມ່ນສຸດຂາດກັບພຣະອົງ ເຫດສັນນັ້ນພຣະອົງຈຶ່ງຊົງສັ່ງແລະມອບອຳນາດໃຫ້ສາວົກອອກໄປເຮັດການທີ່ພຣະອົງເຮັດ. ດ້ວຍເຫດນີ້ສາວົກຂອງພຣະອົງຈຶ່ງມີອຳນາດຕາມກຳນົດທີ່ພຣະອົງຊົງມອບໃຫ້ເພື່ອພຣະຣາຊກິດຂອງພຣະອົງ.

ຄຳຖາມ

1. ໃນຖານະທີ່ທ່ານເປັນຄົນເຊື່ອແລະເປັນລູກຂອງພຣະເຈົ້າທ່ານຄຶດວ່າທ່ານມີອຳນາດໃນການອ້ອນວອນປິ່ນປົວຄົນເຈັບໄຂ້ໄດ້ພະຍາດໃຫ້ຫາຍດີບໍ່?

2. ທ່ານເຄີຍອ້ອນວອນວາງມືໃສ່ຄົນເຈັບປ່ວຍບໍ່? ຫລັງຈາກອ້ອນວອນທັງຜູ້ປ່ວຍແລະທ່ານເອງຮູ້ສຶກແນວໃດ?

3. ຄວາມສຸກທີ່ພຣະອົງຊົງສອນນັ້ນມີສິ່ງໃດທີ່ທ່ານປະຕິບັດບໍ່ໄດ້? ເປັນຫຍັງ?

4. ເຮົາທັງຫລາຍເປັນເກືອ ແລະເປັນແສງສວ່າງແນວໃດ?

5. ດ້ວຍເຫດໃດປະຊາຊົນຈຶ່ງແປກປະຫລາດໃຈໃນຄຳສອນຂອງພຣະເຢຊູ?

6. ພຣະເຢຊູມີພຣະປະສົງຢາກໃຫ້ພວກເຮົາມີຊີວິດຢ່າງໃດ?

# <u>ພຣະອົງເປັນໃຜ?</u>
# <u>ບົດຮຽນບົດທີ່ 3</u>

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ລູກາ 9:18-27
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ລູກາ 9:18-27
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດຊົງເອີ້ນໃຫ້ເຮົາທັງຫລາຍໄດ້ມາຮັບຊີວິໃຫມ່
<u>ຄຳຖາມເພື່ອການສຳຣວດ:</u> ທ່ານຄິດວ່າພຣະອົງເປັນໃຜ? ພຣະອົງສາມາດປ່ຽນແປງຊີວິດທ່ານແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ຍອມຮັບວ່າພຣະຊົງເປັນພຣະບຸດພຣະເຈົ້າ

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປຍັງທຸກຄົນເທົ່າທີ່ເຮົາມີໂອກາດໂອ້ລົມແລະຫາໂອກາດໂອ້ລົມ.
- ຊ່ອຍເຫລືອເບິ່ງແຍງທຸກຄົນທີ່ຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

ໃນບົດຮຽນທີ່ສາມທີ່ຜ່ານມາເຮົາໄດ້ເວົ້າກັນເຣື່ອງຄວາມສຸກ, ເກືອແລະຄວາມສວ່າງ. ເກືອແລະຄວາມສວ່າງນັ້ນບາງຄັ້ງເຮົາບໍ່ຈຳເປັນຕ້ອງເວົ້າຫຍັງແຕ່ຄົນອື່ນຈະເຫັນເມື່ອການດຳຣົງຊີວິດຂອງເຮົາເປັນໄປຕາມຄຳສັ່ງສອນຂອງພຣະເຢຊູ. ເມື່ອໃດການດຳຣົງຊີວິດເຮົາຫາກເຮັດຕາມຄຳສັ່ງສອນແລ້ວເມື່ອນັ້ນແຫລະເຮົາກໍເປັນເກືອທີ່ມີຣົດເຄັມແລະ ເປັນແສງສວ່າງທີ່ບໍ່ຖືກປົກໄວ້ບໍ່ໃຫ້ມີແສງສວ່າງ. ຫລາຍເທື່ອເຮົາທັງຫລາຍພາກັນປະກາດເຣື່ອງຄວາມສວ່າງແຕ່ຕົວເຮົາບໍ່ໄດ້ເປັນແສງສວ່າງເພາະບາງຄັ້ງເຮົາປະກາດແນວນຶ່ງແລະຊີວິດການເປັນຢູ່ຂອງເຮົາກໍເປັນອີກແນວນຶ່ງ. ດັ່ງນັ້ນຊີວິດການເປັນຄຣິສຕຽນຂອງເຮົາໆບໍ່ຈຳເປັນຕ້ອງບອກຜູ້ອື່ນດອກວ່າເຮົາເປັນຜູ້ເຊື່ອເຂັ້ມແຂງແລະເຄັ່ງຄັດ ເພາະຜູ້ອື່ນມີຫູແລະມີຕາເບິ່ງເຮົາ ແລະເຂົາກໍຈະຮູ້ວ່າເຮົາເປັນໃຜກັນແທ້. ໃນບົດຮຽນບົດນີ້ເຮົາຈະເວົ້າກັນເຖິງພຣະເຢຊູເປັນໃຜ?

## <u>ເຂົາເວົ້າວ່າເຮົາແມ່ນໃຜ?</u> (ລູກາ 9:18-19)

ໃນຂນະທີ່ພຣະເຢຊູຢູ່ກັບພວກສາວົກຕາມລຳພັງໂດຍບໍ່ມີຜູ້ອື່ນຢູ່ນຳພຣະອົງໄດ້ຖາມສາວົກຂອງກ່ຽວກັບພຣະອົງເອງ. ພຣະເຢຊູຈຶ່ງຖາມເຂົາວ່າ "ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?" (ລູກາ 918). ຫລືເວົ້າອີກຄວາມນຶ່ງວ່າຫລັງຈາກປະຊາຊົນເຫັນກິຈການທີ່ພຣະອົງເຮັດແລ້ວປະຊາຊົນເຂົ້າໃຈບໍ່ວ່າພຣະອົງແມ່ນໃຜ? ມາຈາກໃສ? ສາວົກຕອບພຣະອົງວ່າ "**ເຂົາວ່າແມ່ນໂຢຮັນບັບຕິສໂຕ**". ນີ້ເປັນຄວາມເຂົ້າໃຈຂອງບາງກຸ່ມ. ແລະອີກກຸ່ມອື່ນເຂົ້າໃຈວ່າພຣະອົງແມ່ນ "**ເອລີຢາ**" ແຕ່ຄົນອື່ນວ່າແມ່ນ **ຜູ້ປະກາດພຣະທັມແຕ່ສມັຍໂບຮານມາເກີດ.**

1. ໂຢຮັນ ບັບຕິສໂຕ: ເປັນຜູ້ສົ່ງມາຈັດຕຽມທົ່ນທາງແຫ່ງພຣະເຢຊູຄຣິດໃຫ້ຊື່ກົງຕາມຄຳທຳນວາຍຂອງຜູ້ປະກາດພຣະທັມເອຊາຢາ (ເອຊາຢາ 4:3). ໃນພຣະທັມມາລາຄີ 3:1 ໄດ້ກ່າວໄວ້ວ່າ " ເຮົາຈະໃຊ້ຜູ້ແຈ້ງຂ່າວຂອງເຮົາໄປຕຽມທາງໄວ້ສຳລັບເຮົາ". ຜູ້ແຈ້ງຂ່າວຜູ້ນັ້ນມີຊື່ວ່າ ໂຢຮັນບັບຕິສໂຕທີ່ຖືກສົ່ງລົງມາເກີດກ່ອນໜ້າ

ພຣະເຢຊູຄຣິດປະມານຫົກເດືອນເພື່ອຈັດຕຽມທາງຂອງພຣະອົງ. ການຈັດຕຽມທົນທາງຂອງໂຢຮັນແມ່ນປະກາດເຣື່ອງການສະເດັດມາຂອງພຣະເຢຊູຄຣິດເພື່ອຊ່ອຍຄົນຈຳນວນຫລາຍໃຫ້ລອດພົ້ນຈາກບົງໄຟນາຮົກ ຄືໃຫ້ທຸກຄົນກັບໃຈຈາກການຊົ່ວຮ້າຍຕ່າງໆແລ້ວຮັບສີນບັບຕິສະມາດ້ວຍນ້ຳ ຊຶ່ງໝາຍເຖິງການຖິ້ມໃຈເກົ່າເອົາໃຈໃໝ່ ແລະເມື່ອພຣະເຢຊູສະເດັດມາເຂົາຈະໄດ້ຮັບພຣະວິນຍານບໍຣິສຸດ.

2. ເອລີຢາ: ແມ່ນຜູ້ທຳນວາຍຜູ້ຍິ່ງໃຫຍ່ໃນສມັຍຂອງກະສັດອາຮາບ (Ahab) (ປະຫວັດກະສັດທີນຶ່ງ 17). ພຣະເຈົ້າສົ່ງເອລີຢາຜູ້ນຳໄປຊ່ອຍຍິງໝ້າຍແລະລູກນ້ອຍຢາກຈົນຈວນຈະຕາຍຍ້ອນການອຶດຫິວດ້ວຍການແຫ້ງແລ້ງສາມປີເຕັມ. ເພື່ອຄວາມເຂົ້າໃຈເຣື່ອງຣາວຂອງເອລີຢາເພີ້ມເຕີມກະຣຸນນາອ່ານ ປະຫວັດສາດກະສັດທີນຶ່ງ.

3. ຜູ້ປະກາດພຣະທັມແຕ່ສມັຍໂບຮານທີ່ປະຊາຊົນກຳລັງເວົ້າກັນນັ້ນແມ່ນເອລີຢາ ເພາະພວກປະຊາຊົນຮູ້ຈັກປະຫວັດສາດການເປັນມາຂອງເອລີຢາ. ພວກເຂົາຄິດວ່າພຣະເຢຊູແມ່ນເອລີຢາກັບມາເກີດອີກຄັ້ງນຶ່ງ.

## <u>ທ່ານວ່າເຮົາແມ່ນໃຜ?</u> (ລູກາ 9:20)

ທ່ານອາດແປກໃຈເປັນຫຍັງພຣະເຢຊູຈຶ່ງຖາມພວກສາວົກເຊັ່ນນັ້ນ? ຫລືວ່າພຣະອົງບໍ່ຮູ້ວ່າພຣະອົງເປັນໃຜ? ມາແຕ່ໃສບໍ່? ຄວາມຈິງແລ້ວພຣະອົງຊົງຮູ້ດີວ່າພຣະອົງຊົງເປັນພຣະເຈົ້າ, ທີ່ພຣະອົງຊົງຖາມດັ່ງນັ້ນກໍເພາະພຣະອົງຢາກຮູ້ວ່າເຂົາເຂົ້າໃຈພຣະອົງແນວໃດ? ດັ່ງນັ້ນພຣະອົງຈຶ່ງຖາມສາວົກວ່າ " ຝ່າຍພວກທ່ານເດ ວ່າເຮົາແມ່ນໃຜ?" ແລະຄຳຖາມຄຳດຽວກັນນີ້ຫາກຖາມເຮົາໆຈະຕອບພຣະອົງແນວໃດ? ຫາກເຮົາຈະຕອບວ່າພຣະອົງຊົງເປັນພຣະ ເຈົ້າ ເປັນຫຍັງເຮົາຈຶ່ງບໍ່ຟັງຄວາມເພິ່ນຊັ້ນນາ? ຄັນເຮົາຕອບວ່າພຣະອົງບໍ່ແມ່ນພຣະເຈົ້າເຮົາພັດນະມັສການພຣະອົງຢູ່.

1. ເປໂຕ ຫລື ຊີໂມນເປໂຕຕອບພຣະອົງວ່າ " ແມ່ນພຣະຄຣິດມາຈາກພຣະເຈົ້າ " ຄຳວ່າພຣະຄຣິດທີ່ເປໂຕກ່າວນັ້ນແປວ່າ "**ຜູ້ທົດສົງ**" ຊຶ່ງມາຈາກພາສາກຣີກ "**ຄຣິສໂຕ**" ສ່ວນໃນພາສາເຮັບເຣີ ແມ່ນ "ເມຊີອາ". ແລະໃນພາສາຂອງຄົນສມັຍນີ້ແມ່ນ "**ພຣະຄຣິດ**" ຊຶ່ງເປັນນາມມະຍົດຂອງພຣະເຢຊູ ຊຶ່ງແປວ່າ ພຣະຜູ້ຊ່ອຍໃຫ້ພົ້ນ.

2. ເຮົາຈະສັງເກດເຫັນວ່າໃນຣະຫວ່າງປະຊາຊົນແຕ່ລະກຸ່ມຕ່າງຄົນຕ່າງກໍເຂົ້າໃຈວ່າຄວາມເປັນມາຂອງພຣະເຢຊູເປັນມາແຕກຕ່າງກັນ ແລະສາວົກຂອງພຣະອົງກໍເຫັນພຣະເຢຊູເປັນພຣະຄຣິດ. ຖ້າເຊັ່ນນັ້ນສາວົກປະກາດຫລືບອກປະຊາຊົນແລ້ວບໍ່ ວ່າພຣະອົງເປັນພຣະຄຣິດ? ຫລືວ່າພວກເຂົາເຈົ້າຮູ້ແລ້ວແຕ່ບໍ່ໄດ້ບອກໃຫ້ປະຊາຊົນຮູ້?.

3. ຄຳຖາມທີສອງທີ່ພຣະເຢຊູຖາມພວກສາວົກຫລັງຈາກພວກສາວົກຕອບຄຳຖາມແຮກຂອງພຣະອົງເປັນໜ້າສົນໃຈແລະໜ້າຄິດທີ່ສຸດ. ພຣະເຢຊູຖາມສາວົກວ່າ " ຝ່າຍພວກທ່ານເດ ວ່າເຮົາແມ່ນໃຜ?. ການປະກາດໃນເວລານີ້ກໍຮ້າຍໄປກວ່າສມັຍກ່ອນຈົນກະທັ້ງບາງຄົນບໍ່ຮູ້ຈັກພຣະເຢຊູຄຣິດແມ່ນໃຜຊ້ຳ ແຕ່ຫລາຍຄົນຮູ້ຈັກອາຈານຫລາຍກວ່າຮູ້ຈັກພຣະເຢຊູຄຣິດ.

4. ສັງເກດເບິ່ງປະຊາຊົນບໍ່ຮູ້ຈັກພຣະເຢຊູຄຣິດ ບາງທີ່ສາວົກອາຈບໍ່ໄດ້ບອກວ່າພຣະເຢຊູຄຣິດເປັນໃຜ? ມາແຕ່ໃສ? ເຫດສັນນັ້ນໜ້າທີ່ຂອງເຮົາຄືບອກໂລກໃຫ້ຮູ້ວ່າ " ພຣະອົງແມ່ນພຣະຄຣິດ ມາແຕ່ພຣະເຈົ້າແລະພຣະອົງ

ຊົງເປັນພຣະເຈົ້າ"

## ຊົງຫ້າມບໍ່ໃຫ້ບອກຜູ້ອື່ນ (ລູກາ 9:20-22)

ຫລັງຈາກທີ່ພຣະອົງໄດ້ຍິນຄຳຕອບຂອງສາວົກພຣະອົງກໍຊົງຫ້າມເຂົາບໍ່ໃຫ້ບອກຫລືຍັງບໍ່ທັນເຖິງເວລາເປີດເຜີຍແກ່ຜູ້ອື່ນເທື່ອ, ທັງນີ້ກໍເນື່ອງຈາກ ວ່າ "ພວກເຖົ້າແກ່ກັບພວກປະໂລຫິດຄົນໃຫຍ່ແລະພວກນັກທັມຈະບໍ່ຍອມຮັບເພິ່ນເຂົາຈະໄດ້ຂ້າເພິ່ນເສັຽ"(ລູກາ 9: 22).

1. ເຖິງແມ່ນບອກພວກພວກປະໂລຫິດຄົນໃຫຍ່ແລະພວກນັກທັມກໍຍັງບໍ່ທັນເຂົ້າໃຈດອກ, ເພາະພວກເຂົາບໍ່ຍອມຮັບວ່າພຣະເຢຊູເປັນພຣະເຈົ້າ ເໝືອນດັ່ງຄົນເຮົາຫລາຍຄົນໃນເວລານີ້ຍັງບໍ່ທັນເຂົ້າໃຈວ່າພຣະເຢຊູເປັນພຣະເຈົ້າ, ພວກເຂົາເຈົ້າຍັງລໍຖ້າພຣະເມຊີອາທີ່ຜູ້ປະກາດພຣະທັມໄດ້ກ່າວໄວ້ຫລາຍຮ້ອຍປີມາແລ້ວ. ຄວາມຈິງແລ້ວພຣະອົງນັ້ນໄດ້ສເດັດມາເປັນເວລາຍາວນານເຖິງສອງພັນປີແລ້ວໃນພຣະນາມພຣະເຢຊູຄຣິດ. ປຽບເໝືອນລູກຂອງເຮົາເມື່ອເວລາຍັງນ້ອຍເຮົາກໍບໍ່ສາມາດອະທິບາຍຫລືເວົ້າເຣື່ອງໃຫຍ່ສູ່ຟັງໄດ້ ຈົນກວ່າເຂົາເຈົ້າເປັນຜູ້ໃຫຍ່ສາກ່ອນຈຶ່ງສາມາດເຂົ້າໃຈໃນສິ່ງທີ່ພໍ່ແມ່ບອກສອນ.

2. ເຫດຜົນທີສອງທີ່ພຣະເຢຊູຫ້າມບໍ່ໃຫ້ບອກຜູ້ໃດກໍເພາະພຣະອົງຢ້ານວ່າສາວົກແລະພຣະອົງຈະເປັນອັນຕະລາຍກ່ອນກຳໜົດເວລາ. ແລະພຣະອົງກໍອະທິບາຍໃຫ້ສາວົກຟັງໃນເຣື່ອງຈະເກີດຂຶ້ນ "ເຂົາຈະໄດ້ຂ້າເພິ່ນເສັຽແລ້ວວັນ ຖ້ວນສາມເພິ່ນຈະເປັນຄືນມາອີກ" (ລູກາ 9:22). ຄືກ່ອນອື່ນເພິ່ນຈະຖືກຈັບ, ຕໍ່ມາເພິ່ນກໍຈະຖືກຂ້າຕາຍແລະໃນທີ່ສຸດເພິ່ນກໍຈະເປັນຄືນມາ ເມື່ອນັ້ນແຫລະສາວົກຂອງພຣະອົງຈະກ້າອອກປາກວ່າພຣະອົງຊົງເປັນພຣະຄຣິດແລຈະບໍ່ຊົງ ຫ້າມ ແຕ່ໃຫ້ບອກທຸກໆ ຄົນຕໍ່ໆ ໄປ

## ຊົງເອີ້ນໃຫ້ຕິດຕາມພຣະອົງ (ລູກາ 9: 23-27)

ຫລັງຈາກພຣະເຢຊູໄດ້ບອກເຖິງເຫດການທີ່ຈະເກີດຂຶ້ນແລ້ວພຣະອົງກໍກ່າວກັບຄົນທັງຫລາຍວ່າ "ຖ້າຜູ້ໃດຢາກ ຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິຕາມເຮົາມາ" (ລູກາ 9:23). ສາວົກທີ່ຕິດຕາມພຣະອົງມາບໍ່ເຄີຽຮູ້ເລີຽວ່າພຣະອາຈານຂອງຕົນຈະຈົບຊີວິດລົງທີ່ເທິນກາງແຂນ, ວັນນີ້ ພຣະອົງໄດ້ເປີດເຜີຽເຣື່ອງລາວໃຫ້ສາວົກຟັງຢ່າງລະອຽດ.

1. ຊົງບອກວ່າສາວົກວ່າ ພຣະອົງເອງຈະຖືກຈັບໄປຍັງທີ່ຄຸມຂັງ, ພວກທະຫານແລະເຈົ້າໜ້າທີ່ຈະຂົ່ມເຫັງພຣະອົງ, ເຍາະເຍີ້ຍພຣະອົງ ຢ່າງຄົນໄຮ້ກຽດ.

2. ພຣະອົງຊົງບອກເຂົາວ່າເຂົາຈະເອົາພຣະອົງຂຶ້ນສານ ຟ້ອງຮ້ອງແລະປ້າຍຄວາມຜິດໃສ່ພຣະອົງໂດຍບໍ່ມີຄວາມຈິງ, ເຂົາຈະຫາວ່າພຣະອົງເປັນຄົນໝິ່ນປມາດພຣະເຈົ້າແລະປມາດຣາຊບັນລັງຂອງກະສັດຊາດຢິວ.

3. ພຣະອົງຊົງບອກພວກສາວົກວ່າ ເຂົາຈະຄຶງພຣະອົງທີ່ໄມ້ກາງແຂນໃຫ້ຕາຍ, ພວກເຂົາຈະທົວເລາະເຍາະ

ເຍີ້ຍແລະຈີກເສື້ອຜ້າຂອງພຣະອົງມາແບ່ງປັນກັນຊຶ່ງເປັນການເຮັດເຍາະເຍີ້ຽໃຫ້ພຣະອົງອັບອາຍ, ພວກເຂົາຈະທຸບຕີພຣະອົງຈົນສິ້ນຊີວິດ.

4. ແລະພຣະອົງຍັງບອກເຂົາວ່າ ພຣະອົງຈະຕາຍທີ່ໄມ້ກາງແຂນແລະວັນຖ້ວນສາມພຣະອົງຈະເປັນຄືນມາ. ເມື່ອພຣະອົງຊົງສິ້ນສຸດການເລົ່າເຣື່ອງທີ່ຈະເກີດຂຶ້ນແລ້ວພຣະອົງກໍຊົງຖາມເຂົາວ່າ "ຖ້າຜູ້ໃດຢາກຕິດຕາມເຮົາມາ" ພຣະອົງໝາຍຄວາມວ່າສິ່ງທັງໝົດນີ້ຈະເກີດຂຶ້ນແທ້ ທ່ານຍັງຢາກຕິດຕາມເຮົາມາຢູ່ບໍ່?

5. ພຣະເຢຊູຍັງເຕືອນເຂົາອີກວ່າ "ຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ ແຕ່ຜູ້ໃດທີ່ຈະເສັຽຊີວິດຂອງຕົນເພື່ອເຮົາ ຜູ້ນັ້ນກໍຈະມີຊີວິດພົ້ນ" (ລູກາ 9:24) ອາດເປັນເພາະຫລາຍຄົນຢ້ານໃນການຕິດຕາມພຣະອົງເພາະພຣະອົງບອກເຂົາວ່າພຣະອົງຈະຖືກຈັບຂັງຄຸກແລະຈະຖືກຂ້າໃຫ້ຕາຍ. ດັ່ງນັ້ນພຣະອົງຈຶ່ງບອກເຂົາວ່າຜູ້ຮັກສາຊີວິດດຽວນີ້ຈະເສັຽຊີວິດໃນພາຍໜ້າຄືຊີວິດນິຣັນໃນຟ້າສວັນ. ຫລືເວົ້າໄດ້ວ່າຫາກຜູ້ໃດບໍ່ຍອມຖິ້ມຊີວິດເກົ່າຈະບໍ່ໄດ້ຊີວິກໃໝ່.

ໃນວັນເສົາວັນນຶ່ງເປັນວັນທີ່ຂ້າພະເຈົ້າອອກຢ້ຽມຢາມບ້ານສະມາຊິກ, ໃນຂະນະທີ່ຢ້ຽມຢາມນັ້ນເຈົ້າຂອງບ້ານກໍເອີ່ຽປາກເປັນເທື່ອທີສອງທີ່ຂ້າພະເຈົ້າໄດ້ຍິນ. ລາວເວົ້າວ່າ "ຢາກໄດ້ໂຊຟາໃໝ່ ແຕ່ຄັນຊີຊື້ໃໝ່ກະຄືຍັງພໍໃຊ້ໄດ້ຢູ່" ເນື່ອງຈາກວ່າເພິ່ນໄດ້ເວົ້າດັ່ງນີ້ເປັນເທື່ອທີສອງ ຂ້າພະເຈົ້າຈຶ່ງຕອບເພິ່ນວ່າ "ລຸງເອີຽ! ຫາກລຸງບໍ່ເອົາໂຊຟາເກົ່ານີ້ຖິ້ມເສັຽຈ້າງ... ລຸງກະບໍ່ໄດ້ອັນໃໝ່ດອກ, ຄືຊີວິດເຮົານີ້ແລ້ວ, ຫາກບໍ່ຍອມຖິ້ມຊີວິດເກົ່າເຮົາກໍຈະບໍ່ໄດ້ຊີວິດ ໃໝ່ໃນພຣະເຢຊູຄຣິດເລີຽ". ການເປັນຄຣິສຕຽນກໍເປັນດັ່ງນີ້ແລ້ວ ຫາກເຮົາບໍ່ຍອມຖິ້ມຊີວິດເກົ່າເຮົາກໍຈະບໍ່ໄດ້ຊີວິດໃໝ່ເດັດຂາດ.

<u>ຄຳຖາມ</u>

1. ປະຊາຊົນເຂົ້າໃຈວ່າພຣະເຢຊູເປັນໃຜແດ່? ເປັນຫຍັງປະຊາຊົນຈຶ່ງເຂົ້າໃຈແນວນັ້ນ?

2. ພວກສາວົກເຂົ້າໃຈວ່າພຣະອົງເປັນໃຜ? ແລະທ່ານເດເຂົ້າໃຈວ່າພຣະອົງເປັນໃຜ?

3. ເປັນຫຍັງພຣະອົງຈຶ່ງຫ້າມພວກສາວົກບໍ່ໃຫ້ເວົ້າສິ່ງທີ່ເຂົາຮູ້ໃຫ້ຜູ້ອື່ນຟັງ? ທ່ານເດ ເຄີຽເລົ່າເຣື່ອງພຣະເຢຊູໃຫ້ໃຜຟັງແດ່ບໍ່?

4. ດ້ວຍເຫດໃດພຣະອົງຈຶ່ງເລົ່າເຣື່ອງທີ່ຈະເກີດຂຶ້ນກັບພຣະອົງໃຫ້ສາວົກຟັງ?

5. ຖ້າຜູ້ໃດຢາກຕິດເຮົາມາ ທີ່ພຣະເຢຊົງກ່າວ ທ່ານເຂົ້າໃຈແນວໃດ? ເປັນຫຍັງຈຶ່ງຢາກຕິດຕາມພຣະອົງ?

6. ຄຳວ່າຜູ້ຮັກສາຊີວິດແຈະເສັຽຊີວິດ ແລະຜູ້ຍອມເສັຽຊີວິດຈະໄດ້ຊີວິດ ທ່ານເຂົ້າໃຈແນວໃດ?

## <u>ເຊື່ອຄັກແລ້ວບໍ່</u>
## <u>ບົດຮຽນບົດທີ່ 4</u>

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຢຮັນ 20:11-18,26-31
<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u> ໂຢຮັນ ບົດ20
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າການອັສຈັນທີ່ພຣະອົງຊົງເຮັດພິສູດໃຫ້ເຮົາຮູ້ວ່າພຣະອົງເປັນພຣະເຈົ້າ.
<u>ຄໍາຖາມເພື່ອການສໍາຣວດ:</u> ທ່ານຄິດວ່າແມ່ນຫຍັງພາໃຫ້ຄົນຜູ້ນຶ່ງເຊື່ອໃນພຣະເຢຊູຄຣິດແລະເຊື່ອຢ່າງຈິງໃຈ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຊ່ອຍໃຫ້ເຮົາທັງຫລາຍມີຄວາມແນ່ໃຈໃນຄວາມເຊື່ອຂອງເຮົາ ເມື່ອເຮົາເຫັນການອັສຈັນທີ່ພຣະອົງຊົງເຮັດ.

<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ</u>

- ຊ່ອຍເຫລືອເບິ່ງແຍງທຸກຄົນທີ່ຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການຕິດຕໍ່ຄົນທັງປວງ.

ຫລັງຈາກພຣະເຢຊູຖືກຂ້າຕາຍທີ່ໄມ້ກາງແຂນໃນແລງຂອງວັນສຸກຕອນບ່າຍແລ້ວເຂົາກໍເອົາພຣະສົບຂອງພຣະອົງໄປໄວ້ໃນອຸບໂມງທີ່ປິດດ້ວຍແຜ່ນຫີນໃຫຍ່, ສ່ວນທາງການກໍສົ່ງທະຫານໄປຍາມປ້ອງກັນຖໍ້າຢ່າງຫນາແໜ້ນ. ພວກສາວົກຂອງພຣະອົງກໍເຕົ້າໂຮມກັນໃນຫ້ອງນ້ອຍດ້ວຍຄວາມຢ້ານກົວແລະບໍ່ຮູ້ຈະເຮັດແນວໃດດີ. ມີແຕ່ກຸ່ມຜູ້ຍິງໄດ້ໄປຍັງອຸບໂມງທີ່ເຂົາເອົາພຣະສົບຂອງພຣະອົງໄວ້ກໍປາກົດວ່າຫີນແຜ່ນໃຫຍ່ທີ່ອັດປາກອຸບໂມງນັ້ນໄດ້ຍ້າຍຈາກປາກອຸບໂມງ ເມື່ອເປັນເຊັ່ນນັ້ນນາງມາຣີອາຈຶ່ງຟ້າວແລ່ນໄປບອກຊີໂມນເປໂຕດ້ວຍຄວາມຕົກໃຈແລະເສັຽໃຈຢ່າງໜັກ.

### <u>ເຫັນກັບຕາຈຶ່ງເຊື່ອ</u> (ໂຢຮັນ 20:11-28)

ພວກຜູ້ຍິງເປັນກຸ່ມສຸດທ້າຍທີ່ຢູ່ແລະຕິດຕາມພຣະເຢຊູທີ່ເທິງກາງແຂນຈົນເຂົາເອົາພຣະສົບຂອງພຣະອົງໄປໄວ້ທີ່ອຸບໂມງໃນເວລາໃກ້ຈະຄໍ່າມືດ, ແລະພວກຜູ້ຍິງກຸ່ມດຽວກັນນີ້ໄດ້ອອກໄປຍັງອຸບໂມງແຕ່ເຊົ້າມືດຂອງວັນອາທິດ (ໂຢຮັນ 20:1-2). ນາງມາຣີອາ ໄທເມືອງມັກດາລາເປັນຜູ້ທີ່ຮັກພຣະເຢຊູຫລາຍພໍທີ່ຈະເຝົ້າຢູ່ກັບພຣະສົບຂອງພຣະອົງຈົນຄໍ່າມືດ ແລະຍັງຕື່ນແຕ່ເຊົ້າມືດຂອງວັນໃຫມ່ເພື່ອເອົານໍ້າຫອມໄປທາສົງພຣະສົບຂອງພຣະອົງ. ເມື່ອໄປເຖິງອຸບໂມງພວກຜູ້ຍິງເຫັນປາກອຸບໂມງເປີດຢູ່ຈຶ່ງເຂົ້າໄປຂ້າງໃນກໍບໍ່ເຫັນພຣະສົບຂອງພຣະເຢຊູ. ນາງມາຣີອາຈຶ່ງຟ້າວແລ່ນໄປບອກເປໂຕແລະສາວົກອື່ນ ເມື່ອສາວົກໄດ້ຍິນດັ່ງນັ້ນຈຶ່ງພາກັນແລ່ນໄປຍັງອຸບໂມງ. ທີ່ອຸບໂມງພວກເຂົາບໍ່ເຫັນພຣະສົບຂອງພຣະເຢຊູ. "ສ່ວນຊີໂມນເປໂຕທີ່ຕາມຫລັງມານັ້ນກໍຮອດເຫມືອນກັນ ແລ້ວເຂົ້າໄປໃນອຸບໂມງ ແລະໄດ້ເຫັນຜ້າປ່ານກອງຢູ່. ແລະຜ້າປົກພຣະສຽນຂອງພຣະອົງ (ຜ້າປົກຫົວ)ບໍ່ໄດ້ກອງຢູ່ກັບຜ້າອື່ນ ແຕ່ພັບໄວ້ຕ່າງຫາກ ແລ້ວສາວົກຜູ້ອື່ນທີ່ມາເຖິງກ່ອນນັ້ນ ກໍໄດ້ເຂົ້າໄປເຫມືອນກັນ **ກໍ<u>ເຫັນແລະໄດ້ເຊື່ອ</u>**" (ໂຢຮັນ 20:6-8)

ດ້ວຍຄວາມຮັກອັນໃຫຍ່ຫລວງຂອງນາງມາຣີອາ ຕໍ່ອົງພຣະເຢຊູ ນາງໄດ້ຮ້ອງໄຫ້ຊອກຫາພຣະສົບຂອງພຣະເຢຊູຢູ່ທຸກມຸມໃນອຸບໂມງ. ການຊອກສແວງຫາຂອງນາງກໍພົບຄວາມສຳເຣັດ ຄືນາງພົບກັບເທວະດາສອງຕົນຖາມນາງວ່າ "ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ?" (ໂຢຮັນ 20:12ຂ). ອີງຕາມຂໍ້ 9 ແລ້ວພວກສາວົກແລະນາງມາຣີອາ ບໍ່ເຂົ້າໃຈເຣື່ອງການເປັນຄືນມາຈາກຕາຍ ດັ່ງນັ້ນພວກສາວົກແລະນາງມາຣີອາຈຶ່ງຫວັງຈະເຫັນພຽງພຣະສົບຂອງພຣະເຢຊູເທົ່ານັ້ນ. ໃນເມື່ອພວກເຂົາບໍ່ເຫັນພຣະສົບຂອງພຣະອົງເຂົາຈຶ່ງມີຄວາມໂສກເສົ້າເສັຽໃຈ ແລະຄິດວ່າມີຄົນເອົາພຣະສົບຂອງພຣະເຢຊູໄປທີ່ອື່ນແລ້ວ (ໂຢຮັນ 20:13).

ຢ່າງໃດກໍດີເຮົາໄດ້ເຫັນຄວາມຮັກອັນແທ້ຈິງຂອງນາງມາຣີອາ, <u>1</u>. ນາງໄດ້ເຝົ້າຢູ່ກັບພຣະສົບຂອງພຣະເຢຊູທີ່ກາງແຂນຈົນຄ່ຳມືດໃນແລງວັນສຸກວັນທີ່ເຂົາປະຫານພຣະອົງ. <u>2</u>. ນາງຍັງໄດ້ຖືນ້ຳຫອມໄປຍັງອຸບໂມງແຕ່ເຊົ້າມືດຂອງວັນອາທິດຫມາຍໃຈວ່າຈະໄປທາດສົງພຣະສົບ. <u>3</u>. ນາງໄດ້ສ່ຽງອັນຕະລາຍຢ້ານທາງການຈະຫາເຣື່ອງວ່າເປັນພັກພວກຂອງພຣະເຢຊູ. <u>4.</u> ນາງຈະເອົາແຮງມາແຕ່ໃສເພື່ອຈະກິ້ງຫີນໃຫຍ່ທີ່ປິດປາກອຸບໂມງນັ້ນ.

ໃນຂະນະທີ່ນາງກຳລັງສົນທະນາກັບເທວະດາຢູ່ນັ້ນ ພຣະເຢຊູກໍຊົງປາກົດຕົວຢູ່ດ້ານຫລັງຂອງນາງ ແລະຊົງກ່າວວ່າ "ເຈົ້າຮ້ອງໄຫ້ເຮັດຫຍັງ ເຈົ້າຊອກຫາຜູ້ໃດ" (ໂຢຮັນ 20:15ກ). ສ່ວນນາງມາຣີອາເບິ່ງບໍ່ຄັກປານໃດຈຶ່ງຄິດວ່າເປັນຄົນເຝົ້າສວນຈຶ່ງຕອບວ່າ "ນາຍເອີຍ, ຖ້າແມ່ນທ່ານໄດ້ເອົາສົບເພິ່ນໄປຂໍບອກຂ້ານ້ອຍວ່າທ່ານໄດ້ເອົາໄປວາງໄວ້ທີ່ໃດ ແລະຂ້ານ້ອຍຈະໄປຍົກເອົາເສັຽ" (ໂຢຮັນ 20:15ຂ). ມາຣີອາເປັນຜູ້ຍິງຕົວນ້ອຍໆຂັນອາສາສມັກໄປຍົກສົບພຣະເຢຊູມາໄວ້ທີ່ເດີມເພາະຄວາມຮັກອັນແຮງກ້າຂອງນາງ. ພຣະເຢຊູພໍໃຈໃນຄວາມຮັກຂອງນາງຈຶ່ງກ່າວກັບນາງວ່າ "ມາຣີອາເອີຍ" ມາຣີອາກໍຕ່າວຫນ້າມາທູນພຣະອົງເປັນພາສາເຮັບເຣີວ່າ, "ຣັບໂບນີ" ທີ່ແປວ່າ "ພຣະອາຈານເອີຍ" (ໂຢຮັນ 20: 16). ຂ້າພະເຈົ້າວາດພາບເຫັນວ່ານາງມາຣີອາຄົງຈະຮ້ອງເຕັມສຽງວ່າ ພຣະອາຈານ....

ພຣະເຢຊູຊົງກ່າວກັບນາງວ່າ "ຢ່າຊູ່ຫນ່ວງດຶງເຮົາ ເພາະເຮົາຍັງບໍ່ໄດ້ຂຶ້ນເມືອຫາພຣະບິດາຂອງເຮົາແຕ່ເຈົ້າຈົ່ງໄປຫາພວກພີ່ນ້ອງຂອງເຮົາແລະບອກເຂົາວ່າ ເຮົາຈະຂຶ້ນເມືອຫາພຣະບິດາຂອງເຮົາ ແລະພຣະບິດາຂອງພວກທ່ານ" ນາງມາຣີອາມັກດາລາຈຶ່ງໄປບອກຂ່າວນີ້ກັບພວກສາວົກວ່າ "ຂ້ານ້ອຍໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວ" (ໂຢຮັນ 20:17-18). ເພາະນາງໄດ້ເຫັນພຣະເຢຊູຄືນມາຈາກຕາຍດ້ວຍຕາຂອງນາງເອງດັ່ງນັ້ນນາງຈຶ່ງເຊື່ອ.

ໃນຄືນນັ້ນເອງເປັນຄືນຂອງວັນອາທິດພຣະເຢຊູໄດ້ສແດງການອັສຈັນໃຫ້ພວກສາວົກເຫັນດັ່ງນີ້: "ເມື່ອສາວົກອັດປະຕູຫ້ອງທີ່ເຂົາຢູ່ນັ້ນເພາະຢ້ານພວກຢິວ ພຣະເຢຊູໄດ້ສະເດັດເຂົ້າມາຊົງຢືນຢູ່ຖ້າມກາງເຂົາ ແລະຊົງກ່າວວ່າ "ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ" ((ໂຢຮັນ 20:19). ນີ້ເປັນການອັສຈັນທີ່ພຣະອົງຊົງສຳແດງແກ່ສາວົກໃນຂນະທີ່ເຂົາອັດປະຕູຢູ່ເພາະຄວາມຢ້ານພວກຢິວຈະມາຈັບໄປຂັງຄຸກ. ພວກສາວົກໃຊ້ເວລາຫລາຍວັນໃນຫ້ອງນັ້ນປຶກສາຫາລືກັນຢູ່. "ຄັນລ່ວງໄປໄດ້ແປດວັນແລ້ວພວກສາວົກຂອງພຣະອົງກໍຢູ່ພ້ອມກັນທີ່ເຮືອນນັ້ນອີກແລະໂທມາກໍຢູ່ກັບເຂົາ ສ່ວນປະຕູກໍອັດໄວ້ ແຕ່ພຣະເຢຊູກໍໄດ້ສະເດັດເຂົ້າຢືນຢູ່ຖ້າມກາງເຂົາ ແລ້ວຊົງກ່າວວ່າ "ສັນຕິສຸກຈົ່ງຢູ່ກັບທ່ານທັງຫລາຍ". (ໂຢຮັນ 20:26).

## <u>ດັ່ງນັ້ນຢ່າສົງສັຍ</u> (ໂຢຮັນ 20:26-29)

ຄົນສ່ວນຫລາຍຈະເຫັນໂທມາເປັນຄົນຂາດຄວາມເຊື່ອເພາະເພິ່ນສົງສັຍວ່າແມ່ນພຣະເຢຊູຄຣິດຄືນມາຈາກຕາຍແທ້ບໍ່? ດັ່ງນັ້ນຫລາຍຄົນຈຶ່ງເບິ່ງໂທມາເປັນສາວົກບໍ່ດີ. ຂ້າພະເຈົ້າຢາກຊັກຊວນທ່ານເບິ່ງໂທມາໃນແງ່ດີ.

1. ເຮົາຈະສັງເກດເຫັນວ່າໃນວັນນຶ່ງທີ່ພຣະເຢຊູຊົງເອີ້ນຮາຊະໂຣໃຫ້ຄືນມາຈາກຕາຍນັ້ນໂທມາເປັນຄົນສລາດມັກຈະ ພິສູດຕົວຈິງດັ່ງນັ້ນ "ໂທມາເອີ້ນວ່າແຝດ ໄດ້ເວົ້າກັບເພື່ອນສາວົກວ່າ, "ພວກເຮົາພາກັນໄປເຫມືອນກັນເພື່ອຈະໄດ້ເຫັນດ້ວຍກັນກັບພຣະອົງ" (ໂຢຮັນ 11:16).

2. ໃນຂນະທີ່ພຣະເຢຊູກຳລັງບອກສາວົກວ່າ "ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານແລ້ວ ເຮົາຈະກັບມາຮັບທ່ານໄປຢູ່ກັບເຮົາ"(ໂຢຮັນ14:3ກ). ແມ່ນໂທມາຜູ້ນີ້ໄດ້ຖາມພຣະອົງວ່າ "ນາຍເອີຍ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານຈະໄປໃສ ພວກຂ້ານ້ອຍຈະຮູ້ຈັກທາງນັ້ນດ້ວຍຢ່າງໃດ? ((ໂຢຮັນ 14:5). ເຮົາລອງມາຄິດເບິ່ງຫາກໂທມາບໍ່ຖາມພຣະເຢຊູ ພຣະອົງກໍຈະບໍ່ກ່າວວ່າ "ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14: 6). ຄຳເວົ້າຄຳນີ້ເຮົາຈະບໍ່ເຫັນໃນພຣະຄັມພີຕອນອື່ນເລີຍ.

3. ໃນຕອນສຸດທ້າຍກໍແມ່ນໂທມາຜູ້ດຽວກັນນີ້ໄດ້ພິສູດຮ່າງກາຍຂອງພຣະເຢຊູເມື່ອພຣະອົງຊົງເປັນມາຈາກຕາຍເນື່ອງຈາກການພິສູດຂອງໂທມານີ້ເອງ ສາວົກທຸກຄົນຮວມທັງຄຣິສຕຽນທົ່ວໄປໄດ້ເຊື່ອວ່າແມ່ນຮ່າງກາຍຂອງພຣະເຢຊູແທ້ງ. "ຈົ່ງເດ່ນິ້ວມືຂອງທ່ານມາລູບເບິ່ງຝ່າມືຂອງເຮົາ ຈົ່ງເດ່ມືຂອງທ່ານໃສ່ຂ້າງຂອງເຮົາຢ່າຂາດຄວາເຊື່ອ ແຕ່ຈົ່ງເຊື່ອ" ໂທມາທູນຕອບພຣະອົງວ່າ "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະພຣະເຈົ້າຂອງຂ້າພຣະອົງ". ພຣະເຢຊູຊົງກ່າວກັບໂທມາວ່າ "ເພາະໄດ້ເຫັນເຮົາທ່ານຈຶ່ງເຊື່ອຫລື ຜູ້ທີ່ບໍ່ເຫັນເຮົາແຕ່ເຊື່ອກໍເປັນສຸກ" (ໂຢຮັນ 20:27-29).

## <u>ຈົ່ງໄວ້ວາງໃຈໃນພຣະເຢຊູ</u> (ໂຢຮັນ 20:30-31)

ດັ່ງນັ້ນຫາກໃຜຜູ້ນຶ່ງຢາກພິສູດວ່າແມ່ນພຣະເຢຊູຄືນມາຈາກຕາຍແທ້ບໍ່ ທ່ານບໍ່ຈຳເປັນຕ້ອງພິສູດດອກເພາະໂທມາໄດ້ພິສູດຕາງເຮົາທັງຫລາຍແລ້ວ ແລະໂທມາເປັນຜູ້ດຽວທີ່ໄດ້ຮັບຄວາມຕ້ອງຕິຈາກຄຣິສຕຽນທັງຫລາຍ ວ່າເປັນຄົນຂາດຄວາມເຊື່ອ. ໂທມາເປັນຄົນມີລັກສະນະພິເສດ ເຊັ່ນໄດ້ຍິນກັບຫູ, ດູດ້ວຍຕາ ແລະຈັບບາຍດ້ວຍມືຈຶ່ງເຊື່ອ. ອີງຕາມຄຳສາຣະພາບຂອງໂທມາຂ້າງເທິງນັ້ນເພິ່ນໄດ້ເຊື່ອຄັກແລ້ວເພາະເພິ່ນເຫັນ, ໄດ້ຍິນ ແລະໄດ້ຈັບບາຍ ສຳລັບທ່ານແລະຂ້າພະເຈົ້າພຣະເຢຊູຊົງກ່າວໃນຕອນທ້າຍວ່າ "ຜູ້ທີ່ບໍ່ເຫັນເຮົາແຕ່ເຊື່ອກໍເປັນສຸກ" (ໂຢຮັນ 20:29ຂ).

ໃນພຣະທັມໂຢຮັນ 20:30-31 ເປັນຫລັກຖານຢັ້ງຢືນການເປັນຄືນມາຈາກຕາຍຂອງພຣະເຢຊູຄຣິດນັ້ນມີຄວາມຈິງໂດຍການພິສູດຂອງໂທມາ ແລະສາວົກທັງຫລາຍທີ່ຮູ້ເຫັນເຫດການທັງປວງນີ້ ຊຶ່ງຂໍ້ຄວາມສຳຄັນໄດ້ກ່າວດັ່ງນີ້: "ແຕ່ທີ່ໄດ້ຈັດເຫດການເລົ່ານີ້ໄວ້ ກໍເພື່ອທ່ານທັງຫລາຍຈະໄດ້ເຊື່ອວ່າ ພຣະເຢຊູຊົງເປັນພຣະຄຣິດ (ພຣະຜູ້ຊ່ອຍໃຫ້ລອດ) ພຣະບຸດຂອງພຣະເຈົ້າ ແລະເມື່ອມີຄວາມເຊື່ອແລ້ວທ່ານກໍຈະມີຊີວິດໂດຍພຣະນາມຂອງພຣະອົງ" (ໂຢຮັນ 20:31). ດ້ວຍເຫດນີ້ຜູ້ທີ່ເຊື່ອຄືພວກເຮົາທຸກຄົນຈະມີຊີວິດຢູ່ໂດຍພຣະນາມແຫ່ງພຣະເຢຊູຄຣິດ ບໍ່ແມ່ນຢູ່ເພື່ອຕົນເອງ.

ຄຳຖາມ:

1. ພຣະເຢຊູຕາຍທີ່ເທິງໄມ້ກາງແຂນໃນວັນຫຍັງ? ແລະພຣະອົງຟື້ນມາຈາກຕາຍວັນຫຍັງ?

2. ພຣະເຢຊູໄດ້ຟື້ນຄືນມາຈາກຕາຍໃນວັນຖ້ວນສາມ ແລະສາມວັນມີຄວາມແຕກຕ່າງກັນແນວໃດ?

3. ນາງມາຣີອາເປັນຫຍັງຈຶ່ງໄປຍັງອຸບໂມງຝັງສົບແຕ່ເຊົ້າແທ້? ນາງເອົາຫຍັງໄປນຳແດ່?

4. ເມື່ອນາງບໍ່ພົບພຣະສົບຂອງພຣະເຢຊູແລ້ວນາງເຮັດແນວໃດ? ເປັນຫຍັງນາງຈຶ່ງຮ້ອງໄຫ້?

5. ເທວະດາສອງຕົນນັ້ນບອກຫຍັງກັບນາງ? ແລະແມ່ນໃຜປາກົດຕົວດ້ານຫລັງຂອງນາງ?

6. ເມື່ອນາງຮູ້ວ່າແມ່ນພຣະເຢຊູແລ້ວ ນາງຮ້ອງຂຶ້ນວ່າແນວໃດ? ດ້ວຍອາການແນວໃດ? ດ້ວຍເຫດໃດນາງຈຶ່ງເຊື່ອ?

7. ໂທມາໄດ້ພິສູດການຄືນມາຈາກຕາຍຂອງພຣະເຢຊູແນວໃດ?

8. ການພິສູດຂອງໂທມາໄດ້ຊ່ອຍເຮົາຫຍັງແດ່?

9. ໃນຕອນສຸດທ້າຍຂອງບົດຮຽນນີ້ໄດ້ຊັກຊວນເຮົາເຮັດອັນໃດ? ທ່ານພ້ອມທີ່ຈະເຮັດບໍ່?

# ບົດຮຽນທີ 5
# ມີສ່ວນໃນການຮັບໃຊ້ຂອງພຣະຄຣິດ

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ກິຈການ 1:1-9; 2:43-47
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ກິຈການ 1--2
ຈຸດສໍາຄັນຂອງບົດຮຽນນີ້: ເພາະພຣະວິນຍານບໍຣິສຸດຊົງປະທານຣິດອໍານາດໃຫ້ພວກເຮົາໃນການເປັນພະຍານໃຫ້ກັບພຣະຄຣິດທາງຄວາມເວົ້າແລະການກະທໍາ, ພວກເຮົາກໍມີສ່ວນໃນການຮັບໃຊ້ຂອງພຣະອົງຕໍ່ໄປ.

ຄໍາຖາມເພື່ອການສໍາຣວດ: ການຮັບໃຊ້ຂອງພຣະເຢຊູຈະດໍາເນີນຕໍ່ໄປໃນທຸກວັນນີ້ດ້ວຍວິທີໃດແດ່?
ຈຸດປະສົງຂອງບົດຮຽນນີ້: ຕັດສິນໃຈທີ່ຈະໃຫ້ຣິດອໍານາດຂອງພຣະວິນຍານນໍາພາເຣື່ອງການເປັນພະຍານໃຫ້ກັບພຣະເຢຊູໃນດ້ານການເວົ້າແລະການກະທໍາຂອງຂ້ອຍ.

| ເຣື່ອງທີ່ກໍາລັງເນັ້ນໜັກໃນເທັກຊັສ: |
|---|
| • ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ |
| • ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ |
| • ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ |
| • ເສີມສ້າງຄອບຄົວຄຣິສຕຽນ |
| • ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂື້ນ |

## ຄໍານໍາ

ຄຣິສຕຽນສ່ວນຫລາຍພາກັນໃຊ້ຊີວິດແຕ່ລະວັນເໝືອນວ່າພຣະເຢຊູຍັງຕາຍຢູ່ໃນຫລຸມຝັງສົບ. ແຕ່ພຣະອົງໄດ້ຄືນມາຈາກຄວາມຕາຍແລ້ວ; ພຣະອົງໄດ້ພົບກັບພວກອັຄສາວົກ ແລະໄດ້ສັ່ງພວກເຂົາໃຫ້ທໍາງານທີ່ພຣະອົງໄດ້ເລີ້ມໄວ້ແລ້ວນັ້ນຕໍ່ໄປ. ຖ້າພວກເຮົາຈົດຈໍາສິ່ງເຫລົ່ານີ້ໄວ້ໃນໃຈ, ພວກເຮົາຈະສາມາດເວົ້າເຕັມປາກໄດ້ວ່າ, "ນີ້ຄືຂ່າວດີກວ່າທຸກຢ່າງທີ່ຂ້ອຍເຄີຍໄດ້ຍິນມາ."

## ກ. ໃຫ້ພະລັງໃນການທໍາງານຕໍ່ໄປ (ກິຈການ 1:1-11)

ໃນພຣະທັມລູກາ, ຜູ້ຂຽນໄດ້ເລົ່າເຣື່ອງທຸກຢ່າງທີ່ພຣະເຢຊູໄດ້ຊົງເຮັດ ແລະໄດ້ຊົງສອນໃນຕອນທີ່ພຣະອົງຍັງຢູ່ໃນໂລກນີ້. ມາເຖິງຕອນນີ້, ທ່ານລູກາ ຊຶ່ງເປັນຜູ້ຂຽນພຣະທັມລູກາ ແລະພຣະທັມກິຈການ ຈະເວົ້າເຖິງເຣື່ອງຕ່າງໆທີ່ພຣະເຢຊູຈະເຮັດ ແລະສອນຕໍ່ໄປຜ່ານຄຣິສຕະຈັກຂອງພຣະອົງທີ່ມີຢູ່ໃນໂລກ.

ຄຣິສຕຽນທຸກໆຄົນສົມຄວນຈະຍ່າງກ້າວຈາກພຣະທັມລູກາ ໄປສູ່ພຣະທັມກິຈການ. ການຮຽນຮູ້ເຖິງເຣື່ອງການກໍາເນີດ, ການໃຊ້ຊີວິດ, ການຕາຍ, ແລະການຄືນພຣະຊົນຈາກຄວາມຕາຍນັ້ນອາດຈະພຽງພໍສໍາລັບຄວາມລອດພົ້ນ ແຕ່ຈະບໍ່ພຽງພໍສໍາລັບການຮັບໃຊ້ທີ່ເຕັມດ້ວຍຣິດອໍານາດໂດຍພຣະວິນຍານ. ພວກເຮົາທັງຫລາຍຮູ້ຈັກພຣະອົງ

ວ່າເປັນພຣະເຈົ້າຂອງພວກເຮົາ, ບັດນີ້ພວກເຮົາຄວນຈະໃຫ້ພຣະອົງທຳງານຜ່ານພວກເຮົາ. ຄຣິສຕະຈັກຄືພຣະກາຍຂອງພຣະຄຣິດ. ພຣະອົງຈະສະແດງຊີວິດແລະຣິດອຳນາດຜ່ານຄຣິສຕະຈັກ. ພຣະເຢຊູຄຣິດໄດ້ຍອມຕາຍເພື່ອໂລກທີ່ກຳລັງຫລົງທາງ, ສະນັ້ນພວກເຮົາຈະຕ້ອງໃຊ້ຊີວິດເພື່ອນຳຄົນທີ່ຫລົງຫາຍນັ້ນມາຫາພຣະອົງ.

ຫລັງຈາກການຄືນມາຈາກຄວາມຕາຍ, ພຣະເຢຊູໄດ້ໃຊ້ຊີວິດຢູ່ກັບພວກອັຄສາວົກເປັນເວລາເຖິງ 40 ວັນ. ພຣະອົງຊົງສັ່ງພວກເຂົາໃຫ້ຢູ່ກຸງເຢຣູຊາເລັມເພື່ອຄອຍການສະເດັດມາຂອງພຣະວິນຍານບໍຣິສຸດ. ການລໍຄອຍມີຄວາມ ສຳຄັນສຳລັບພວກເຮົາທຸກຄົນທີ່ເປັນສາວົກຂອງພຣະເຢຊູຄຣິດ. ການລໍຄອຍຊ່ວຍພວກເຮົາໃຫ້ມີການພິຈາຣະນາເຖິງ ຜົນໄດ້ຜົນເສັຽກ່ອນທີ່ເຮົາຈະຕັດສິນໃຈຢ່າງໃດຢ່າງນຶ່ງລົງໄປ. ພຣະເຢຊູສັ່ງພວກອັຄສາວົກໃຫ້ເລີ້ມການຮັບໃຊ້ທີ່ກຸງ ເຢຣູຊາເລັມ. ການສະເດັດມາຂອງພຣະວິນຍານບໍຣິສຸດຈະເຮັດໃຫ້ຄຣິສຕຽນໄດ້ເປັນອັນນຶ່ງອັນດຽວກັນຄືເປັນຄຣິສຕະ ຈັກຂອງພຣະຄຣິດ (1 ກຣທ 12:13). ພຣະວິນຍານຈະໃຫ້ຣິດອຳນາດກັບຜູ້ເຊື່ອໃນການເປັນພະຍານແລະໃນການ ເຮັດສິ່ງອັດສະຈັນຕ່າງໆ.

ພວກອັຄສາວົກຖາມພຣະເຢຊູວ່າ, "ພຣະອົງຈະຕັ້ງຣາຊອານາຈັກຄືນໃໝ່ໃຫ້ແກ່ພວກອິສຣາເອັນ" ໃນຕອນນີ້ບໍ່? ພວກເຂົາເຈົ້າຖາມເຊັ່ນນັ້ນກໍເພາະພຣະເຢຊູໄດ້ສັນຍາໃນ ມັດທາຍ 22:1-10 ວ່າພຣະອົງຈະໃຫ້ໂອກາດຊົນຊາດອິສຣາເອັນ ອີກຄັ້ງນຶ່ງເພື່ອຮັບເອົາພຣະອົງແລະຣາຊອານາຈັກຂອງພຣະເຈົ້າ. ນອກນັ້ນພຣະເຢຊູຍັງໄດ້ບອກຢູ່ໃນມັດທາຍ 19:28 ວ່າຈະໃຫ້ພວກອັຄສາວົກນັ່ງເທິງບັນລັງສິບສອງບ່ອນ (ເບິ່ງພຣະທັມລູກາ 22:28-30). ເຖິງວ່າພຣະເຢຊູຄຣິດຈະໄດ້ສອນພວກອັຄສາວົກເຣື່ອງຣາຊອານາຈັກຂອງພຣະເຈົ້າເປັນເວລາສາມປີ, ແຕ່ພວກເຂົາຍັງຄິດວ່າ ຣາຊອານາຈັກນັ້ນຈະເປັນອຳນາດການປົກຄອງໃນໂລກນີ້.

ພຣະເຢຊູພຍາຍາມປ່ຽນເຣື່ອງການສົນທະນາໂດຍບອກພວກອັຄສາວົກວ່າ "ເວລາຫລືຍາມກຳນົດ" ເປັນສິດຂອງພຣະບິດາທີ່ຈະຕັດສິນເອງ. ພຣະອົງຊົງບອກພວກເຂົາວ່າ "ທ່ານທັງຫລາຍຈະໄດ້ຮັບຣິດເດດເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ" (1:8). ພຣະເຈົ້າປະທານຣິດເດດໃຫ້ກັບຜູ້ທີ່ເຊື່ອທຸກໆຄົນ. ຄຣິສຕຽນຕ້ອງການຣິດເດດຂອງພຣະເຈົ້າໃນການດຳເນີນຊີວິດແລະການຮັບໃຊ້. ໃນພຣະທັມຂໍ້ 1:8 ນີ້, ພຣະເຢຊູໄດ້ຊົງບອກເຖິງວຽກງານທີ່ພວກສາວົກຈະຕ້ອງເຮັດ ແລະຈະຕ້ອງເລີ້ມຈາກໃສ. ຫລັງຈາກພຣະເຢຊູໄດ້ສັ່ງວຽກໃຫ້ພວກອັຄສາວົກແລ້ວ, ພຣະເຈົ້າກໍຊົງຮັບພຣະອົງຂຶ້ນເມືອສວັນ (1:9). ພວກເທວະດາສອງຄົນໄດ້ສັນຍາກັບພວກອັຄສາວົກວ່າພຣະເຢຊູຈະສະເດັດມາອີກທີ່ພູເຂົາໝາກກອກເທດ ພ້ອມດ້ວຍຄວາມສະງ່າຣາສີທຸກຢ່າງຂອງພຣະອົງ (1:11).

ຂ. <u>ການເປັນຢູ່ຮ່ວມກັນ</u> (2:43-47)

ຖ້າທ່ານໄດ້ອ່ານ ກິຈການ 2:1-12, ທ່ານກໍໄດ້ຮູ້ວ່າພຣະວິນຍານບໍຣິສຸດໄດ້ສະເດັດລົງມາສະຖິດຢູ່ໃນໂລກມະນຸດຂອງເຮົາແລ້ວ. ໃນພຣະທັມຕໍ່ໄປນີ້ພວກເຮົາຈະໄດ້ຮຽນຮູ້ເຖິງຊີວິດການເປັນຢູ່ຂອງພວກສິດໃນຄຣິສຕະຈັກສມັຍແລກ. ພຣະທັມຂໍ້ 2:43 ບອກວ່າຄົນທັງຫລາຍ "ເກີດມີຄວາມຢ້ານຢຳນັບຖື" ເພາະພວກອັຄສາວົກໄດ້ເຮັດ "ການອັສຈັນແລະໝາຍສຳຄັນຫລາຍປະການ." ສິ່ງນຶ່ງທີ່ພວກເຮົາສັງເກດໄດ້ຈາກພຣະທັມຕອນນີ້ຄືພວກຜູ້ເຊື່ອທັງຫລາຍພາກັນຢູ່ໃນພຣະວິຫານເພື່ອການເປັນພະຍານແລະການນະມັສການ. ພວກເຂົາເຈົ້າມີຈິດໃຈເປັນອັນດຽວກັນເພາະພຣະວິນຍານບໍຣິສຸດຊົງນຳພາ ແລະຈຳນວນຜູ້ທີ່ມາເຊື່ອກໍເພີ່ມຂື້ນທຸກໆມື້.

"ຄວາມຢ້ານຢຳນັບຖື" ເປັນສັນຍາລັກຂອງຊີວິດຄຣິສຕຽນໃນສມັຍນັ້ນ. ພວກເຂົາເຈົ້າຖືວ່າຄວາມສັມພັນຂອງຕົນກັບພຣະເຈົ້າຜ່ານພຣະເຢຊູຄຣິດມີຄວາມສຳຄັນຫລາຍກວ່າສິ່ງອື່ນໆ. ຖ້າທຸກຄົນຖືເອົາການນະມັສການພຣະເຈົ້າເປັນສິ່ງສຳຄັນໃນຊີວິດຂອງຕົນແລ້ວ ຄວາມສັມພັນອື່ນໆກໍຈະດີຂື້ນເອງ. ພຣະທັມໃນຕອນນີ້ໄດ້ບອກຕໍ່ໄປວ່າທຸກໆແຫ່ງທີ່ພວກອັຄສາວົກໄປ, ພວກເຂົາເຈົ້າໄດ້ເຮັດການອັສຈັນຄ້າຍຄືຕອນທີ່ພຣະເຢຊູຍັງມີຊີວິດຢູ່ໃນໂລກນີ້.

ພວກອັຄສາວົກພາກັນສືບຕໍ່ວຽກງານຂອງພຣະເຢຊູຄຣິດໂດຍອາສັຍຣິດອຳນາດຂອງພຣະວິນຍານບໍຣິສຸດ. ພຣະເຈົ້າບໍ່ໄດ້ໃຊ້ ສິ່ງອັສຈັນຕ່າງໆເພື່ອໃຫ້ພວກອັຄສາວົກມີຊື່ສຽງ ແຕ່ພຣະອົງຊົງໃຊ້ໝາຍສຳຄັນ ແລະສິ່ງອັສຈັນເຫລົ່ານັ້ນເພື່ອສະແດງ ການຊົງເປັນຢູ່ຂອງຣາຊອານາຈັກຂອງພຣະເຈົ້າໃນໂລກມະນຸດ.

ທ່ານລູກາຜູ້ຂຽນພຣະທັມກິຈການໄດ້ບັລຍາຍເຖິງຄວາມສັມພັນຂອງພວກສິດທັງຫລາຍໂດຍສະເພາະກ່ຽວກັບເຣື່ອງຊັບສິ່ງຂອງວ່າ "ບັນດາຜູ້ທີ່ເຊື່ອຖືນັ້ນກໍໄດ້ຢູ່ຮ່ວມກັນ ແລະຊັບສິ່ງຂອງເຂົາເຫລົ່ານັ້ນເຂົາຖືເປັນຂອງສ່ວນຣວມ" (2:44). ທ່ານລູກາໄດ້ບອກຕໍ່ໄປວ່າມີການແຈກຢາຍຊັບສິ່ງຂອງໃຫ້ຄົນທັງປວງຕາມທີ່ທຸກຄົນຕ້ອງການ. ພວກຄຣິສຕຽນໃນສມັຍນັ້ນເຫັນຄວາມສັມພັນທີ່ພວກເຂົາເຈົ້າມີຮ່ວມກັນໃນພຣະເຢຊູຄຣິດວ່າສຳຄັນກວ່າຊັບສິ່ງຂອງທັງໝົດ. ພວກເຂົາເຈົ້າໄດ້ພາກັນຂາຍທີ່ດິນແລະສິ່ງຕ່າງໆທີ່ຕົນມີເພື່ອຈະນຳເອົາມາເປັນຂອງສ່ວນຣວມແລະເພື່ອຈະໄດ້ແຈກຢາຍໃຫ້ຜູ້ທີ່ຂາດເຂີນ. ຫລາຍໄປກວ່ານັ້ນ, ພວກສິດທັງຫລາຍມີຄວາມຊົມຊື່ນຍິນດີທີ່ໄດ້ຢູ່ຮ່ວມກັນ ແລະນະມັສການຮ່ວມກັນ. ຄຣິສຕຽນໃນສມັຍນັ້ນນັດພົບກັນຕາມບ້ານເຮືອນ. ເຂົາເຈົ້າກິນເຂົ້າຮ່ວມກັນ; ພຣະທັມຂໍ້ 2:46 ກ່າວວ່າພວກສິດທັງຫລາຍ "ຮ່ວມຮັບປະທານອາຫານດ້ວຍຄວາມຊົມຊື່ນຍິນດີແລະໃຈສັດຊື່."

ຄຣິສຕະຈັກໃນສມັຍປັດຈຸບັນມັກຈະເບິ່ງຂ້າມຄວາມສຳຄັນຂອງການສາມັກຄີທັມ (Koinonia) ຊຶ່ງເປັນສ່ວນສຳຄັນໃນການຂຍາຍຕົວຢ່າງວ່ອງໄວຂອງຄຣິສຕະຈັກໃນສັຕວັດທີນຶ່ງ. ຖ້າຄຣິສຕະຈັກຂອງພວກເຮົາມີການສາມະຄີທັມຢູ່ສເມີເໝືອນຕົວຢ່າງໃນພຣະທັມຕອນນີ້, ຄວາມແບ່ງແຍກ ແລະ ການສ້າງພັກສ້າງພວກໃນກຸ່ມຄຣິສຕຽນຄົງຈະເບົາບາງລົງ. ຈິງຢູ່ທີ່ວ່າສະພາບການໃນສມັຍນີ້ບໍ່ເໝືອນກັບສມັຍກ່ອນ; ແຕ່ຄວາມເປັນຈິງນັ້ນ ຄືພວກເຮົາໄດ້ກາຍເປັນຄຣິສຕຽນທີ່ເຫັນແກ່ຕົວເອງ ແລະເປັນຄຣິສຕຽນທີ່ບໍ່ຖືວ່າຄວາມສັມພັນກັບພຣະເຈົ້າ ແລະກັບຜູ້ທີ່ມີຄວາມເຊື່ອ ດ້ວຍກັນນັ້ນມີຄວາມສຳຄັນ.

ເຖິງຢ່າງໃດກໍດີ, ພວກເຮົາໄດ້ເຫັນວ່າພວກຄຣິສຕຽນທີ່ເຢຣູຊາເລັມໃນສັຕວັດທີນຶ່ງໄດ້ສະແດງພາບພົດອັນສວຍງາມສຳລັບ "ການເປັນຢູ່ຮ່ວມກັນ" ຂອງຄຣິສຕຽນ. ຄຣິສຕະຈັກຫລາຍແຫ່ງໃນທຸກວັນນີ້ໄດ້ນຳເອົາຕົວຢ່າງນີ້ມາໃຊ້ແລະເຂົາເຈົ້າກໍໄດ້ເຫັນຄວາມສັມພັນແບບໃກ້ຊິດໃນຄອບຄົວຂອງຜູ້ທີ່ມີຄວາມເຊື່ອທັງຫລາຍ. ຄຣິສຕຽນເກີດມີຄວາມສັມພັນໃກ້ຊິດກັນເໝືອນກັບອ້າຍນ້ອງທີ່ເກີດຈາກທ້ອງແມ່ດຽວກັນ. ນີ້ແມ່ນຮູບພາບທີ່ພວກເຮົາປາຖນາໃຫ້ຄົນໃນໂລກໄດ້ເຫັນ ແລະໄດ້ຮູ້ວ່າພວກເຮົາໄດ້ພາກັນສືບຕໍ່ການຮັບໃຊ້ຂອງອົງພຣະເຢຊູຄຣິດຢ່າງແທ້ຈິງ.

<u>ຄຳຖາມ:</u>

1. ພຣະເຢຊູຊົງພຣະຊົນຢູ່, ພຣະອົງຊົງຢູ່ຖ້າມກາງພວກເຮົາ, ພຣະອົງຊົງເຮັດໃຫ້ຊີວິດຂອງພວກເຮົາມີຄວາມໝາຍຢູ່ໃນປັດຈຸບັນ! ທ່ານຈະນຳຄວາມຈິງນີ້ໄປແບ່ງປັນກັບຄົນທີ່ທ່ານຮູ້ຈັກໄດ້ວິທີໃດແດ່?

2. ທ່ານເຄີຍມີປະສົບການເຣື່ອງຣິດອຳນາດຂອງພຣະວິນຍານບໍຣິສຸດແນວໃດແດ່?

3. ເປັນຫຍັງຄຣິສຕຽນໃນສມັຍນີ້ ບໍ່ມີຄວາມສັມພັນກັນເໝືອນຄຣິສຕຽນໃນສມັຍກ່ອນທີ່ບັນທຶກໄວ້ໃນພຣະທັມກິຈການ 2:43-47?

4. ສຳຣວດເບິ່ງການເປັນຢູ່ຮ່ວມກັນໃນຄຣິສຕະຈັກຂອງທ່ານແລ້ວຖາມຕົວເອງເບິ່ງວ່າ: ມີຈຸດດີແນວໃດແດ່? ທ່ານມີຄວາມຄິດເຫັນແນວໃດເພື່ອຈະປັບປຸງຄວາມສັມພັນໃນຄຣິສຕະຈັກຂອງທ່ານໃຫ້ດີຂຶ້ນ?

# ບົດຮຽນທີ 6
# ເລົ່າເຣື່ອງຂອງພຣະເຢຊູ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 10:34-48
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 10
ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຈະຕ້ອງແບ່ງປັນຂ່າວປະເສີດເຣື່ອງພຣະເຢຊູໃຫ້ກັບທຸກຄົນ, ເຊີນເຂົາເຈົ້າໃຫ້ຮັບເອົາພຣະອົງດ້ວຍຄວາມເຊື່ອ.

ຄຳຖາມເພື່ອການສຳຣວດ: ຂ່າວປະເສີດແມ່ນຫຍັງ, ແລະມີໄວ້ເພື່ອໃຜ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຫາວິທີທີ່ຈະແບ່ງປັນຂ່າວປະເສີດດ້ວຍຄວາມຫ່ວງໃຍ.

ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັສ:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

## ຄຳນຳ

ຂ່າວປະເສີດເຣື່ອງຂອງພຣະເຢຊູຄຣິດມີໄວ້ສຳລັບມະນຸດທຸກໆຄົນ. ແຕ່ຫລາຍໆຄັ້ງຄຣິສຕຽນພາກັນເລືອກເອງວ່າ ພວກເຂົາເຈົ້າຈະນຳຂ່າວປະເສີດໄປຫາຜູ້ໃດແດ່. ການເລືອກນີ້ສ່ວນຫລາຍຈະມີພື້ນຖານມາຈາກຄວາມລັງກຽດສຽດສີຂອງສ່ວນບຸກຄົນ. ໃນບົດຮຽນຕໍ່ໄປນີ້ພວກເຮົາຈະໄດ້ຮຽນຮູ້ເຖິງຄຣິສຕຽນຈຳພວກນຶ່ງທີ່ໄດ້ປ່ອຍໃຫ້ວັທນະທັມ ຫລື ທຳນຽມຂອງເຂົາເຈົ້າເປັນອຸປສັກໃນການນຳຂ່າວປະເສີດອອກໄປຫາຝູງຄົນທີ່ບໍ່ແມ່ນຊົນຊາດຂອງຕົນເອງ.

ກ. ສິ່ງສະອາດ ແລະສິ່ງທີ່ບໍ່ທັນຊຳຣະໃຫ້ສະອາດ? (10:1-16)

ຄຳວ່າ "ສະອາດ" ແລະ "ບໍ່ສະອາດ" ນັ້ນບໍ່ແມ່ນຄຳເວົ້າທີ່ພວກເຮົາໃຊ້ກັນເປັນປະຈຳໃນສມັຍນີ້. ແຕ່ສຳລັບຊົນຊາດຢິວໃນພຣະສັນຍາໃໝ່ ສິ່ງເຫລົ່ານີ້ເປັນສິ່ງທີ່ເຂົາເຈົ້າຕ້ອງຄອຍຣະວັງຢູ່ສເມີໄປ. ຄຳສອນກ່ຽວກັບສິ່ງໃດສະອາດ ແລະສິ່ງໃດບໍ່ສະອາດໄດ້ເລີ້ມຕົ້ນມາຈາກພຣະທັມລະບຽບພວກເລວີ 11:1-47 ແລະ ພຣະບັນຍັດທີສອງ 14:1-21. ພຣະທັມຂອງພຣະເຈົ້າໃນຕອນນີ້ໄດ້ຫ້າມຄົນເຮັບເຣີບໍ່ໃຫ້ກິນສັດບາງຈຳພວກທີ່ຖືວ່າເປັນພວກສັດທີ່ບໍ່ສະອາດ (ເປັນມົນທິນ). ຄຳສອນເຣື່ອງສິ່ງບໍ່ສະອາດນີ້ໄດ້ຂຍາຍອອກໄປເຖິງຜູ້ທີ່ກິນຫລືແຕະຕ້ອງສັດທີ່ຢູ່ໃນຈຳພວກທີ່ຖືວ່າບໍ່ສະອາດດ້ວຍ. ສັງຄົມຂອງຊົນຊາດຢິວໃນຕອນນັ້ນໄດ້ຖືກແບ່ງອອກເປັນສອງພວກ; ພວກທີ່ຖືພຣະບັນຍັດຂອງສາສນາຢູດາຍຢ່າງເຄັ່ງຄັດເຊັ່ນພວກຟາຣີຊາຍໄດ້ຖືກຮັບຮູ້ວ່າເປັນ "ພວກສະອາດ" ແລະພວກທີ່ບໍ່ຍຶດຖືພຣະບັນຍັດເຊັ່ນພວກຄົນຕ່າງຊາດກໍຈະຖືວ່າເປັນ "ພວກບໍ່ສະອາດ." ຄົນຢິວຈະຫລີກເວັ້ນການແຕະຕ້ອງ ຫລືເວົ້າລົມກັບຄົນພວກທີ່ຖືວ່າບໍ່ສະອາດເພາະໃນທັສນະຂອງຄົນຢິວທົ່ວໄປແລ້ວ ຄົນພວກບໍ່ສະອາດເປັນຊົນຊາດທີ່ຕ່ຳຕ້ອຍແລະບໍ່ສົມຄວນທີ່ຊາວ

ຢິວຈະໄປຄົບຄ້າສະມາຄົມນຳ. ພວກເຮົາໃນສມັຍນີ້ກໍບໍ່ໄດ້ແຕກຕ່າງກັບຄົນໃນສມັຍຂອງ ເປໂຕ ຫລາຍປານໃດ. ສັງຄົມພວກເຮົາກໍເຕັມໄປດ້ວຍການແບ່ງແຍກຕາມຜິວພັນ, ຕາມພາສາ, ຕາມເຊື້ອຊາດ, ຫລືຕາມຖານະທາງເສຖກິດ.

ພຣະທັມໃນຕອນນີ້ໄດ້ສອນພວກເຮົາເຖິງຄວາມເຂົ້າໃຈຜິດຊຶ່ງເກີດມາຈາກຄວາມບໍ່ເຂົ້າໃຈຄົນອື່ນ. ພຣະເຈົ້າມີພຣະປະສົງທີ່ຈະສອນທຸກຄົນເຖິງເຣື່ອງສິ່ງທີ່ຖືວ່າສະອາດ ແລະສິ່ງທີ່ຖືວ່າບໍ່ສະອາດ ເພື່ອພວກເຮົາຈະບໍ່ມີການລຳອຽງໃນການປະກາດຂ່າວປະເສີດ. ໂກເນລີໂອ ເປັນຜູ້ບັງຄັບກອງຮ້ອຍຂອງທະຫານໂຣມຊຶ່ງປະຈຳການຢູ່ເມືອງກາຍຊາເຣັຽ (ກະສັດເຮໂຣດ ສ້າງເມືອງກາຍຊາເຣັຽຂຶ້ນເພື່ອເປັນກຽດແກ່ ກາຍຊາ). ໂກເນລີໂອ ບໍ່ແມ່ນຄົນຊາດຢິວ ແຕ່ລາວເຊື່ອຖືສາສນາຢູດາຍແລະປະຕິບັດຕາມຫຼັກຢ່າງຖືກຕ້ອງ. ລາວບໍ່ມີສິດທີ່ຈະໄປຮ່ວມການຖວາຍໃນພຣະວິຫານ. ກິຈການ 10: ຂ ບອກວ່າ "ທ່ານເຄີຍໃຫ້ທານແກ່ປະຊາຊົນຢ່າງຫລວງຫລາຍ ແລະໄຫວ້ວອນພຣະເຈົ້າຢູ່ ສເມີ."

ໃນຂນະດຽວກັນນີ້ ເປໂຕກໍໄດ້ໄປທີ່ເມືອງຢົບເປຊຶ່ງຢູ່ໃຕ້ຊາຍຝັ່ງຈາກ ເມືອງກາຍຊາເຣັຽ. ເປໂຕໄດ້ພັກເຊົາຢູ່ບ້ານຂອງຊີໂມນຊ່າງຟອກໜັງ. ຊີໂມນເປັນຄຣິສຕຽນແລະອາດຈະບໍ່ແມ່ນຄົນຊາດຢິວເພາະຄົນຢິວຈະບໍ່ເຮັດອາຊີພຟອກໜັງເດັດຂາດເພາະເຂົາເຈົ້າຖືວ່າການຄ້າຂາຍສັດເປັນຂອງບໍ່ສະອາດ. ພຣະເຈົ້າໄດ້ໃຫ້ນິມິດສຳຄັນກັບເປໂຕເພື່ອສອນບົດຮຽນກ່ຽວກັບສິ່ງສະອາດແລະສິ່ງບໍ່ສະອາດແລະເພື່ອເຂົາຈະໄດ້ເປັນຄຣິສຕຽນທີ່ສົມບູນ.

## ຂ. <u>ເຮັດໄປຕາມຄວາມເຂົ້າໃຈ</u> (ກິຈການ 10:17-33)

ກິຈການ 10:17-33 ມີຕົວຢ່າງສຳລັບພວກເຮົາກ່ຽວກັບສິ່ງທີ່ເຮົາຈະຕ້ອງເຮັດຈາກຂໍ້ຄວາມທີ່ພຣະເຈົ້າຊົງໃຫ້ກັບເຮົາ. ພວກເຮົາຈະເຫັນທັສນະສອງຢ່າງຈາກໂກລິເນໂອ ແລະເປໂຕ. ໂກລິເນໂອໄດ້ເຫັນພຣະນິມິດ, ເຂົາເຂົ້າໃຈດີ, ແລະເຂົາເລີ້ມປະຕິບັດຕາມທັນທີ. ແຕ່ສ່ວນເປໂຕຫລັງຈາກທີ່ໄດ້ເຫັນນິມິດຈາກພຣະເຈົ້າເຖິງສາມຄັ້ງເພິ່ນກໍຍັງບໍ່ເຂົ້າໃຈ. ໃນທີ່ສຸດພຣະວິນຍານຈຶ່ງຊົງສັ່ງເປໂຕ "ຈົ່ງລຸກຂຶ້ນ...ແລ້ວໄປກັບເຂົາ ຢ່າລັ່ງເລໃຈ ເພາະເຮົານີ້ແຫລະ, ໄດ້ໃຊ້ເຂົາມາ" (10:20). ເປໂຕບໍ່ໄດ້ຕັ້ງໜ້າໄປຫາຄົນຕ່າງຊາດເພາະເຂົາເຂົ້າໃຈພຣະນິມິດ, ແຕ່ເພິ່ນຈຳຕ້ອງໄປເພາະພຣະວິນຍານຂອງພຣະເຈົ້າຊົງສັ່ງເພິ່ນ. ເປໂຕ ເຂົ້າໃຈຄວາມໝາຍຂອງພຣະນິມິດຢ່າງແຈ່ມແຈ້ງຫລັງຈາກທີ່ເພິ່ນໄດ້ ເຫັນເຫດການຕ່າງໆໃນບ້ານຂອງໂກລິເນໂອ. ເພິ່ນຮູ້ວ່າບັດນີ້ ຣະຜູ້ເປັນເຈົ້າໄດ້ມ້າງກຳແພງທີ່ກີດກັ້ນຣະຫວ່າງຊົນ ຊາດຢິວແລະຄົນຕ່າງຊາດ.

ພວກເຮົາອາດຈະຈຳໄດ້ວ່າໃນຕອນນີ້ ພວກອັຄສາວົກຍັງບໍ່ໄດ້ມີການເທສນາໃຫ້ກັບພວກຊາວຕ່າງຊາດ; ແມ່ນແຕ່ພວກຊາວຊາມາເຣັຽຊຶ່ງເປັນລູກຊອດຢິວ (ກິຈການ 8) ແລະຖືພຣະບັດຍັດຂອງໂມເຊຢ່າງເຄັ່ງຄັດກໍບໍ່ເຄີຍໄດ້ຟັງເທສນາເຣື່ອງຂ່າວປະເສີດເລີຍ. ເປໂຕບໍ່ແນ່ໃຈວ່າເປັນຫຍັງພຣະວິນຍານຈຶ່ງສັ່ງໃຫ້ເພິ່ນໄປກັບຄົນຕ່າງຊາດ. ພໍໄປເຖິງບ້ານຂອງ ໂກເລນີໂອ, ເປໂຕຈຶ່ງຖາມວ່າ "ເປັນດ້ວຍເຫດໃດທ່ານຈຶ່ງໃຫ້ຄົນໄປຫາເຮົາ" (ຂ:ຂ9). ເປໂຕແລະພວກອັຄສາວົກທັງຫລາຍເຂົ້າໃຈຕາມທັສນະຂອງຄົນຢິວວ່າຂ່າວປະເສີດຈະບໍ່ໄປເຖິງພວກຄົນຕ່າງຊາດຈົນກວ່າພຣະເຢຊູຄຣິດໄດ້ຕັ້ງພຣະຣາຊອານາຈັກຂອງພຣະອົງ. ເປໂຕກຳລັງຈະໄດ້ຮຽນຮູ້ວ່າພຣະເຈົ້າມີແຜນການໃໝ່ສຳລັບພວກສິດທັງຫລາຍ. ພຣະເຈົ້າຈະຊົງສ້າງຄຣິສຕະຈັກຂອງພຣະອົງໃນແຜ່ນດິນໂລກ.

## ຄ. <u>ການປະກາດພຣະທັມຂອງພຣະເຈົ້າ</u> (ກິຈການ 10:34-48)

ຫລັງຈາກ ໂກເລນີໂອເລົ່າເຣື່ອງເປັນມາທຸກຢ່າງໃຫ້ເຂົາຟັງແລ້ວ, ເປໂຕຈຶ່ງໄດ້ເທສນາປະກາດເຣື່ອງຂອງ ພຣະເຢຊູຄຣິດໃຫ້ທຸກຄົນໃນຄົວເຮືອນຂອງໂກເລນີໂອຟັງ. ເປໂຕໄດ້ບອກທຸກຄົນວ່າພຣະເຢຊູຄຣິດໄດ້ມາເພື່ອຈະໂຜດ ຊົນຊາດອິສຣາເອັນ ແຕ່ບັດນີ້ເຂົາເອງຍອມຮັບຮູ້ວ່າພຣະເຈົ້າບໍ່ໄດ້ແບ່ງແຍກຊາວຢິວແລະຊາວຕ່າງຊາດອອກຈາກກັນ.

ເຂົາໄດ້ເວົ້າຕາມຄວາມຈິງວ່າ "ທຸກໆຄົນທີ່ເຊື່ອວາງໃຈໃນພຣະອົງຈະໄດ້ຮັບຄວາມຍົກຜິດບາບ" (2:43). ພຣະທັມໄດ້ ບອກຕໍ່ໄປວ່າ "ຂນະທີ່ເປໂຕຍັງກ່າວດັ່ງນີ້ຢູ່ພຣະວິນຍານບໍຣິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່ກຳລັງຟັງພຣະທັມ ຢູ່" (2:44). ຊາວຢິວທີ່ຢູ່ກັບເປໂຕພາກັນປະຫລາດໃຈທີ່ພຣະເຈົ້າໄດ້ໂຜດຄົນຕ່າງຊາດໃຫ້ພົ້ນໂດຍບໍ່ໄດ້ໃຫ້ພວກເຂົາ ປ່ຽນມາເປັນຄົນຢິວກ່ອນ. ໂດຍການນຳພາຂອງພຣະວິນຍານ "ເປໂຕຈຶ່ງສັ່ງໃຫ້ພວກເຂົາບັບຕິສະມາໃນພຣະນາມ ຂອງພຣະເຢຊູຄຣິດ" (2:48). ເປໂຕແລະພັກພວກຂອງເພິ່ນໄດ້ພັກຢູ່ທີ່ນັ້ນແລະໄດ້ຮັບປະທານອາຫານຮ່ວມກັບພວກ ຊາວຕ່າງຊາດ (11:3).

ຖ້າພວກເຮົາສຶກສາພຣະທັມກິຈການໃຫ້ລະອຽດ, ພວກເຮົາຈະໄດ້ເຫັນຄວາມສັມພັນລະຫວ່າງພຣະວິນຍານແລະການບັບຕິສະມາ. ໃນກິຈການບົດທີ 2, ພວກຊາວຢິວທີ່ເຊື່ອຕ້ອງໄດ້ຮັບບັບຕິສະມາເສັຽກ່ອນຈຶ່ງຈະໄດ້ຮັບພຣະວິນຍານບໍຣິສຸດ. ໃນກິຈການບົດທີ 8, ຊາວຊາມາເຣັຽທີ່ເຊື່ອແລະຮັບບັບຕິສະມາແລ້ວໄດ້ຮັບພຣະວິນຍານໂດຍການວາງມືຂອງພວກອັຄສາວົກ. ແຕ່ໃນກິຈການບົດທີ 10, ພວກເຮົາໄດ້ເຫັນພາບພົດຂອງຄຣິສຕະຈັກທີ່ແທ້ຈິງຄືພວກຄົນຕ່າງຊາດໄດ້ຍິນພຣະທັມ, ໄດ້ຮັບເຊື່ອ, ໄດ້ຮັບພຣະວິນຍານ, ແລະໄດ້ຮັບບັບຕິສະມາ. ເປໂຕໄດ້ກ່າວໃນກິຈການ 11:1 ວ່າການບັບຕິສະມາທີ່ບ້ານຂອງໂກເລນີໂອບໍ່ໄດ້ແຕກຕ່າງຈາກການບັບຕິສະມາໃນວັນເພັນເຕຄໍສະເຕເລີຍ. ໃນທຸກມື້ນີ້, ເວລາຄົນບາບຄົນນຶ່ງຮັບເອົາພຣະເຢຊູຄຣິດເປັນພຣະເຈົ້າຂອງເຂົາ, ພຣະວິນຍານບໍຣິສຸດຈະສະເດັດມາຢູ່ນຳເຂົາແລະເຂົາຈະໄດ້ຮັບບັບຕິສະມາເຂົ້າຢູ່ໃນພຣະກາຍຂອງພຣະຄຣິດ.

ກິຈການບົດທີ 10 ເປັນພຣະທັມທີ່ຈະເຕືອນພວກເຮົາແຕ່ລະຄົນໃຫ້ໄດ້ພິສູດຕົວເອງໃນເຣື່ອງການປະກາດຂ່າວປະເສີດ. ພຣະເຈົ້າໄດ້ນຳພາຄຣິສຕຽນຄົນນຶ່ງຊຶ່ງເຕັມໄປດ້ວຍຄວາມລັງກຽດສຽດສີໃຫ້ສາມາດເອົາຊະນະຄວາມລຳອຽງຂອງຕົນເພື່ອໄປປະກາດຂ່າວປະເສີດກັບຜູ້ຄົນທີ່ພຣະເຈົ້າຊົງຈັດຕຽມໄວ້ກ່ອນແລ້ວ. ພວກຄົນເຫລົ່ານັ້ນພາກັນຕ້ອນຮັບພຣະທັມດ້ວຍຄວາມຍິນດີ. ພວກເຂົາເຈົ້າຍອມຮັບເອົາພຣະເຢຊູໄວ້ໃນຊີວິດຂອງເຂົາ. ທຸກຄົນມີຄວາມຊົມຊື່ນຍິນດີໃນຄວາມສັມພັນໃໝ່ໃນພຣະຄຣິດຊຶ່ງບໍ່ມີປະເພນີເປັນສິ່ງກີດກັນ.

ທ່ານຕຽມພ້ອມແລ້ວບໍ່ທີ່ຈະແກ້ໄຂ ຄວາມລັງກຽດສຽດສີທີ່ມີໃນຕົວທ່ານ? ທ່ານຈະຍອມໃຫ້ພຣະເຈົ້າສົ່ງທ່ານອອກໄປປະກາດຂ່າວປະເສີດກັບຄົນທົ່ວໄປບໍ່? ປະວັດເຣື່ອງຄວາມລອດພົ້ນຂອງໂກເນລີໂອເປັນເຣື່ອງເຊີນຊວນໃຫ້ພວກເຮົາໄດ້ຄິດພິຈາຣະນາຕົນເອງເວລາພຣະເຈົ້າຊົງເອີ້ນໃຫ້ພວກເຮົາອອກໄປປະກາດ.

<u>ຄຳຖາມ:</u>

1. ພິຈາຣະນາເບິ່ງນິມິດທີ່ພຣະເຈົ້າໃຫ້ກັບ ໂກເນລີໂອ ແລະ ເປໂຕ? ທ່ານຄິດວ່າພຣະເຈົ້າມີວິທີໃດອີກແດ່ທີ່ຈະຕິດຕໍ່ກັບພວກເຮົາທີ່ດີໄປກວ່ານັ້ນ?

2. ທົບທວນເຖິງຫລາຍໆຄັ້ງທີ່ທ່ານຮູ້ສຶກໃນໃຈວ່າພຣະເຈົ້າຊົງພຣະປະສົງໃຫ້ທ່ານປະກາດຂ່າວປະເສີດກັບຄົນທົ່ວໄປ. ທ່ານຕອບພຣະເຈົ້າແນວໃດ? ທ່ານເຄີຍເລົ່າເຣື່ອງນີ້ໃຫ້ຄຣິສຕຽນຄົນອື່ນຟັງບໍ່? ການສົນທະນາກັບຄຣິສຕຽນຄົນອື່ນໆເຣື່ອງການເປັນພະຍານຈະຊ່ວຍການປະກາດຂອງທ່ານໃຫ້ດີຂຶ້ນບໍ່?

3. ບັນທຶກຈຸດສຳຄັນຕ່າງໆເຣື່ອງຂ່າວປະເສີດທີ່ບອກໄວ້ໃນພຣະທັມກິຈການ 10:36-43. ມີຈຸດໃດແດ່ທີ່ມີຄວາມໝາຍທີ່ສຸດສຳລັບປະສົບການຂອງທ່ານ? ປະສົບການເຫລົ່ານີ້ຊ່ວຍທ່ານໃຫ້ມີຄວາມໝັ້ນໃຈ ແລະຊ່ວຍທ່ານໃຫ້ປະກາດຂ່າວປະເສີດຢ່າງແຈ່ມແຈ້ງຂຶ້ນບໍ່?

## ບົດຮຽນທີ 7
## ຂ່າວປະເສີດສຳລັບທຸກຄົນ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 15:1-21
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 11:19-26; 13:44-52; 14:24-15:35
ຈຸດສຳຄັນຂອງບົດຮຽນນີ້: ໂດຍທາງພຣະຄຸນ ພຣະເຈົ້າຊົງປະທານຄວາມລອດພົ້ນໃຫ້ແກ່ມະນຸດເພາະຄວາມເຊື່ອ ຂອງພວກເຂົາໃນອົງພຣະຄຣິດ.
ຄຳຖາມເພື່ອການສຳຣວດ: ແຕ່ລະຄົນຈະລອດພົ້ນວິທີໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າແຕ່ລະຄົນຈະໄດ້ຮັບຄວາມພົ້ນວິທີໃດ?

ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັສ:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

### ຄຳນຳ

ຄຣິສຕະຈັກໃນສມັຍແລກພົບກັບບັນຫາໜັກທີ່ສຸດທີ່ເຂົາເຈົ້າຈະຕ້ອງໄດ້ແກ້ໄຂ. ບັນຫາມີຢູ່ວ່າ: ຄົນຕ່າງຊາດຈຳເປັນຕ້ອງປ່ຽນມາເປັນຄົນຢິວຫລືບໍ່ ກ່ອນທີ່ເຂົາເຈົ້າຈະເປັນຄຣິສຕຽນ? ການຕັດສິນໃນບັນຫານີ້ຈະເປັນຈຸດເລີ້ມຕົ້ນວ່າ ຄຣິສຕະຈັກຈະຕັ້ງຕົວຢູ່ໃນສະພາບກຸ່ມນ້ອຍ(ສະເພາະຊົນຊາດຢິວ) ຫລືຈະແຜ່ຂຍາຍອອກໄປທົ່ວໂລກ. ຄຣິສຕຽນທຸກຍຸກທຸກສມັຍເຄີຍໄດ້ພົບກັບບັນຫາຕ່າງໆເຊັ່ນ:ການບໍ່ເຫັນພ້ອມເຣື່ອງຫລັກຄວາມເຊື່ອ, ການຕີຄວາມໝາຍພຣະ ຄັມພີ, ການຮັບໃຊ້, ການປົກຄອງຄຣິສຕະຈັກ, ແລະຕໍ່ໆໄປ. ໃນບົດຮຽນພາກຕໍ່ໄປນີ້ພວກເຮົາຈະໄດ້ຮຽນຮູ້ເຖິງເຣື່ອງ ການແກ້ໄຂບັນຫາທີ່ເກີດຂຶ້ນໃນກຸ່ມຄຣິສຕຽນ. ການແກ້ໄຂບັນຫາແບບຖືກຕ້ອງຈະຊ່ວຍພວກເຮົາໃຫ້ໄດ້ເປັນພະຍານ ທີ່ດີສຳລັບຂ່າວປະເສີດຂອງອົງພຣະເຢຊູຄຣິດ.

ກ. ການຜິດຖຽງກັນທີ່ເມືອງອັນຕິໂອເຂັຽ (15:1-2)

ພວກຟາຣີຊາຍທີ່ມາເຊື່ອໃນອົງພຣະຄຣິດບາງຄົນຈາກຄຣິສຕະຈັກກຸງເຢຣູຊາເລັມໄດ້ພາກັນໄປທີ່ເມືອງອັນຕິໂອເຂັຽ ແລະໄດ້ບອກກັບຊາວຕ່າງຊາດທີ່ເປັນຄຣິສຕຽນວ່າ, "ຖ້າທ່ານທັງຫລາຍບໍ່ຮັບພິທີຕັດຕາມຮີດຄອງຂອງໂມເຊ ພວກທ່ານຈະພົ້ນບໍ່ໄດ້?" (15:1). ໂປໂລ ແລະບາຣະນາບາໄດ້ໂຕ້ຕອບກັບພວກເຂົາເຫລົ່ານັ້ນຢ່າງຮ້າຍແຮງເພາະໂປໂລເອງບໍ່ເຄີຍໄດ້ສອນຢ່າງນັ້ນມາກ່ອນ (ກິຈການ 13:38-40). ຫລັງຈາກມີການໂຕ້ແຍ້ງກັນພໍສົມຄວນ, ທຸກຄົນຈຶ່ງເຫັນດີໃຫ້ໂປໂລ ແລະບາຣະນາບາພ້ອມຄົນອື່ນໆໃນພວກຟາຣີຊາຍຄຣິສຕຽນໃຫ້ນຳເອົາເຣື່ອງສຳຄັນນີ້ຂຶ້ນໄປປຶກສາກັບພວກອັຄສາວົກແລະພວກເຖົ້າແກ່ໃນກຸງເຢຣູຊາເລັມ. ການກະທຳເຊັ່ນນີ້ບໍ່ໄດ້ໝາຍຄວາມວ່າທຸກໆຄຣິສຕະຈັກຈະຕ້ອງຢູ່ພາຍໃຕ້ການປົກຄອງຂອງຄຣິສຕະຈັກທີ່ເຢຣູຊາເລັມ. ໂປໂລໄດ້ເວົ້າໃນ ພຣະທັມຄາລາເຕັຽ 2:1-2 ວ່າ ເພິ່ນແລະບາຣະນາບາໄດ້ຂຶ້ນເມືອຍັງກຸງເຢຣູຊາເລັມ "ຕາມທີ່ພຣະເຈົ້າໄດ້ຊົງສະແດງ" ແກ່ເພິ່ນ.

ພຣະເຈົ້າ ຊົງເລືອກໂປໂລໃຫ້ໄປປະກາດກັບຄົນຕ່າງຊາດ; ທຸກຢ່າງທີ່ເພິ່ນກະທຳແມ່ນຢູ່ໃນແຜນການຂອງພຣະເຈົ້າ. ພວກຄຣິສຕຽນຢິວພາກັນເຂົ້າໃຈຜິດເລື່ອງແຜນການໂຜດມະນຸດໃຫ້ພົ້ນຂອງພຣະເຈົ້າ ເພາະພວກເຂົາໄດ້ຮຽນຮູ້ໃນພຣະສັນຍາເດີມວ່າ ພວກຄົນຕ່າງຊາດຈະໄດ້ຮັບຄວາມລອດພົ້ນຜ່ານທາງອິສຣາເອັນເທົ່ານັ້ນ. ໃນສະໄໝນັ້ນຄຣິສຕະຈັກເຢຣູຊາເລັມບໍ່ໄດ້ປະກາດກັບຄົນຕ່າງຊາດ. ຄົນຕ່າງຊາດທີ່ໄດ້ຮັບຄວາມພົ້ນໂດຍການເທສນາຂອງເປໂຕ (ກິຈການ 11) ເປັນຄົນຕ່າງຊາດຈຳພວກດຽວທີ່ມີສ່ວນກ່ຽວຂ້ອງກັບຄຣິສຕະຈັກເຢຣູຊາເລັມ. ໃນຂະນະດຽວກັນ, ຄົນຕ່າງຊາດໃນເມືອງອື່ນໆໄດ້ຮັບເຊື່ອໃນອົງພຣະຄຣິດຢ່າງຫລວງຫລາຍເພາະການປະກາດຂອງ ໂປໂລ ແລະ ບາຣະນາບາ; ແຕ່ຂ່າວເຫລົ່ານັ້ນຍັງບໍ່ໄດ້ໄປເຖິງທຸກຄົນທີ່ກຸງເຢຣູຊາເລັມເພາະການຄົມມະນາຄົມບໍ່ສະດວກດີເໝືອນສະໄໝນີ້. ໃນພຣະທັມ ຄາລາເຕັຽ 2:6 -10 ໂປໂລໄດ້ອະທິບາຍຄວາມແຕກຕ່າງລະຫວ່າງວຽກງານຂອງເພິ່ນແລະວຽກງານຂອງເປໂຕໂດຍລະອຽດ. ໂປໂລ ບອກວ່າການປະກາດຂອງຄຣິສຕະຈັກເຢຣູຊາເລັມເປັນການປະກາດທີ່ບໍ່ຄົບບໍຣິບູນ ເພາະພວກເຂົາບໍ່ໄດ້ເອົາໃຈໃສ່ກັບຄົນຍາກຈົນແລະຄົນຕ່າງຊາດ.

2. <u>ການປຶກສາຫາລືທີ່ເຢຣູຊາເລັມ</u> (15: 3-21)

ນັກສາສນາສາດບາງຄົນຄິດວ່າການປຶກສາຫາລືກັນທີ່ເຢຣູຊາເລັມໄດ້ມີຂຶ້ນເຖິງ 4 ຄັ້ງ: (1) ການຕ້ອນຮັບໂປໂລ ແລະໝູ່ຄະນະ (15:4); (2) ການສົນທະນາສ່ວນຕົວລະຫວ່າງ ໂປໂລ ແລະຜູ້ນຳສຳຄັນ (ຄາລາເຕັຽ 2:2); (3) ການປະຊຸມເທື່ອທີສອງເພື່ອໃຫ້ພວກຟາຣີຊາຍທີ່ເຊື່ອແລ້ວໄດ້ຕັ້ງຂໍ້ຫາ (ກິຈການ 15:5; ຄາລາເຕັຽ 2:3-5); ແລະ (4) ການປະຊຸມຂອງອັຄສາວົກກັບພວກເຖົ້າແກ່ເພື່ອພິຈາຣະນາບັນຫາແລະໃຫ້ຄວາມເຫັນ (15:6-35). ໂປໂລໄດ້ໃຫ້ລາຍຣະອຽດໃນເລື່ອງນີ້ໃນພຣະທັມ ຄາລາເຕັຽບົດທີ 1 ແລະ ທີ 2.

ຫລັງຈາກການໂຕ້ຖຽງກັນຢ່າງຍືດຍາວແລະບໍ່ມີຜົນຫຍັງປາກົດເປໂຕຈຶ່ງລຸກຂຶ້ນແລະໃຫ້ຄຳປາສັຍກັບທີ່ປະຊຸມ. ສິ່ງສຳຄັນທີ່ເປໂຕໄດ້ເຮັດຄືເຂົາສະແດງຄຳສນັບສນູນກັບໂປໂລແລະການຮັບໃຊ້ຂອງເຂົາຕໍ່ໜ້າທີ່ປະຊຸມ; ນອກນັ້ນເປໂຕຍັງໄດ້ຂຽນຄຳສນັບສນູນນີ້ໄວ້ອີກເທື່ອນຶ່ງໃນພຣະທັມ 2 ເປໂຕ 3:15-16. ເປໂຕໄດ້ເລົ່າເລື່ອງທີ່ພຣະເຈົ້າໄດ້ສະແດງໃຫ້ເຂົາເຫັນກ່ຽວກັບເລື່ອງຄົນຕ່າງຊາດ (ກິຈການ 10 ແລະ 11). ເຂົາໄດ້ບອກທີ່ປະຊຸມວ່າພຣະເຈົ້າໄດ້ຮັບຮູ້ຄົນຕ່າງຊາດແລະພຣະອົງໄດ້ປະທານພຣະວິນຍານບໍຣິສຸດໃຫ້ພວກເຂົາເໝືອນດັ່ງພຣະອົງໄດ້ຊົງປະທານໃຫ້ກັບຄົນຢິວໃນວັນເພັນເຕກໍສະເຕ. ພວກຕ່າງຊາດໄດ້ຮັບຄວາມລອດພົ້ນເພາະຄວາມເຊື່ອ (15:11) ແລະດ້ວຍພຣະຄຸນ (15:11). ເປໂຕບໍ່ໄດ້ບອກວ່າ "ຄົນຕ່າງຊາດໄດ້ປ່ຽນມາເປັນຄົນຢິວຈຶ່ງໄດ້ຄວາມພົ້ນ" ແຕ່ເພິ່ນບອກທີ່ປະຊຸມວ່າ "ພວກເຮົາຈະໄດ້ພົ້ນໂດຍພຣະຄຸນຂອງພຣະອົງເຈົ້າເຢຊູເໝືອນຢ່າງເຂົາ." <u>ຄວາມພົ້ນບໍ່ໄດ້ມາເພາະການປະຕິບັດພຣະບັນຍັດແລະພິທີຕັດຕາມຮີດຄອງຂອງໂມເຊ; ແຕ່ທຸກຄົນຈະໄດ້ຮັບຄວາມລອດພົ້ນໂດຍພຣະຄຸນຂອງພຣະເຈົ້າແລະຜ່ານທາງຄວາມເຊື່ອໃນອົງພຣະເຢຊູຄຣິດເທົ່ານັ້ນ."</u>

ໂປໂລໄດ້ລາຍງານໃຫ້ທີ່ປະຊຸມຮູ້ເຖິງໝາຍສຳຄັນແລະການອັສຈັນຕ່າງໆທີ່ພຣະເຈົ້າຊົງກະທຳຖ້າມກາງຄົນຕ່າງຊາດ. ເມື່ອພວກກົງກັນຂ້າມໄດ້ຍິນເຊັ່ນນັ້ນ, ພວກເຂົາຈຶ່ງນັ່ງຟັງຢ່າງງຽບສງັດ. ຢາໂກໂບເປັນຄົນສຸດທ້າຍທີ່ໄດ້ສະແດງຄວາມຄິດເຫັນ. ຢາໂກໂບ ເປັນນ້ອງຄົນລະພໍ່ກັບອົງພຣະເຢຊູຄຣິດ. ເພິ່ນເປັນຜູ້ນຳທີ່ຄຣິສຕະຈັກເຢຣູຊາເລັມແທນທ່ານເປໂຕ. ຄຳເວົ້າຂອງຢາໂກໂບໃນ ຂໍ້ 14-21 ໄດ້ສ້າງຄວາມປະທັບໃຈໃຫ້ກັບທີ່ປະຊຸມ; ຄຣິສຕະຈັກໃນສະໄໝນີ້ຄວນຈະຈົດຈຳໄວ້ຖ້າພວກເຮົາຈະເຮັດແຜນຂອງພຣະເຈົ້າໃຫ້ສຳເຣັດໃນຍຸກນີ້. ທ່ານຮູ້ບໍ່ວ່າພຣະເຈົ້າກຳລັງເຮັດຫຍັງຢູ່ໃນປັດຈຸບັນ? ພຣະອົງກຳລັງນຳຄົນຕ່າງຊາດທັງຫລາຍໃຫ້ມາເປັນໄພ່ພົນຂອງພຣະອົງຜ່ານຄວາມເຊື່ອໃນອົງພຣະບຸດພຣະເຢຊູຄຣິດ. ຄົນຢິວແລະຄົນຕ່າງຊາດມີຖານະສເມີກັນຕໍ່ໜ້າພຣະເຈົ້າ. ຄຳເວົ້າທີ່ວ່າ "ຄວາມພົ້ນຈະມາເຖິງຊົນຊາດຢິວກ່ອນ" ນັ້ນໃຊ້ບໍ່ໄດ້ແລ້ວເພາະພຣະເຈົ້າໄດ້ປ່ຽນແຜນແລ້ວ.

ແລ້ວພວກເຮົາຈະຄິດແນວໃດກ່ຽວກັບພຣະສັນຍາທີ່ພຣະເຈົ້າຊົງໃຫ້ໄວ້ກັບຊົນຊາດຢິວເຣື່ອງຣາຊອານາຈັກຂອງພຣະເຈົ້າ? ຢາໂກໂບໄດ້ຕອບທີ່ປະຊຸມໂດຍການອ້າງຄຳທຳນວາຍຂອງ ອາໂມສ (ອມ 11-12) ໃນຂໍ້ 5:15-17. ຢາໂກໂບເຕືອນທຸກຄົນວ່າເຣື່ອງທີ່ເກີດຂື້ນກັບຄົນຕ່າງຊາດແລະແຜນການໃໝ່ຂອງພຣະເຈົ້າທີ່ພວກເຂົາກຳລັງໄດ້ເຫັນ ຢູ່ນີ້ກໍຖືກຕ້ອງຕາມທີ່ຜູ້ປະກາດພຣະທັມໄດ້ຂຽນໄວ້ແລ້ວ. ພຣະເຢຊູຄຣິດຈະສະເດັດກັບມາ; ແລ້ວພຣະອົງຈະຊົງສ້າງບັນລັງຂອງດາວິດຂື້ນໃໝ່, ແລະຈະຕັ້ງພຣະຣາຊອານາຈັກເພື່ອຊົນຊາດອິສຣາເອັນ ເມື່ອຈຳນວນຂອງຄົນຕ່າງຊາດ ທີ່ໄດ້ຮັບຄວາມລອດພົ້ນນັ້ນຄົບເຕັມຈຳນວນ. ໂປໂລໄດ້ຂຽນເຣື່ອງແຜນການໃໝ່ຂອງພຣະເຈົ້າຢູ່ໃນພຣະທັມ ໂຣມ 9: 29-33 ແລະ 11:1-36. ພຣະທັມ ໂຣມ 11:25 ເວົ້າວ່າ, ບາງຄົນໃນພວກອິສຣາເອັນມີໃຈແຂງກະດ້າງໄປພໍປານນີ້ງ ຈົນເຮັດໃຫ້ພວກຕ່າງຊາດມາຄົບຈຳນວນແລ້ວ." ເມື່ອຈຳນວນຄົນຕ່າງຊາດທີ່ໄດ້ຮັບຄວາມລອດພົ້ນຄົບເຕັມຈຳນວນ ແລ້ວ ພຣະເຈົ້າຈະຖອນຄຣິສຕະຈັກຂອງພຣະອົງໄປຈາກໂລກນີ້. ໂລກມະນຸດຈະເຂົ້າສູ່ການທົນທຸກທໍຣະມານເປັນເວລາ 7 ປີ. ໃນຂນະນັ້ນຊົນຊາດອິສຣາເອັນຈະຕື່ນຕົວ. ໃນທີ່ສຸດພຣະຄຣິດຈະສະເດັດກັບມາໃນໂລກມະນຸດເພື່ອຈະສ້າງ ບັນລັງຂອງດາວິດທີ່ເພພັງລົງແລ້ວນັ້ນຂື້ນໃໝ່.

ຈາກບົດຮຽນທີ່ຜ່ານມານີ້ພວກເຮົາພໍສລູບໄດ້ວ່າ: (1) ມີຫຍັງແດ່ທີ່ສຳຄັນທີ່ສຸດໃນການຈະມາເປັນຄຣິສຕຽນ? (2) ຄຣິສຕຽນທີ່ມີເຊື້ອຊາດແລະເບື້ອງຫລັງແຕກຕ່າງກັນຄວນຈະສັມພັນກັນແນວໃດ? ພວກເຮົາຈະຊອກຫາຄຣິສຕະຈັກທີ່ບໍ່ເຄີຍມີບັນຫາໃນສມັຍນີ້ກໍຄົງຈະຫາບໍ່ພົບ. ສິ່ງສຳຄັນຄືພວກເຮົາຈະຕ້ອງຊ່ວຍທຸກຄົນທີ່ກ່ຽວຂ້ອງໃຫ້ຮູ້ຈັກແລະເຂົ້າໃຈບັນຫານັ້ນ ເພື່ອພວກເຮົາຈະໄດ້ແກ້ໄຂຕາມວິທີທາງທີ່ພຣະເຈົ້າໄດ້ຊົງໃຫ້ໄວ້ໃນພຣະທັມຄັມພີ. ບັນຫາເປັນເຄື່ອງມືສນິດນຶ່ງທີ່ພຣະເຈົ້າຊົງໃຊ້ເພື່ອເສີມສ້າງພວກເຮົາໃຫ້ເຕີບໃຫຍ່ແລະເຂັ້ມແຂງ. ຄຣິສຕຽນສາມາດໃຊ້ບັນຫາເປັນເຄື່ອງມືເພື່ອສະແດງເຣື່ອງຣິດອຳນາດຂອງຂ່າວປະເສີດ ໃຫ້ກັບຄົນທີ່ຍັງບໍ່ເຊື່ອ. ເຖິງພວກເຮົາຈະມີບັນຫາ ຫລື ມີການໂຕ້ຖຽງຫລາຍປານໃດກໍຕາມ, ຖ້າພວກເຮົາຍຶດໝັ້ນຢູ່ໃນພຣະທັມຄຳສອນພວກເຮົາຈະສາມາດຄືນດີກັນ. ຄວາມສັມພັນທີ່ພວກເຮົາມີໃນອົງພຣະຄຣິດຄືພື້ນຖານທີ່ເຮັດໃຫ້ເຮົາມີຄວາມສັມພັນຊຶ່ງກັນແລະກັນ. ຈາກຕົວຢ່າງຂອງຄຣິສຕະຈັກໃນພຣະສັນຍາໃໝ່ທີ່ພວກເຮົາໄດ້ຮຽນຮູ້, ພວກເຮົາສາມາດປະກາດໄດ້ວ່າຂ່າວປະເສີດເຣື່ອງພຣະເຢຊູຄຣິດມີໄວ້ສຳລັບທຸກໆຄົນ.

<u>ຄຳຖາມ:</u>

1. ທ່ານຄິດວ່າຄຣິສຕຽນສ່ວນຫລາຍມັກຈະເບິ່ງເຫັນວ່າການເປັນສະມາຊິກໂບດໃນຄະນະຕ່າງໆສຳຄັນກວ່າການເປັນຄຣິສຕຽນບໍ່? ມີທັສນະແນວໃດແດ່ທີ່ພວກເຂົາເຈົ້າສະແດງອອກຊຶ່ງພາໃຫ້ທ່ານໄດ້ຄິດແນວນັ້ນ?
2. ທ່ານມີຄວາມຄິດເຫັນແນວໃດໃນຂໍ້ຄວາມດັ່ງຕໍ່ໄປນີ້: "ຄຣິສຕຽນໃນສມັຍນີ້ບໍ່ສາມາດເວົ້າເຣື່ອງຂ່າວປະເສີດແບບແຈ່ມແຈ້ງ ເພາະເຂົາເຈົ້າບໍ່ເຄີຍມີປະສົບການເຣື່ອງຖືກຂົ່ມເຫງເໝືອນກັບພວກຄຣິສຕຽນໃນສັຕວັດແລກ."
3. ມີກົດແນວໃດແດ່, ທີ່ໄດ້ກ່າວໄວ້ຫລືໄດ້ຂຽນໄວ້, ທີ່ພວກເຮົາສາມາດຈະໃຊ້ເປັນເຄື່ອງວັດແທກຄວາມເຊື່ອຂອງແຕ່ລະຄົນເພື່ອເຮົາຈະໄດ້ຮູ້ວ່າຜູ້ນັ້ນເປັນຄຣິສຕຽນແທ້ບໍ່?
4. ມີຫຍັງແດ່ທີ່ເປັນໝາຍສຳຄັນໃຫ້ພວກເຮົາຮູ້ວ່າພຣະເຈົ້າກຳລັງທຳງານຖ້າມກາງຄົນທັງຫລາຍ?
5. ທ່ານພໍຈະຂຽນວິທີເພື່ອແກ້ໄຂການຜິດຖຽງກັນໃນຄຣິສຕະຈັກຈາກບົດຮຽນທີ່ໄດ້ຮຽນມາບໍ່? ຕົວຢ່າງ: ການຊອກຮູ້ວ່າບັນຫາແລະສິ່ງສຳຄັນມີຫຍັງແດ່, ການຊອກຫາມູນຄວາມຈິງ, ຮຽນຮູ້ເບື້ອງຫລັງຂອງພວກກ່ຽວຂ້ອງ, ພິຈາຣະນາວ່າພຣະເຈົ້າກຳລັງເຮັດຫຍັງ, ແລະສແວງຫາຄຳຕອບສຳລັບບັນຫາ.

# ບົດຮຽນທີ 8
# ຊີວິດໃຫມ່ໃນພຣະຄຣິດ

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ໂຣມ 8:1-17, 31-39
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ໂຣມບົດທີ 8
ຈຸດສໍາຄັນຂອງບົດຮຽນນີ້: ເມື່ອເຮົາຢູ່ໃນພຣະຄຣິດ, ພຣະວິນຍານບໍຣິສຸດຈະໃຫ້ເຮົາມີອໍານາດໃນຄວາມສນິດສນົມກັບພຣະອົງ, ຄວາມເຊື່ອຈະຜູກມັດເຮົາ ກັບພຣະເຈົ້າກໍຄືພຣະບິດາ ແລ້ວເຮົາກໍຈະສາມາດປະເຊີນກັບບັນຫາຫຍຸ້ງຍາກຂອງຊີວິດໄດ້ຢ່າງຫມັ້ນໃຈ.
ຄໍາຖາມເພື່ອການສໍາຫລວດ: ໃນວັນນີ້, ພຣະເຢຊູຄຣິດປ່ຽນແປງຫຍັງແດ່ໃນຕົວທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຢາກບອກໃຫ້ຮູ້ວ່າ ພຣະເຢຊູຄຣິດປ່ຽນແປງຫຍັງແດ່ໃນຊີວິດເຮົາ,ທັງພຣະພອນ ແລະ ການຮັບຜິດຊອບ.

## ຄໍານໍາ

ທຸກໆຄົນໃນລະແວກບ້ານນັ້ນ ເຫັນນາຍ ບ໊ອບ ເປັນຄົນເສັຽອົງຄະ ແລ້ວກໍເບິ່ງລາວຕໍ່າ. ລາວໃສ່ເສື້ອຜ້າ ຂາດ, ເກົ່າ ແລະ ກໍຍັງເປິເປື້ອນອີກດ້ວຍ. ຂ້າພະເຈົ້າ ຢາກຈະເປັນພະຍານໃຫ້ກັບລາວ, ແຕ່ລາວ ກໍບໍ່ມີຄວາມສົນໃຈໃຍດີຫຍັງເລີຍ. ຄົນທັງຫລາຍເວົ້າວ່າ ຂ້ອຍບໍ່ຈັກຈະຊ່ອຍລາວແບບໃດ ຄົງຈະເປັນໄປບໍ່ໄດ້ດອກ. ລາວເປັນຄົນ ເສັຽອົງຄະຫລາຍໂພດ.

ຫລັງຈາກທີ່ພຣະເຈົ້າໄດ້ຍົກຍ້າຍຂ້າພະເຈົ້າໄປຮັບໃຊ້ຢູ່ບ່ອນອື່ນ, ຫລາຍປີຜ່ານໄປ ຂ້າພະເຈົ້າກໍໄດ້ມີໂອກາດກັບຄືນໄປເທສນາທີ່ໂບດເກົ່ານັ້ນອີກ. ຊາຍຫນຸ່ມຄົນນຶ່ງ ນັ່ງທີ່ແຖວຫລັງສຸດ, ລາວນຸ່ງເຄື່ອງຮຽບຮ້ອຍ,ແຕ່ງຕົວດີ, ສງ່າຜ່າເຜີຍ. ຫລັງຈາກນະມັສການເລີກແລ້ວ ລາວໄດ້ຍ່າງເຂົ້າມາຖາມ ຂ້າພະເຈົ້າວ່າຈື່ລາວບໍ່. ຂ້າພະເຈົ້າກໍຕອບໄປຕາມຕົງໂລດວ່າ ຈື່ບໍ່ໄດ້. ລາວກໍໄດ້ບອກຂ້າພະເຈົ້າວ່າ ຂ້ອຍກໍແມ່ນຜູ້ທີ່ເສັຽອົງຄະ ແຕ່ກ່ອນນັ້ນລະ.

ເປັນໄປໄດ້ບໍ່? ລາວກາຍມາເປັນຄຣິສຕຽນ. ພຣະເຈົ້າໄດ້ເອົາຊີວິດໃຫມ່ໃຫ້ແກ່ລາວ, ແລະພຣະວິນຍານບໍຣິສຸດກໍໄດ້ໃຫ້ອໍານາດແກ່ລາວ ເພື່ອລາວຈະໄດ້ມີຊີວິດຄຣິສຕຽນ. ບໍ່ຫນ້າເຊື່ອແທ້ໆແຕ່ມັນກໍເປັນໄປແລ້ວວັນນີ້ພວກເຮົາຈະມາຮຽນນໍາກັນ, ພິຈາຣະນານໍາກັນ ເຖິງຊີວິດ ໃຫມ່ທີ່ມາຈາກຄວາມເຊື່ອໃນອົງພຣະເຢຊູຄຣິດ.

ອໍານາດໃນການເອົາຊະນະຄວາມບາບແລະຄວາມຕາຍ (8:1-13)
ຄໍາວ່າ "ເຫດສັນນັ້ນ" ໃນ 8:1 (ໃນພາສາໄທ) ແລະຄໍາວ່າ "ບັດນີ້" (ໃນພາສາລາວ) ໄດ້ບັນທຶກເຕັມທີ່ ໃນການສລູບນີ້. ເພາະວ່າການປົດປ່ອຍໃຫ້ຫລຸດພົ້ນອອກຈາກໂທດນັ້ນ ແມ່ນຢູ່ໃນພຣະເຢຊູ ພຣະຜູ້ດຽວ, ຜູ້ທີ່ເຊື່ອທັງຫລາຍຈະບໍ່ໄດ້ເປັນທາດອີກຕໍ່ໄປ. ກົດຂອງພຣະວິນຍານໃນພຣະຄຣິດນັ້ນໄດ້ເຮັດໃຫ້ພວກເຂົາພົ້ນຈາກກົດຂອງພຣະບັນຍັດທີ່ເຮັດບໍ່ໄດ້. ບັດນີ້ການລົງໂທດຈຶ່ງບໍ່ມີ. ພວກທີ່ເຊື່ອອາດເອີ້ນໄດ້ວ່າ ເປັນຄົນທີ່ພົ້ນຂໍ້ຫາທັງຫມົດແລ້ວ ມີແຕ່ກົດ

ວິນຍານຂອງພຣະເຈົ້າ ຈະນຳພາພວກເຂົາໃຫ້ຢູ່ໃນພຣະເຈົ້າດ້ວຍຕົນເອງ.

ຖ້າພວກເຮົາຈະເບິ່ງຄືນໃນ ໂຣມບົດທີ 7 ຂໍ້ 14 ຫາ 21 ພວກເຮົາກໍຈະເຫັນວ່າ ຄວາມບາບໃນຕົວເຮົາເອງເປັນຜູ້ຊັກຈູງ ໃຫ້ເຮົາກະທຳບາບ. ທີ່ແທ້ຈິງແລ້ວ ພວກເຮົາກໍບໍ່ຢາກເຮັດເລີຍ. ເຮົາບໍ່ມີກຳລັງອັນໃດທີ່ຈະຕ້ານທານການບຸກລຸກອັນແຂງແກ່ນນີ້ໄດ້. ໃນຂໍ້ 24 ຈຶ່ງໄດ້ ກ່າວເຖິງວ່າ ພຣະເຢຊູເປັນຜູ້ໄຖ່ເອົາຈິດໃຈຂອງພວກເຮົາເຂົ້າມາຫາພຣະເຈົ້າ, ເຮັດໃຫ້ພວກເຮົາມີຄວາມສັມພັນກັບພຣະເຈົ້າ, ແລະມີຊັຍຊະນະໃນພຣະເຢຊູ.

ເສັ້ນທາງທີ່ເອົາຊະນະ ພວກເຮົາກໍເຫັນຢ່າງຈະແຈ້ງໃນ ໂຣມ 8:3-4. ພຣະບັນຍັດບໍ່ສາມາດທຳລາຍອຳນາດຄວາມບາບ ແລະຄວາມຕາຍໄດ້ ເພາະວ່າຍັງອ່ອນກຳລັງຢູ່. ຈຳເປັນຕ້ອງຜ່ານທາງມະນຸດຄົນໃດຄົນນຶ່ງ. ດັ່ງນັ້ນລະ ພຣະເຈົ້າຈຶ່ງໄດ້ສົ່ງ ພຣະເຢຊູຄຣິດ, ພຣະບຸດອົງດຽວຂອງພຣະອົງ, ມາເປັນຜູ້ຮັບບາບທັງຫມົດຂອງມະນຸດ ເພື່ອມາທຳລາຍຄວາມບາບ ແລະຄວາມຕາຍ ແລະນຳໄປສູ່ຄວາມສຳເຣັດ.

ຂໍ້ 5 ຫາ 12 , ໂປໂລຍັງໄດ້ຍົກເອົາຊີວິດເກົ່າຂຶ້ນມາບອກວ່າ ຊີວິດເຮົາ ໄດ້ຖືກຄວບຄຸມໂດຍເນື້ອຫນັງ. ແຕ່ຊີວິດໃຫມ່ແມ່ນຖືກຄວບຄຸມ ເພີ້ມກຳລັງໂດຍພຣະວິນຍານ. ໃນຂໍ້ 9 ໂປໂລເນັ້ນອີກວ່າ "ຖ້າແມ່ນ ພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວພວກເຈົ້າກໍບໍ່ຢູ່ຝ່າຍມະນຸດແຕ່ຢູ່ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພຣະອົງ."

ໃນຂໍ້ 13 "ເພາະຖ້າເຈົ້າທັງຫລາຍດຳເນີນຊີວິດຕາມຢ່າງເນື້ອກາຍ ພວກເຈົ້າຄົງຈະຕາຍ ແຕ່ຖ້າໂດຍຣິດພຣະວິນຍານພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອຫນັງເສັຽ ເຈົ້າຄົງຈະມີຊີວິດຢູ່" ຄຳວ່າການຕາຍນີ້ ບໍ່ມີມະນຸດຄົນໃດ ຈະສາມາດເຮັດເອງ ຫລື ຫລີກລ້ຽງໄດ້ ແລະຈະທຳລາຍການຂອງເນື້ອຫນັງໄດ້ກໍຕ້ອງອາສັຍຣິດເດດຂອງພຣະວິນຍານ.

<u>ອຳນາດໃຫ້ກາຍມາເປັນບຸດແລະຮັບມໍຣະດົກ</u> (8:14-17)

ຂໍ້ 14 ນີ້ມີຄວາມຫມາຍວ່າ ຜູ້ທີ່ປະຕິບັດຕົວເອງ, ສືບຕໍ່ກ້າວຫນ້າ, ເຮັດເປັນປະຈຳໂດຍການນຳພາຂອງພຣະວິນຍານຜູ້ນັ້ນແຫລະເປັນບຸດຂອງພຣະເຈົ້າ. ໃນວັກນີ້ ພວກເຮົາຈະເຫັນຢູ່ສອງຢ່າງດ້ວຍກັນຄື ການເປັນບຸດ ແລະ ການຮັບມໍຣະດົກ. ການເປັນລູກ ແມ່ນແນໃສ່ຜູ້ທີ່ມີຄວາມສັມພັນກັບພຣະເຈົ້າ ແລະການຮັບມໍຣະດົກນັ້ນ ແມ່ນການມີຄວາມສັມພັນພ້ອມດ້ວຍການຮັກສາພັນທະສັນຍາ. ຊີວິດໃຫມ່ໃນພຣະຄຣິດ ແມ່ນການໄດ້ຮັບທັງສອງຢ່າງ.

ຍິ່ງໄປກ່ວານັ້ນ ພຣະຄຳຍັງໄດ້ສອນພວກເຮົາຕໍ່ໄປອີກວ່າການເຊື່ອຟັງພຣະຄຣິດແມ່ນຄວາມຫມັ້ນໃຈໃນຄວາມສັມພັນໃນພຣະເຈົ້າ. ການປະຕິບັດໃນການເປັນລູກນີ້ ກໍຍັງແມ່ນເຄື່ອງຫມາຍຂອງຄວາມລອດ ທີ່ສະແດງໃຫ້ເຫັນວ່າເຮົາຍັງມີຄວາມສັມພັນກັບພຣະເຈົ້າຢູ່.

ໃນຂໍ້ທີ 15 ຍັງໄດ້ກ່າວສອງຄຳທີ່ຫນ້າຈັບໃຈຫລາຍຄື ບຸດຂອງພຣະເຈົ້າ ແລະ "ອັບບາ"ຄືພຣະບິດາ. ພວກເຮົາກາຍເປັນລູກດ້ວຍການຊົງໄຖ່. ຄຳວ່າ "ອັບບາ" ຊຶ່ງມາຈາກພາສາ ອາລາແມັກ, ຄົນຍິວມັກໃຊ້ຄຳນີ້ ເອີ້ນພໍ່. ຄຳເວົ້ານີ້ກໍຍັງເປັນຄຳເວົ້າທີ່ ມີຄວາມອົບອຸ່ນ, ເຊື່ອຖື, ສ່ວນຕົວ, ພຣະເຢຊູເອງກໍມັກໃຊ້ຄຳນີ້.

ຂໍ້16 ແລະ 17 ຍັງກ່າວເຖິງວ່າ ຖ້າພວກເຮົາຫາກໃຫ້ພຣະວິນຍານບໍຣິສຸດຊົງນໍາແລ້ວ ພວກເຮົາກໍຈະໄດ້ກາຍມາເປັນບຸດຂອງພຣະເຈົ້າ ຍັງບໍ່ທໍ່ນັ້ນ ພວກເຮົາກໍຍັງຈະໄດ້ມີສ່ວນຮ່ວມໃນການຮັບມໍຣະດົກກັບພຣະເຢຊູຄຣິດອີກດ້ວຍ. ນີ້ຄືການຮັບປະກັນ ໃນການນໍາພາຂອງພຣະວິນຍານບໍຣິສຸດ.

<u>ອໍານາດໃນການເອົາຊະນະຄວາມທຸກລໍາບາກ</u> (8:18-30)
ໂປໂລເຫັນຄວາມສາມາດ ຫ້າວຫັນ ກ້າຫານທຸກ ທີ່ຈະຕິດຕາມພຣະເຢຊູ. ລາວຈຶ່ງໄດ້ເລັງໃຫ້ເຫັນເຖິງຊີວິດ ຈະມາວ່າບໍ່ມີອັນໃດຈະປຽບທຽບໄດ້. ຜູ້ທີ່ເຊື່ອທັງຫລາຍ ຄວນຈະວາງໃຈໃນພຣະວິນຍານບໍຣິສຸດ ແລະ ຄໍາສັນຍາຂອງພຣະເຈົ້າທຸກປະການ. ຂໍ້ 26 ຫາ 28 ບອກວ່າພຣະອົງຊົງສອດສ່ອງຮູ້ໃຈມະນຸດ ພຣະອົງຈະເຮັດທຸກຢ່າງໃຫ້ເປັນໄປໃນທາງທີ່ດີ ສໍາລັບຜູ້ທີ່ເຊື່ອໃນພຣະອົງ. ຂໍ້ 29 ແລະ 30 ແມ່ນພຣະພອນທີ່ພຣະອົງຊົງມອບໃຫ້ແກ່ຄົນທີ່ເຊື່ອ ຄື ຄວາມຊອບທັມ ແລະ ສະງ່າຣາສີດ້ວຍ.

<u>ອໍານາດໃນການປະຕິບັດຄວາມເຊື່ອ</u> (8:31-39)
ຜູ້ທີ່ເຊື່ອທັງຫລາຍ ອາດຈະບໍ່ຫມັ້ນໃຈໃນຄວາມເຊື່ອຂອງຕົນເອງ ແຕ່ວ່າຖ້າເຊື່ອຢ່າງແທ້ຈິງແລ້ວ ແມ່ນຕ້ອງສະແດງອອກໃນການປະຕິບັດ ເຖິງຈະຮັບປະກັນໄດ້ຢ່າງແນ່ນອນ. ໃນຕອນນີ້ ໄດ້ແບ່ງເປັນສາມຂໍ້ດັ່ງນີ້:

1. ການຮັບປະກັນ ຈະພົບໃນການກະທໍາຂອງພຣະເຈົ້າ. ຂໍ້ 33 "ໃຜອາດຈະຟ້ອງຄົນທັງຫລາຍທີ່ພຣະເຈົ້າໄດ້ຊົງເລືອກໄວ້ແລ້ວ ພຣະເຈົ້າໄດ້ຊົງປົດປ່ອຍເຂົາແລ້ວ" ເບິ່ງເຫມືອນກັນກັບວ່າຢູ່ໃນສານ ແຕ່ກໍເປັນດັ່ງນັ້ນແທ້ ເພາະພຣະເຢຊູຊົງປົດປ່ອຍຄົນທັງຫລາຍໃນນາມຂອງພຣະອົງ. ບໍ່ມີສິ່ງໃດເຫນືອກວ່າໄມ້ກາງແຂນ, ການສິ້ນພຣະຊົນແມ່ນການໄຖ່ ຂອງພຣະເຈົ້າຕໍ່ມວນມະນຸດທັງຫລາຍ.

2. ການຮັບປະກັນ ຈະພົບທີ່ ການປົດປ່ອຍຄົນບາບ ແລະ ການສະຖິດໃນພວກເຂົາດ້ວຍ. ຂໍ້ 34 "ໃຜຈະລົງໂທດເຂົາອີກ ພຣະເຢຊູຄຣິດໄດ້ຊົງສິ້ນພຣະຊົນແລ້ວ ແລະຫລາຍກວ່ານັ້ນອີກ ໄດ້ຊົງຄືນພຣະຊົນແລ້ວ" ມີແຕ່ພຣະເຢຊູເທົ່ານັ້ນທີ່ຈະປັບໂທດ ແລະ ຊໍາຣະໂທດໄດ້. ການສິ້ນພຣະຊົນ, ການຄືນພຣະຊົນ, ແລະການສະເດັດສູ່ສວັນ ຍັງຕ້ອງຢູ່ໃນຄວາມເຊື່ອທຸກໆຄົນ ແລ້ວ ພຣະອົງຈະສະຖິດຢູ່ນໍາພວກເຂົາ.

3. ການຮບັປະກັນ ຈະພົບທີ່ຄວາມຮັກອັນປະເສີດຂອງພຣະອົງ. ຂໍ້ 35 ໂປໂລ ໄດ້ເຕືອນເຖິງຄວາມຢ້ານກົວ 7 ຢ່າງທີ່ຈະເຮັດໃຫ້ພວກເຮົາຂາດຈາກຄວາມຮັກ. ແຕ່ໃນຂໍ້ທີ 37 ກໍໄດ້ຢັ້ງຢືນເຖິງຊັຍຊະນະຂອງພວກເຮົາໃນຄວາມເຊື່ອ. ໃຫ້ພວກເຮົາມີຄວາມເຊື່ອຢ່າງຫມັ້ນຄົງ ອໍານາດເຫລົ່ານັ້ນ ບໍ່ອາດຍິ່ງໃຫຍ່ກວ່າຄວາມຍິ່ງໃຫຍ່ຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາທັງຫລາຍໄດ້.

<u>ສະຫລຸບ:</u>
ຊີວິດໃຫມ່ ນໍາໄປສູ່ການເປັນຜູ້ເຊື່ອຢ່າງແທ້ຈິງ. ພຣະວິນຍານບໍຣິສຸດນໍາຊີວິດຄຣິສຕຽນໄປສູ່ຄວາມສັມພັນກັບພຣະເຈົ້າ ແລະເຮັດໃຫ້ເຮົາມີອໍານາດໃນການຕໍ່ສູ້ຄວາມບາບ, ອໍານາດໃນການເປັນລູກ ແລະໄດ້ຮັບມໍຣະດົກຮ່ວມກັບພຣະຄຣິດ ແລະ ກໍຍັງຮັບປະກັນເຖິງຊີວິດອັນຕລອດໄປເປັນນິດດ້ວຍ.

ຄຳຖາມ:

1. ຕັ້ງແຕ່ທ່ານເຂົ້າມາເປັນຄຣິສຕຽນແລ້ວ, ໃນຊີວິດຂອງທ່ານມີຫຍັງປ່ຽນແປງແດ່?
   ແມ່ນຫຍັງໃນຕໍ່ໄປ ທີ່ພຣະຄຣິດຈະຊົງປ່ຽນແປງທ່ານ?

2. ທ່ານຮູ້ສຶກສະບາຍໃຈບໍ່ ທີ່ທ່ານມີຄວາມສັມພັນກັບພຣະເຈົ້າ ໂດຍຜ່ານພຣະເຢຊູຄຣິດ?
   ໃຫ້ເວົ້າຄວາມຈິງວ່າ ມີຫຍັງທີ່ຈະຊ່ວຍໃຫ້ທ່ານເສີມຂຍາຍຄວາມກ້າວໜ້າໃນພຣະເຢຊູຄຣິດບໍ່?

3. ບາງຄັ້ງບາງຄາວ ທ່ານຮູ້ສຶກວ່າທ່ານໄດ້ເຮັດບາບໂດຍເຈຕນາຫລືບໍ່?
   ທ່ານມີຄວາມຮູ້ສຶກຢ່າງໃດທີ່ທ່ານເຈຕນາເຮັດນັ້ນ?

4. ເວລາທ່ານມີບັນຫາ, ໂຣມ 8:28 ໃຫ້ການຮັບປະກັນຫຍັງກັບທ່ານແດ່?

5. ແມ່ນຫຍັງທີ່ທ່ານເຫັນວ່າພຣະເຈົ້າຮັກ ແລະ ເປັນຫ່ວງເປັນໃຍທ່ານ?

6. ເປັນຫຍັງຜູ້ທີ່ ມີຄວາມເຊື່ອຈິ່ງບໍ່ຕ້ອງຢ້ານສູນເສັຽຄວາມລອດພົ້ນ?

# ບົດຮຽນທີ 9
# ການປະກາດເພື່ອພຣະຄຣິດໂດຍບໍ່ເຫັນແກ່ຕົວ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: 2 ໂກຣິນໂທ 4:7-11; 5:11-21
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: 2 ໂກຣິນໂທ ບົດ 4 ແລະ ບົດ 5
ຈຸດສໍາຄັນຂອງບົດຮຽນນີ້: ເພາະວ່າ ພຣະເຈົ້າໄດ້ເຮັດໃຫ້ມີການຄືນດີ ຣະຫວ່າງເຮົາກັບພຣະຄຣິດ, ພວກເຮົາກໍຄວນຈະແບ່ງປັນຂ່າວການຄືນດີນີ້ ໃຫ້ກັບຄົນອື່ນ ດ້ວຍການນ້ອມ ເຊື່ອຟັງໃນພຣະເຈົ້າ.
ຄໍາຖາມເພື່ອການສໍາຫລວດ: ທ່ານກໍາລັງຮັບໃຊ້ພຣະຄຣິດ ແລະແບ່ງປັນຂ່າວນີ້ດ້ວຍວິນຍານຈິດອັນໃດ ? ຫລື ທ່ານກໍາລັງເຮັດຫຍັງຢູ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຊີ້ໃຫ້ເຫັນ ວ່າ ພຣະວິນຍານທີ່ພວກເຮົາກໍາລັງຮັບໃຊ້ຢູ່ນີ້ ແມ່ນພວກເຮົາຮັບໃຊ້ພຣະຄຣິດ ແລະ ແບ່ງປັນຂ່າວດີຂອງພຣະອົງ.

## ຄໍານໍາ

ທ່ານເຄີຍເຫັນຄົນທີ່ມັກກໍ່ເຣື່ອງ ແລະ ມັກສ້າງບັນຫາຫລືບໍ່? ບໍ່ວ່າໃນກໍຣະນີດີຫລືຮ້າຍຄົນໆນັ້ນຈະມັກສ້າງບັນຫາໃຫ້ມີຂຶ້ນສເມີ. ບໍ່ວ່າຈະຢູ່ຜູ້ດຽວ ສອງຄົນ ຫລືເປັນຫມວດເປັນຫມູ່ກໍຕາມ ລາວຈະສ້າງບັນຫາໃຫ້ເກີດຂຶ້ນ. ຄົນທີ່ມັກເປັນຢ່າງນີ້ ສ່ວນຫລາຍແລ້ວກໍແມ່ນຄົນທີ່ບໍ່ມີຄວາມຊື່ນບານໃນຕົວຂອງເຂົາເອງ. ເຂົາເຫັນຕົວເອງຕໍ່າ, ເຂົາຮູ້ສຶກວ່າຄົນອື່ນຈະບໍ່ຮັກເຂົາ, ເຂົາຮູ້ສຶກວ່າຄົນອື່ນຈະບໍ່ຮັບຮູ້ເຂົາ ດັ່ງນັ້ນເຂົາຈຶ່ງໄດ້ສະແດງອອກໃນທ່າທີທີ່ເຂົາຄິດ.

ອີກອັນນຶ່ງ, ທ່ານກໍຄົງຈະເຄີຍເຫັນ ຄົນທີ່ມີຄວາມສັມພັນກັບຄົນອື່ນດີ ມັກຊ່ວຍເຫລືອຄົນອື່ນ ມັກນໍາຄວາມຖືກຕ້ອງປອງດອງກັນມາໃຫ້ຄົນອື່ນ. ຄົນທີ່ຈະເປັນຢ່າງນັ້ນໄດ້ ກໍຕໍ່ເມື່ອເຂົາມີພຣະເຈົ້າ ເປັນຄົນເຊື່ອຫມັ້ນໃນຕົນເອງ ແລະເປັນຄົນທີ່ລົງເອີ່ຍກັບຄົນອື່ນໄດ້ດີ.

ໃນບົດຮຽນນີ້ນີ້ ພວກເຮົາຈະຮຽນເຣື່ອງ ການເຂົ້າກັບຄົນອື່ນ, ການເຂົ້າກັບຄົນອື່ນທີ່ຖືກຕ້ອງນັ້ນ ຕ້ອງມີຄວາມສັມພັນກັບພຣະເຈົ້າ ຢ່າງແຫນ້ນແຟ້ນເສັຽກ່ອນ. ການສິ້ນພຣະຊົນ ຂອງພຣະເຢຊູເທິງໄມ້ກາງແຂນ ແມ່ນການສະແດງເຖິງການເປັນອັນດຽວກັນກັບຄົນບາບ ແລະເພື່ອຈະນໍາຄົນບາບກັບມາຄືນດີກັບພຣະເຈົ້າ. ຜູ້ທີ່ຈະນໍາຜູ້ອື່ນມາຄືນດີກັບພຣະເຈົ້ານັ້ນກໍຕ້ອງແມ່ນ ຄົນທີ່ມັກສ້າງຄວາມສັມພັນທະໄມຕຣີ ໂດຍບໍ່ຄິດເຫັນແກ່ຕົວເອງ.

ອໍານາດໃນການເຮັດໃຫ້ຄືນດີ (2 ກຣທ. 4:7-11)
ໃນ 2ໂກຣິນໂທ 3:1- 4:6, ໂປໂລໄດ້ອະທິບາຍເຖິງຄວາມເລິກເຊິ່ງຂອງພຣະກິດຕິຄຸນ. ລາວໄດ້ອະທິບາຍວ່າ ພວກທ່ານ ເປັນຕົວຫນັງສື ທີ່ພຣະເຈົ້າໄດ້ຈາລຶກໄວ້ ດ້ວຍພຣະວິນຍານຂອງພຣະອົງເອງ ເພື່ອນໍາຄົນທັງຫລາຍ ໃຫ້ມາຄືນດີກັບພຣະອົງ.

ຕໍ່ມາ ໃນ 2 ໂກຣິນໂທ 4:7-11 ກໍຢາກຄ້າຍຄືກັນແດ່ກັບ ບົດ 3:1--4:6. ແຕ່ໃນນີ້ແມ່ນຄຳທ້າທາຍ ຄືໃຫ້ໃຊ້ພຣະກິດຕິຄຸນ ຢ່າງມີຄວາມໝັ້ນໃຈ ແລະ ວາງໃຈໃນການຊົງປະທານອຳນາດຂອງພຣະວິນຍານບໍຣິສຸດ. ໂປໂລ ລາວເປັນຄົນທີ່ມີຄວາມເຊື່ອໝັ້ນວ່າອຳນາດ ແລະ ກຳລັງທີ່ຢູ່ໃນໂລກນີ້ ບໍ່ມີອຳນາດໃດໆທີ່ຈະເໜືອກ່ວາອຳນາດຂອງພຣະເຈົ້າ. ໂປໂລກ່າວວ່າ ພວກເຮົາ ມີການປະຕິບັດຮັບໃຊ້ ຢູ່ນີ້ກໍແມ່ນ ກົດຣະບຽບໃໝ່ ໃນການທຳງານຂອງພຣະວິນຍານບໍຣິສຸດ ເພື່ອໃຫ້ພວກເຮົາມີສິດເສຣີພາບ ມີຄວາມເປັນເອກຣາດ ແລະມີຊີວິດຊີວາທີ່ພໍພຣະທັຍຂອງພຣະເຈົ້າ. ຖ້າຜູ້ໃດຜູ້ນຶ່ງຮັບໃຊ້ວຽກງານ ແມ່ນລາວຮັບໃຊ້ຕາມຄຳທ້າທາຍ ດ້ວຍຄວາມໝັ້ນໃຈ ເພາະວ່າ ເປັນອຳນາດທີ່ມາຈາກພຣະເຈົ້າ ອອກໄປຫາບຸກຄົນ ແຕ່ໃຫ້ເຂົ້າໃຈວ່າບໍ່ແມ່ນອອກມາຈາກຜູ້ປະກາດແຕ່ມາຈາກພຣະເຈົ້າ.

"ຂອງມີຄ່າ" ໃນຂໍ້ທີ 7 ນີ້ໄດ້ໝາຍເຖິງສງ່າຣາສີຂອງພຣະເຈົ້າ ທີ່ເຮົາເຫັນໃນພຣະເຢຊູຄຣິດ. ຂອງທີ່ມີຄ່ານີ້ ໂປໂລກ່າວວ່າຢູ່ໃນພາຊະນະດິນນີ້ ແມ່ນເພື່ອສະແດງໃຫ້ເຫັນວ່າ "ພລັງພິເສດ" ແມ່ນມາຈາກພຣະເຈົ້າ ບໍ່ແມ່ນມາຈາກມະນຸດ. ພາຊະນະດິນ ຄືງຈະເປັນຂອງທີ່ຖືກ, ແຕກງ່າຍ, ຊອກຊື້ໄດ້ທຸກງສະຖານທີ່ຕາມຕລາດທົ່ວໄປໃນເມືອງໂກຣິນໂທ.

ຂໍ້ 8-11 ໄດ້ບົ່ງບອກເຖິງແນວຄິດຂອງໂປໂລວ່າ ລາວເປັນຜູ້ປະກາດຢ່າງທ່ອງແທ້, ລາວໄດ້ສູ້ຊົນຕໍ່ຄວາມທຸກນາໆປະການ. ແຕ່ສິ່ງເຫລົ່ານັ້ນກໍບໍ່ໄດ້ຈຳກັດການປະກາດຂອງລາວ.

ຜູ້ປະກາດທີ່ແທ້ຈິງ ຈະຕ້ອງມີປະສົບການທຸກໆວັນ. ປະສົບການທີ່ເຮົາໄດ້ມາ ຈະເປັນການທໍຣະມານ, ເປັນການໂສກເສົ້າ, ການໂດດດ່ຽວກໍຕາມ ນັ້ນລະຄືການປາກົດຂອງພຣະເຢຊູໃນຮ່າງກາຍອັນອ່ອນແອຂອງພວກເຮົາ. ຄົນອື່ນອາດຈະເຫັນພຣະເຢຊູ ແລະສະງ່າຣາສີຂອງພຣະອົງ ໃນການສູ້ຊົນຂອງພວກເຮົາ. ບໍ່ແມ່ນແຕ່ທໍ່ນັ້ນ ຄວາມຕາຍຍັງປາກົດໃນຜູ້ຮັບໃຊ້ທຸກໆບ່ອນ. ຄວາມຕາຍໃນທີ່ນີ້ ແມ່ນການຕາຍ ເພາະເຫັນແກ່ພຣະນາມຂອງພຣະເຢຊູ (4:10-11). ການປະກາດ ແລະການສ້າງການຄືນດີນີ້ ແມ່ນຂຶ້ນກັບແຕ່ລະບຸກຄົນ ວ່າຈະໃຊ້ວິທີການຫລືຄວາມສາມາດຢ່າງໃດ, ແຕ່ສິ່ງທີ່ຫລີກລຽງບໍ່ໄດ້ກໍຄືພລັງຂອງພຣະເຈົ້າ. ພວກເຮົາຄວນຮັກສາຂອງມີຄ່ານີ້ໄວ້ໃນ ພາຊະນະດິນ ຢູ່ສເມີ.

<u>ຄວາມແນ່ນອນໃນການປະກາດການຄືນດີ</u> (2 ກຣທ 4:12--5:10)

ໂປໂລກ່າວອີກວ່າຜູ້ທີ່ປາຖນາຈະປ່າວປະກາດໃນການຄືນດີນີ້ ຄວາມຕາຍແມ່ນກຳລັງສຳແດງຣິດໃນຕົວຂອງເຂົາຢູ່, ແລະພຣະເຈົ້າກໍກຳລັງສຳແດງຣິດເຊັ່ນດຽວກັນ. ເຊື່ອພຣະເຈົ້າໃນການເກັບກ່ຽວ ແມ່ນການສືບຕໍ່ທຳງານໃນທົ່ງນາຂອງພຣະອົງ. ເຊື່ອພຣະເຈົ້າ, ປະກາດເຣື່ອງຂອງພຣະເຈົ້າ ແມ່ນການປະເຊີນກັບຄວາມຫຍຸ້ງຍາກ ສັບສົນ. ແຕ່ຈົ່ງຮັບຮູ້ໄວ້ເຖິດວ່າ ຜູ້ໃດທົນທຸກທໍຣະມານເພື່ອພຣະເຈົ້າ ຜູ້ນັ້ນໄດ້ສ້າງຊີວິດຝ່າຍວິນຍານເພື່ອຄົນອື່ນດ້ວຍ. (4:11-14)

ຄວາມແນ່ນອນໃຈນີ້ ແມ່ນສິ່ງນຶ່ງທີ່ປ້ອງກັນເພື່ອຜູ້ທີ່ຮັບໃຊ້ພຣະເຈົ້າຈະບໍ່ເສັຽໃຈໃນການກະທຳ. ເຣື່ອງເລັກນ້ອຍຫລື ບັນຫາປີກຍ່ອຍ ຈະມາທຽບຫຍັງກັບສະງ່າຣາສີຂອງພຣະເຈົ້າໄດ້. ການຮັບຮູ້ຊີວິດອັນຕລອດໄປນັ້ນ ໄດ້ສ້າງຄວາມແນ່ນອນໃຈ ໃຫ້ແກ່ຜູ້ທີ່ປ່າວປະກາດໃນການຄືນດີ (4:15-18)

ຄວາມແນ່ນອນໃຈນີ້ ພວກເຮົາຍັງໄດ້ເຫັນ ໃນໝູ່ຄົນທີ່ເຊື່ອ. ພວກເຂົາມີຄວາມຫວັງ ແລະມີຄວາມໝັ້ນໃຈໃນການຮັບເອົາພຣະເຈົ້າຂອງພວກເຂົາ. (5:1-10)

ພວກເຂົາຈະຕັ້ງໜ້າ ແລະຈະໄດ້ເຫັນການປ່ຽນສະພາບ ໄປເປັນຊີວິດທີ່ຕລອດໄປໃນອັນສຸດທ້າຍ. ຄວາມໝັ້ນໃຈນີ້ ແມ່ນເປົ້າໝາຍຂອງຜູ້ເຊື່ອທຸກຄົນ--ບໍ່ວ່າຈະເປັນຫລືຕາຍກໍຕາມ. (5:9-10)

<u>ການກະຕຸ້ນໃນການປະກາດການຄືນດີ</u> (2ກຣທ 5:11:21)
ວຽກງານການປະກາດການຄືນດີນີ້ ແມ່ນວຽກທີ່ດີເລີດ ແຕ່ບາງຄັ້ງກໍເຕັມໄປດ້ວຍບັນຫາ. ຖ້າຢ່າງນັ້ນເປັນຫຍັງພວກເຮົາຈຶ່ງພາກັນຮັບວຽກນີ້? ຂໍ້ຄວາມຕໍ່ໄປນີ້ຈະຊ່ວຍພວກເຮົາຕອບບັນຫານີ້ໄດ້

ການກະຕຸ້ນອັນທໍາອິດແມ່ນພຣະເຈົ້າ.(5:11)ມາເບິ່ງຄໍາເວົ້າທີ່ວ່າ "ເພາະເຫດທີ່" ເມື່ອເຫັນຄໍາເວົ້ານີ້ ພວກເຮົາກໍຈະຮູ້ທັນທີວ່າ ຕ້ອງເປັນຍ້ອນອັນໃດອັນນຶ່ງ ຫລືເຫດໃດເຫດນຶ່ງ. ໃນນີ້ໂປໂລໄດ້ຂຽນໄວ້ວ່າ " ເພາະເຫດທີ່ເຮົາຮູ້ຈັກຄວາມຢໍາເກງອົງພຣະຜູ້ເປັນເຈົ້າແລ້ວ " ຖ້າພວກເຮົາຫາກເບິ່ງຄືນໄປອີກຂໍ້ນຶ່ງ ຄື ຂໍ້ 10 ເຮົາຈະເຫັນການຕັດສິນຕໍ່ໜ້າບັນລັງທຸກຄົນ. ຄວາມຢໍາເກງໃນຂໍ້ 11 ຈຶ່ງສໍາຄັນຫລາຍຕໍ່ຜູ້ທີ່ເຊື່ອແລະຜູ້ຮັບໃຊ້ທຸກຄົນ.

ການກະຕຸ້ນອັນທີສອງ ແມ່ນການເຫັນຄົນອື່ນຫລາຍກວ່າຕົວເຮົາເອງ (5:11-13). ເຫດຜົນຂອງໂປໂລກ່າວດັ່ງນີ້ກໍເພື່ອປົກປ້ອງບັນດາຜູ້ຕິດຕາມ, ບັນດາຜູ້ປ່າວປະກາດ ແລະຄໍາເຜີຍແຜ່ຂອງລາວ ກໍບໍ່ແມ່ນເພື່ອໃຜຜູ້ນຶ່ງ, ແຕ່ເພື່ອຊາວໂກຣິນໂທ ທີ່ຈະສາມາດຕອບຄໍາຖາມຂອງພວກໂອ້ອວດສິ່ງທີ່ຢູ່ພາຍນອກໄດ້. ພວກໂອ້ອວດນີ້ ມັກສ້າງບັນຫາຫລາຍຢ່າງຄື ພູມໃຈໃນຕົວເອງ, ຢາກໃຫ້ຄົນອື່ນຍົກຍ້ອງຕົວ ດັ່ງນີ້ເປັນຕົ້ນ.

ບາງຄົນຊໍ້າພັດຖືວ່າໂປໂລເປັນຄົນເສັຽຈິດ(5:13). ການບໍ່ເຫັນແກ່ຕົວຂອງໂປໂລນັ້ນ ແມ່ນລາວຈະປົກກະຕິຫລືເສັຽຈິດກໍແມ່ນລາວເຮັດເພື່ອຊາວ ໂກຣິນໂທທັງໝົດ. ຖ້າຜູ້ໃດຈະທໍາງານດ້ານນີ້ ຕ້ອງບໍ່ເຫັນແກ່ຕົວ.

ການກະຕຸ້ນອັນທີສາມ ກໍຄືຄວາມຮັກຂອງພຣະຄຣິດທີ່ມີຕໍ່ທຸກຄົນ (5:14-15). ຄວາມຮັກ ຂອງພຣະອົງໄດ້ບັງຄັບພວກເຮົາທຸກຄົນ ໃຫ້ພວກເຮົາເຄື່ອນໄຫວ ປ່າວປະກາດໃນການເຮັດໃຫ້ມີການຄືນດີ.
ລໍາຕົ້ນຂອງການກະຕຸ້ນແມ່ນມາຈາກຄວາມຮັກຂອງພຣະຄຣິດ ທີ່ພວກເຮົາພົບໃນການສະລະພຣະຊົນຂອງພຣະອົງເພື່ອຄວາມລອດຈະໄດ້ມາເຖິງທຸກງຄົນ. ທຸກຄົນໄດ້ຮັບຄວາມຕາຍຈາກຄົນໆດຽວຄື ອາດາມ. ແຕ່ທຸກຄົນຈະໄດ້ຮັບຊີວິດຈາກຄົນໆດຽວເຊັ່ນກັນຄື ຈາກພຣະຄຣິດ. ດັ່ງນັ້ນສິ່ງປະເສີດກວ່າໝູ່ກໍແມ່ນ ຄວາມຮັກຂອງພຣະຄຣິດທີ່ພຣະອົງຊົງໃຫ້ພວກເຮົາ, ພວກເຮົາຄວນຍຸດຕິການຢູ່ເພື່ອຕົນເອງໄດ້ແລ້ວ ຄວນຢູ່ເພື່ອພຣະຄຣິດ.

ການກະຕຸ້ນອັນທີສີ່ ແມ່ນການສັງເກດ. ພວກເຮົາມັກສັງເກດຄົນແລະເບິ່ງຄວາມຜິດຂອງຄົນອື່ນຕາມມາຕຖານຂອງມະນຸດ. ໂປໂລກ່າວວ່າ ສິ່ງເຫລົ່ານັ້ນລ່ວງໄປ ໝົດແລ້ວ. ບັດນີ້ພຣະອົງ ໄດ້ມອບການຄືນດີກັບພຣະອົງໃຫ້ເຮົາເປັນຜູ້ກະທໍາ (5:16-19).

ການກະຕຸ້ນອັນທີຫ້າ ຄືຄວາມຮັບຜິດຊອບ. ຜູ້ເຊື່ອທຸກຄົນມີໜ້າທີ່ຮັບຜິດຊອບໃນການເຮັດໃຫ້ມີການຄືນດີ. ຄຣິສຕຽນທຸກຄົນກາຍເປັນຄົນກາງ, ເປັນທູດຂອງພຣະເຈົ້າ, ເປັນນັກເຈຣະຈາເພື່ອການຄືນດີ ດ້ວຍກັນທຸກຄົນ. ແນວຄິດທີ່ຈະແຈ້ງທີ່ສຸດນັ້ນກໍຄືການໄຖ່ຖອນຂອງພຣະເຈົ້າ. ຄົນບາບທຸກຄົນຈະຍອມຮັບການຊົງໄຖ່ ແລະໄດ້ຮັບການຄືນດີນັ້ນ ກໍຍ້ອນການຮັບຜິດຊອບໃນການປະກາດ, ຮັບຜິດຊອບໃນການທໍາງານຂອງພຣະຄຣິດເທົ່ານັ້ນ.

ການຈະເປັນຜູ້ເຮັດໃຫ້ຄືນດີ ໃຫ້ພຣະເຈົ້ານັ້ນ ຜູ້ເຊື່ອຕ້ອງຮູ້ວ່າຕົວເອງມີໜ້າທີ່ເປັນທູດ. ພວກເຮົາຖືກພຣະເຈົ້າສົ່ງຊອມເບິ່ງການກະທຳຢູ່ສເມີ, ວ່າເຮົາຈະເຮັດຕາມໜ້າທີ່ຂອງພຣະເຈົ້າມອບໃຫ້ຫລືບໍ່.

ພື້ນຖານຂອງການເປັນຜູ້ເຮັດໃຫ້ຄືນດີນັ້ນແມ່ນຂຶ້ນກັບພຣະເຈົ້າ ຜູ້ໄດ້ສົ່ງພຣະຄຣິດ ມາເປັນຜູ້ເຮັດໃຫ້ຄືນດີ. ພຣະຄຣິດເປັນຜູ້ທີ່ປາສຈາກບາບ, ຜູ້ມີຄວາມສັມພັນກັບພຣະເຈົ້າຢ່າງຖືກຕ້ອງ ພຣະອົງຈຶ່ງສາມາດຮັບບາບພວກເຮົາໄດ້. ພຣະອົງບໍ່ມີການເຫັນແກ່ຕົວໃນການເປັນຜູ້ຮັບໃຊ້, ການປ່າວປະກາດແລະການເຮັດໃຫ້ຄືນດີຂອງພຣະອົງ ຈຶ່ງເປັນໄປໄດ້ດີ.

<u>ສະລູບ:</u>
ມີແຕ່ພຣະຄຸນເທົ່ານັ້ນທີ່ຈະນຳໄປເຖິງຊີວິດອັນຕລອດໄປເປັນນິດ. ຜູ້ທີ່ມີຊີວິດໃຫມ່ຈິງໆ ຈຶ່ງຈະສາມາດປ່າວປະກາດແລະເຮັດວຽກການຄືນດີນີ້ໄດ້ດີ. ເຊັ່ນ: ຕ້ອງບໍ່ເຫັນແກ່ຕົວ, ຕ້ອງທຳງານບໍ່ແມ່ນຕາມເຈຕນາລົມຂອງຕົນ ແຕ່ແມ່ນຂອງພຣະເຈົ້າ, ຕ້ອງແນ່ໃຈວ່າຕົວເອງມີຄວາມເຊື່ອ, ແລະຕ້ອງມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຜູ້ທີ່ເຊື່ອຢ່າງຈິງຈັງ. ຕ້ອງມີຄວາມສັມພັນໃຫມ່ກັບພຣະເຈົ້າ ຈຶ່ງຈະສາມາດເປັນທູດຂອງພຣະເຈົ້າໄດ້.

<u>ຄຳຖາມ:</u>
1. ແມ່ນຫຍັງທີ່ເຮັດໃຫ້ທ່ານມີຄວາມຢ້ານ ແລະ ມີຄວາມກະວົນກະວາຍ ທີ່ເຮັດໃຫ້ທ່ານບໍ່ສາມາດປະກາດຊີວິດຄຣິສຕຽນຂອງທ່ານໄດ້? ໂປໂລກ່າວວ່າຢ່າງໃດໃນ ໒ ກຣທ 4:7-11 ກ່ຽວກັບຄວາມຢ້ານ.

2. ທ່ານເຫັນຫຍັງແດ່ໃນຊີວິດຂອງທ່ານ ກ່ຽວກັບການປ່ຽນແປງໃຫມ່ໃນພຣະຄຣິດ? ປັດຈຸບັນທ່ານຢູ່ເພື່ອຄົນອື່ນແລ້ວບໍ່ ຫລືຍັງຢູ່ເພື່ອຕົນເອງຢູ່?

3. ເປັນຫຍັງທ່ານຈຶ່ງຄິດວ່າ ທ່ານບໍ່ໄດ້ຖືກຊຸກຍູ້ໃຫ້ເປັນພະຍານເຣື່ອງພຣະຄຣິດ ແລະຮັບໃຊ້ຜູ້ອື່ນ?

4. ເວລາໃດ ທ່ານມີຄວາມຮູ້ສຶກວ່າທ່ານເປັນຕົວແທນຂອງພຣະຄຣິດ?

5. ອະທິບາຍຄຸນລັກສະນະຂອງຄົນທີ່ບໍ່ເຫັນແກ່ຕົວມາເບິ່ງວ່າເປັນຢ່າງໃດ? ມີໃຜແດ່ໃນຄຣິສຕະຈັກຂອງພວກເຮົາ.

6. ແມ່ນຫຍັງແດ່ຄວນຈະປ່ຽນໃນຊີວິດຂອງທ່ານ?

# ບົດຮຽນທີ 10
# ຄວາມເຊື່ອທີ່ໝາຍເຖິງການເຊື່ອແທ້

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຮັບເຣີ 11:1-2, 8-28; 11:32-12:3

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເຮັບເຣີ 11:1--12:17

ຈຸດສຳຄັນຂອງບົດຮຽນນີ້: ມີຄວາມເຊື່ອແບບຄຣິສຕຽນ ໝາຍຄວາມວ່າ ຕ້ອງດຳເນີນຊີວິດໃນຄວາມເຊື່ອ, ເຖິງແມ່ນວ່າຊີວິດຈະຫຍຸ້ງຍາກຂັດສົນ, ຫລືພົບກັບອຸປສັກກໍຕາມ.

ຄຳຖາມເພື່ອການສຳຫລວດ: ຢ່າງໃດກໍຕາມ, ແມ່ນຫຍັງຄືຄວາມເຊື່ອ?

ຈຸດປະສົງຂອງບົດຮຽນນີ້: ຈົ່ງວັດແທກຄວາມເຊື່ອຂອງຂ້ອຍ ກັບ ບຸກຄົນຕົວຢ່າງທີ່ມີໃນພຣະຄັມພີ, ຂ້ອຍຢູ່ໃນລະດັບໃດ?

ເນັ້ນໜັກໃນພາກທິສດີ ແລະ ພາກປະຕິບັດດ້ວຍ: ເພື່ອເພີ້ມພລັງຜູ້ທີ່ຈະປະກາດໃຫ້ແກ່ຄຣິສຕະຈັກ ແລະ ຈະອອກໄປປະກາດທົ່ວໂລກ.

## ຄຳນຳ

ຄວາມເຊື່ອ ຄືພລັງ ອຳນາດທີ່ພຣະເຈົ້າມອບໃຫ້, ເພື່ອໃຫ້ພວກເຮົາເຊື່ອໃນການເປັນຢູ່ຂອງພຣະເຈົ້າ, ເພື່ອໃຫ້ຜູ້ເຊື່ອທັງຫລາຍຕັ້ງໝັ້ນຄົງຢູ່ ແມ່ນວ່າຈະພົບກັບບັນຫາ ຫລື ອຸປສັກຕ່າງໆກໍຕາມ.

ເຣື່ອງຂອງເດັກໜຸ່ມສອງຄົນເດີນກັບບ້ານ ຫລັງຈາກຮຽນ ໂຮງຮຽນວັນອາທິດແລ້ວ. ພວກເຂົາສົນທະກັນເຖິງບົດຮຽນທີ່ໄດ້ຮຽນມາ. ຄົນນຶ່ງຖາມຂຶ້ນວ່າ: " ແມ່ນຫຍັງຄືຄວາມເຊື່ອແທ້ໆເກາະ?"
ຄົນທີສອງຕອບອອກໄປວ່າ: " ເອີ, ເຊື່ອກໍແມ່ນເຊື່ອ ສິ່ງທີ່ເຮົາຮູ້ວ່າມັນບໍ່ເປັນຈິງຫັ້ນລະ!" ແຕ່ຖ້າຄັນຄິດໄປດັກໆຄຳຕອບອາດຈະດີກວ່ານີ້ອີກ.

ໃນຈົດໝາຍຕອນນຶ່ງ ໄດ້ຂຽນເຖິງຄົນເຮັບເຣີວ່າ ຄວາມເຊື່ອແມ່ນສິ່ງທີ່ຫວັງວ່າຈະໄດ້, ໂດຍສິ່ງນັ້ນເຮົາຍັງບໍ່ທັນໄດ້ເຫັນກັບຕາເທື່ອ. ແຕ່ວ່າສິ່ງນັ້ນຈະຕ້ອງເປັນສິ່ງທີ່ມີຈິງ, ພຣະເຈົ້າໄດ້ເຫັນສິ່ງເຫລົ່ານີ້ແລ້ວ ມະນຸດເຮົາຍັງບໍ່ທັນເຫັນ. ພຣະເຈົ້າຈຶ່ງໄດ້ສັນຍາ ວ່າຈະມອບໃຫ້ມະນຸດ, ຂໍແຕ່ມະນຸດມີຄວາມເຊື່ອຢ່າງໝັ້ນໃຈ, ດຳເນີນຊີວິດຕາມແບບແຜນ, ເຖິງແມ່ນວ່າຈະມີອຸປສັກກໍຍອມສູ້ຊົນ.

ຄຣິສຕຽນຈະສືບຕໍ່ຮັບໃຊ້ ແລະ ໃຊ້ຊີວິດຢ່າງໃດໃນເມື່ອບັນຫາຫາກເຕັມລົ້ນຢູ່ໃນໂລກນີ້. ຜູ້ຂຽນຈົດໝາຍໄປຫາຄົນເຮັບເຣີໄດ້ໃຫ້ຄຳຕອບວ່າ ຖ້າພວກເຮົາຫາກເຊື່ອວ່າພຣະເຈົ້າຍັງຊົງພຣະຊົນຢູ່ ແລະ ຢັ້ງຢືນວ່າພຣະເຈົ້າຍັງຮັກສາຄຳສັນຍາຂອງພຣະອົງ ພວກເຮົາກໍສາມາດສືບຕໍ່ໃນຄວາມເຊື່ອຕລອດໄປໄດ້.

ຄວາມເຊື່ອຢັ້ງຢືນເຖິງຄວາມຈິງຂອງພຣະເຈົ້າ (11:1-7)

ຜູ້ຂຽນຈົດໝາຍໄປເຖິງຄົນເຮັບເຣີ ໄດ້ຮັບຮອງຄວາມຈິງຂອງພຣະເຈົ້າ ແລະ ໄດ້ອີງໃສ່ຄຳສັນຍາຂອງພຣະອົງໃຫ້ເຮົາໄດ້ເຫັນ. ໃນພື້ນຖານຂອງຄວາມເຊື່ອໝັ້ນນີ້, ຜູ້ຂຽນໄດ້ຮຽກຮ້ອງໃຫ້ຄຣິສຕຽນຮັກສາຊີວິດຈິດໃຈໄວ້ (10: 35-39). ໃນເຮັບເຣີ ກ່າວວ່າ: ຄວາມເຊື່ອແມ່ນຄວາມຫວັງໃຈໃນສິ່ງທີ່ຕາບໍ່ເຫັນ (11:1-2)

ຄຳວ່າເຊື່ອໃນທີ່ນີ້ ບໍ່ແມ່ນເຊື່ອລ້າໆ ແຕ່ຄວາມເຊື່ອຕ້ອງມີການເຄື່ອນໄຫວ ສຳແດງອອກໃນການກະທຳ. ຄົນເຊື່ອທີ່ມີຄວາມເຊື່ອປະເພດນີ້ ເຮົາຈະເຫັນຄຳສັນຍາຂອງພຣະເຈົ້າໃນຕົວຂອງເຂົາ, ແລະເຫັນຄວາມຫວັງໃນພຣະເຈົ້າຢ່າງຈະແຈ້ງໃນຕົວຂອງເຂົາ.

ສອງຢ່າງທີ່ແຍກອອກກັນບໍ່ໄດ້ໃນນີ້ກໍຄື: ຄວາມເຊື່ອ ແລະ ຄວາມຫວັງ. ຄວາມເຊື່ອແມ່ນຄວາມໝັ້ນໃຈໃນຄວາມຫວັງ, ແລະຄວາມຫວັງກໍຄືຄວາມໝັ້ນໃຈໃນຄວາມຈິງທີ່ຈະໄດ້ຮັບແນ່ນອນ.
ຄຳວ່າ "ແນ່ນອນ" ໃນຂໍ້ນີ້ງ ເປັນຄຳທີ່ມີຄວາມໝາຍເລິກຫລາຍ. ແນ່ນອນ ຖ້າຫາກນຳໄປເຕີມຕໍ່ທ້າຍຄຳໃດກໍຕາມ ຄຳນັ້ນຈະມີນ້ຳໜັກ ເຖິງແມ່ນວ່າຕາຈະບໍ່ເຫັນກໍຕາມ. ແນ່ນອນ ຍັງເປັນຄຳຢັ້ງຢືນເຖິງເຫດການທີ່ຜ່ານມາຫລືເຫດການທີ່ຈະເກີດຂຶ້ນ ໂດຍຮັບປະກັນໄດ້.

ຄວາມເຊື່ອແມ່ນຄວາມຮູ້ສຶກນຶກຄິດຈາກຈິດໃຈ, ແລະກໍເປັນສິ່ງນຶ່ງທີ່ເຮົາຈຳເປັນຕ້ອງມີ ແລະຕ້ອງປະຕິບັດ ເພື່ອການສະແດງອອກຂອງເຮົາຈະເປັນໄປຕາມນັ້ນ. ຄວາມເຊື່ອແມ່ນການສົມຍອມຮັບເອົາ ເໝືອນດັ່ງເອວາຍອມຮັບເອົາຄຳຫລອກລວງຂອງພະຍາມານ (11:3). ຄວາມເຊື່ອໃນພຣະເຈົ້າ ແມ່ນສິ່ງທີ່ພຣະອົງຊົງພໍພຣະທັຍ ເຊັ່ນ ອາເບນ, ເອໂນກ ແລະໂນອາ ຄວາມເຊື່ອຂອງພວກເຂົາເຈົ້າ ປະກອບດ້ວຍການປະຕິບັດ(11:4-7).

<u>ຄວາມເຊື່ອເຮັດໃຫ້ມີຄວາມສາມາດໃນຊີວິດ ແລະໃນການຮັບໃຊ້</u> (11:8-28)
ນີ້ຄືການຍອມຮັບຢ່າງແທ້ຈິງ ວ່າພຣະເຈົ້າຊົງເປັນຢູ່ ແລະ ພຣະອົງຊົງຮັກສາພຣະຄຳຂອງພຣະອົງຢູ່ໃນຕົວຂອງຜູ້ທີ່ເຊື່ອໃນທຸກຍຸກອະຣິຍະບົດ. ຜູ້ຂຽນພຣະທັມເຮັບເຣີ ຍັງໄດ້ກ່າວຍ້ອນໄປເຖິງພຣະຄັມພີເດີມ. ຄວາມເຊື່ອແມ່ນປາກົດອອກໃນການກະທຳໃນຊີວິດຂອງພວກເພິ່ນ ເຊັ່ນ: ອັບຣາຮາມ, ອີຊາກ, ໂຢເຊບ, ໂມເຊ ແລະຜູ້ອື່ນໆອີກ.

ຄວາມເຊື່ອເຮັດໃຫ້ອັບຣາຮາມອອກຈາກເຄນເດັຽ ກ້າວໄປຫາດິນແດນແຫ່ງພຣະພອນ, ດິນແດນແຫ່ງຄວາມປອດພັຍ ແລະດິນແດນທີ່ອຸດົມສົມບູນໄປດ້ວຍນ້ຳເຜິ້ງ ແລະນ້ຳນົມ ຊຶ່ງເປັນດິນແດນທີ່ພຣະເຈົ້າຊົງສັນຍາ. ຄວາມເຊື່ອຂອງອັບຣາຮາມຕິດຕາມດ້ວຍການກະທຳ. ເຖິງແມ່ນວ່າຕົວລາວເອງຈະຍັງບໍ່ທັນໄດ້ເຫັນກັບຕາກໍຕາມ, ຄຳສັນຍາຂອງພຣະເຈົ້າ ໄດ້ຝັງຢູ່ໃນແນວຄິດ ແລະໃນຈິດໃຈຂອງລາວ.

ຂໍ້ 17 ຫາ 19 ຄວາມເຊື່ອ ແມ່ນການທົດລອງຢ່າງແຂງແຮງ. ຖ້າບໍ່ມີການທົດລອງຄວາມເຊື່ອອັນແທ້ຈິງ ຈະເກີດມາບໍ່ໄດ້ເດັດຂາດ. ການທົດລອງຂອງ ອັບຣາຮາມແມ່ນການສ່ຽງແລະກໍເປັນການທ້າທາຍຢ່າງໜັກ (ຮຣ 11:18; ປຖກ 21:12). ເຖິງປານນັ້ນອັບຣາຮາມ ກໍມີຄວາມຫວັງຈາກພຣະເຈົ້າໃນທາງດີສເມີໄປ.

ຂໍ້ 20 ຫາ 22 ອີຊາກ ມີຄວາມເຊື່ອຈຶ່ງໄດ້ອວຍພຣະພອນ ຢາໂຄບແລະເອຊາວ. ຢາໂຄບມີຄວາມເຊື່ອຈຶ່ງໄດ້ອວຍພຣະພອນ ໂຢເຊບ. ໂຢເຊບກໍມີຄວາມເຊື່ອເຊັ່ນກັນຈຶ່ງໄດ້ສັ່ງພວກອິສຣາເອນທີ່ຈະອອກຈາກອີຢິບ ກ່ຽວເຣື່ອງກະ

ດູກຂອງຕົນເອງ.

ຂໍ້ 23 ຜູ້ຂຽນໄດ້ຫັນມາຫາຕົວຢ່າງຂອງໂມເຊ ທີ່ຖືກເຊື່ອງໄວ້ເຖິງສາມເດືອນ. ໃນທີ່ສຸດພໍ່ແມ່ຂອງໂມເຊກໍໄດ້ຊັຍຊະນະ ບໍ່ຢ້ານຕໍ່ຄຳສັ່ງຂອງຟາຣາໂອ.

ຂໍ້ 24 ຫາ 26 ໄດ້ກ່າວເຖິງຊີວິດຂອງໂມເຊເມື່ອເຕີບໃຫຍ່ຂຶ້ນມາ. ເພິ່ນໄດ້ເລືອກເອົາການດຳເນີນຊີວິດ ຮ່ວມທຸກລຳບາກ ກັບພົລເມືອງຂອງພຣະເຈົ້າ. ລາວເຊື່ອວ່າຈະໄດ້ຮັບລາງວັນອັນມາກມາຍ ແລະປະເສີດ ກວ່າຂອງຊົ່ວຄາວໃນໂລກນີ້.

ຂໍ້ 27 ຫາ 28 ຍ້ອນຄວາມເຊື່ອ ເພິ່ນຈຶ່ງໄດ້ຖືເທສການປັສຄາ ແລະພິທີຊິດເລືອດເພື່ອຮັກສາຊີວິດຂອງລູກກົກຂອງຊົນຊາດອິສຣາເອນທຸກໆຄົນໄວ້ໄດ້.
ຂໍ້ 29 ຍ້ອນຄວາມເຊື່ອນີ້ແລະ, ໂມເຊແລະຄົນອິສຣາເອນຈຶ່ງຍ່າງຂ້າມທະເລແດງເມືອນຍ່າງເທິງດິນແຫ້ງ. ທັງຫມົດນີ້ກໍຍ້ອນຄວາມເຊື່ອຄຣິສຕຽນຈຶ່ງອົດທົນ ເພື່ອເຮັດສິ່ງທີ່ເປັນໄປບໍ່ໄດ້ໃຫ້ເປັນໄປໄດ້.

<u>ຄວາມເຊື່ອເຮັດໃຫ້ເຮົາເຂັ້ມແຂງຂຶ້ນໃນເວລາມີການທົດລອງ</u> (11:32-12:3)
ໃນຂໍ້ທີ່ 32 ຜູ້ຂຽນໄດ້ບັນລະຍາຍເຖິງຄວາມເຊື່ອຂອງຫລາຍທ່ານໃນປະວັດສາດ, ຊຶ່ງຢັ້ງຢືນວ່າຄວາມເຊື່ອນີ້ເປັນຄວາມຫວັງ ທີ່ເຮົາບໍ່ສາມາດເຫັນກັບຕາໄດ້ (11:1). "ຈະໃຫ້ເຮົາເວົ້າສິ່ງໃດຕໍ່ໄປອີກແດ່" ຄຳເວົ້ານີ້ກໍຄົບຖ້ວນໃນຕົວຂອງມັນຢູ່ແລ້ວ. ແລະແລ້ວກໍໄດ້ກ່າວໄວ້ວ່າຜູ້ທີ່ເຊື່ອຈະໄດ້ປະເຊີນກັບການຂົ່ມເຫັງ ແລະການຕໍ່ຕ້ານ ຢ່າງຮ້າຍແຮງ.

ຂໍ້ 32 ໄດ້ກ່າວເຖິງ ບຸກຄົນທີ່ມີຄວາມເຊື່ອທັງຫລາຍ ແລະພວກເພິ່ນກໍໄດ້ຊັຍຊະນະຜ່ານມາໃນຊີວິດຂອງພວກເພິ່ນ.
ຂໍ້ 33 ຫາ 38 ຄວາມເຊື່ອທີ່ປະກອບດ້ວຍການກະທຳຂອງເຂົາເຈົ້າແມ່ນໄດ້ຮັບລາງວັນໂດຍການໄດ້ຊັຍຊະນະເຫນືອແຜ່ນດິນຕ່າງໆ, ໄດ້ຈັດຕັ້ງລະບົບຄວາມຍຸດຕິທັມ, ໄດ້ຮັບຜົນຕາມສັນຍາ, ໄດ້ອັດປາກສິງ, ໄດ້ມອດໄຟອັນແຮງກ້າ, ໄດ້ພົ້ນຈາກຄົມດາບ, ແລະຄວາມອ່ອນແອ ກໍກັບກາຍມາເປັນຄວາມເຂັ້ມແຂງ.

ຂໍ້ 35 ຫາ 38 ຜູ້ຂຽນກໍໄດ້ກ່າວໄວ້ ເຖິງຄວາມທົນທຸກທໍລະມານຂອງຜູ້ທີ່ເຊື່ອ ແຕ່ວ່າຜູ້ໃດທີ່ມີຄວາມອົດທົນຈົນເຖິງທີ່ສຸດແທ້ ຜູ້ນັ້ນກໍຈະໄດ້ຮັບຕາມຄຳສັນຍາຂອງພຣະອົງ. ເຖິງແມ່ນວ່າພວກນີ້ ຈະຍັງບໍ່ທັນໄດ້ຮັບລາງວັນໃນແຜ່ນດິນໂລກກໍຕາມ ດວງຕາຂອງພວກເພິ່ນແມ່ນຫລີງເຫັນສິ່ງທີ່ພຣະເຈົ້າຈັດແຈງໄວ້ແລ້ວ (11:39-40).

ມາບັດນີ້ ຜູ້ຂຽນໄດ້ບອກເຖິງຕົວຢ່າງ (ພະຍານ)ທີ່ຢູ່ຮອບຂ້າງເຮົານີ້ແລ້ວ, ໃຫ້ພວກເຮົາຈົ່ງປະຖິ້ມທຸກຢ່າງທີ່ຖ່ວງດຶງຢູ່, ຕັ້ງໃຈແລ່ນດ້ວຍຄວາມພະຍາຍາມ ຄືເຮັດວຽກໃຫ້ກັບພຣະອົງ, ແລະໃຫ້ປະຕິບັດຕາມກຳນົດກົດເກນ ທີ່ໄດ້ກຳນົດໃຫ້ກັບຫມູ່ເຮົາ ຄືການດຳເນີນຊີວິດ (12:1).

ຂໍ້ 2 ຈົ່ງປັກຕາເບິ່ງພຣະເຢຊູ. ຜູ້ເຊື່ອທັງຫລາຍຄວນປັກຕາໃສ່ພຣະອົງ ແລະວາງເປົ້າຫມາຍທີ່ພຣະອົງ. ພຣະເຢຊູເປັນຜູ້ບຸກເບີກ ແລະເປັນຜູ້ທີ່ເຮັດໃຫ້ຄວາມເຊື່ອຂອງພວກເຮົາປະສົບກັບຄວາມສຳເລັດ.

ເບິ່ງການປະຕິບັດ ຄວາມເຊື່ອຂອງພຣະເຢຊູເທິງໄມ້ກາງແຂນ. ພຣະອົງມີຄວາມອົດທົນ ຕໍ່ການຂັດຂວາງຂອງຄົນບາບທີ່ຕໍ່ສູ້ຢູ່ຕລອດເວລາ. ພຣະອົງສະລະຄວາມມ່ວນຊື່ນສ່ວນຕົວ ເພື່ອຄວາມລອດພົ້ນ ແລະ ຄວາມຍິນດີຂອງພວກເຮົາທັງຫລາຍ. ໃນສຸດທ້າຍ ພຣະອົງກໍໄດ້ຮັບລາງວັນຄື ການປະທັບທີ່ເບື້ອງຂວາຂອງພຣະບິດາ.

ຄົນເຮັບເຣີທັງຫລາຍ ໄດ້ພາກັນຫລົງໄຫລໄປທາງໂລກ. ພວກເຂົາຄິດວ່າຈະກັບໄປຫາສາສນາຢິວອີກແມ່ນເປັນການຍາກ ພວກເຂົາຈຶ່ງໄດ້ລະເລີຍໄປ.

ຊີວິດຂອງພຣະເຢຊູ ສຳແດງໃຫ້ພວກເຮົາເຫັນ ເຖິງການເປັນຫ່ວງເປັນໃຍຄົນບາບທີ່ຕໍ່ສູ້ພຣະອົງ. ພຣະອົງໄດ້ຮຽກຮ້ອງດຳເນີນຊີວິດດ້ວຍຄວາມເຊື່ອ ເຖິງແມ່ນວ່າຈະປະເຊີນຕໍ່ບັນຫາຕ່າງໆນາໆກໍຕາມ.

<u>ສະລູບ:</u>
ຄຣິສຕຽນທຸກຍຸກທຸກສມັຍ ຖືກຫລອກລວງໃຫ້ປະນີປະນອມກັບການເຊື່ອຟັງ. ຈົດຫມາຍສະບັບນີ້ຂຽນໄປຫາຊາວເຮັບເຣີ ກໍຄືຂຽນຫາພວກເຮົາໃນສມັຍນີ້ດ້ວຍ, ແລະຍັງຍຸກຕໍ່ໆໄປອີກ.
ຄວາມເຊື່ອເຮັດໃຫ້ພວກເຮົາສາມາດຕໍ່ສູ້ບັນຫາ, ຄວາມໂສກເສົ້າ, ການຂົ່ມເຫັງ ແລະການທົດລອງຕ່າງໆ. ໃນເມື່ອພວກເຮົາຫາກປັກຕາໃສ່ພຣະເຢຊູຜູ້ເປັນຕົວ, ເປັນແບບແຜນ, ແລະເປັນມາຕຖານຂອງພວກເຮົາ.

<u>ຄຳຖາມ:</u>
1. ແມ່ນຫຍັງທີ່ເຮັດໃຫ້ທ່ານເຊື່ອວ່າພຣະຄັມພີ ແລະຄຳສັນຍາຂອງພຣະເຈົ້າເປັນຄວາມຈິງ?

2. ແມ່ນຫຍັງທີ່ຫລອກລວງທ່ານໃຫ້ຫລົງໄປຈາກທາງຂອງຄຣິສຕຽນ?

3. ແມ່ນໃຜທີ່ທ່ານເຫັນວ່າຄວນເປັນຕົວຢ່າງໃຫ້ແກ່ທ່ານໃນດ້ານຄວາມເຊື່ອ?

4. ທ່ານຈະຕອບເຂົາວ່າຢ່າງໃດ ຖ້າຫາກມີຄົນມາຖາມທ່ານວ່າ "ເປັນຫຍັງທ່ານຈຶ່ງຢາກດຳເນີນຊີວິດຄຣິສຕຽນ?

# ບົດຮຽນທີ 11
# ຫົວໃຈຂອງຂ່າວປະເສີດຄືຄວາມຮັກ

---

ຂໍ້ພຣະຄໍາພີສໍາລັບບົດຮຽນ: 1ໂຢຮັນ 4:7-21
ຂໍ້ພຣະຄໍາພີສໍາລັບເບື້ອງຫລັງ: 1ໂຢຮັນ 4:7-21
ຈຸດສໍາຄັນຂອງບົດຮຽນນີ້: ເພາະວ່າພຣະເຈົ້າຊົງຮັກພວກເຮົາ ພວກເຮົາຈຶ່ງຕ້ອງຮັກຊຶ່ງກັນແລະກັນເພື່ອສແດງອອກເຖິງຄວາມສໍາພັນຂອງພວກເຮົາກັບພຣະເຈົ້າຢ່າງແທ້ຈິງ.
ຄໍາຖາມເພື່ອການສໍາຫລວດ: ພວກເຮົາຮັກທຸກໆ ຄົນຢ່າງຈິງໃຈຫລືບໍ່?
ຈຸດປະສົງຂອງບົດຮຽນນີ້: ໃນອາທິດນີ້ພວກເຮົາຈະຫາທຸກໆວິທີທາງ ເພື່ອສແດງອອກເຖິງຄວາມຮັກທີ່ມີຕໍ່ຄົນທັງປວງ.

| ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ |
|---|
| ● ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ. |
| ● ຮັບໃຊ້ທຸກໆຄົນໃນພຣະນາມຂອງພຣະອົງ. |
| ● ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ. |
| ● ປັບປຸງຄອບຄົວຄຣິສຕຽນໃຫ້ຈະເຣີນຂຶ້ນ. |
| ● ເສີມສ້າງຄຣິສຕະຈັກທີ່ມີຢູ່ໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກໃຫມ່ໃຫ້ທະວີຫລາຍຂຶ້ນ. |

ບົດຮຽນນີ້ເປັນສ່ວນນຶ່ງໃນພຣະທັມ1ໂຢຮັນ ທີ່ໄດ້ບົ່ງບອກໃຫ້ເຫັນການດໍາເນີນຊີວິດຂອງຄຣິສຕຽນ ທີ່ມີຄວາມຮັກຊຶ່ງກັນແລະກັນ ການໄວ້ວາງໃຈເຊື່ອໃນພຣະເຈົ້າ ການດໍາລົງຊີວິດປະຈໍາວັນຂອງຄຣິສຕຽນທີ່ມີການພິສູດໄດ້ເຊັ່ນ: ການເຊື່ອຟັງ(1ໂຢຮັນ 2:3-6; 2:28-3:10); ຄວາມຮັກ(2:7-11; 3:11-24; 4:7-21) ຄວາມເຊື່ອ (2:18-27; 4:1-6)ອັຄສາວົກໄດ້ທ້າທາຍໃຫ້ພີ່ນ້ອງຄຣິສຕຽນຈຶ່ງພິສູດໃຫ້ເຫັນ ໃນຄວາມເຊື່ອທີ່ພວກເຂົາມີແລະຍັງຫນູນໃຈພວກເຂົາໃຫ້ໄວ້ວາງໃຈໃນພຣະເຈົ້າ1ໂຢຮັນ 4:1-6 ນີ້ແມ່ນເນັ້ນເຖິງການພິສູດຄວາມເຊື່ອ. ຂໍ້ 7-11 ນັ້ນເຖິງການພິສູດເຖິງຄວາມຮັກ. ຂໍ້ 12-21 ແມ່ນເນັ້ນເຖິງຄວາມຮັກ ແລະ ຄວາມເຊື່ອ.

ຄວາມຮັກມາຈາກພຣະເຈົ້າ (4:7-11)
ຄໍາວ່າຄວາມຮັກໃນພາສາລາວຂອງເຮົານັ້ນ ເປັນຄໍາເວົ້າທີ່ມີຄວາມຫມາຍທົ່ວໄປ ຄໍາດຽວນັ້ນໃຊ້ຢູ່ໃນທຸກກໍຣະນີ. ຂ້ອຍຮັກຫມາບັກເຫລ່ວຂອງຂ້ອຍ, ຂ້ອຍຮັກເພື່ອນຂອງຂ້ອຍ, ຂ້ອຍຮັກລູກຂອງຂ້ອຍ ແລ້ວແຕ່ເປັນຄໍາດຽວກັນທັງນັ້ນ ແຕ່ຄວາມຫມາຍຂອງຄໍາເວົ້ານັ້ນແຕກຕ່າງກັນ ຮັກຫລາຍເທົ່າໃດນັ້ນພວກເຮົາບໍ່ສາມາດຢັ່ງຮູ້ໄດ້ຈົນກ່ວາມີການສແດງອອກໃຫ້ເຫັນ. ພວກເຮົາເວົ້າວ່າ, "ຂ້ອຍຮັກຫມານັກເຫລ່ວຂອງຂ້ອຍ" ແຕ່ເຮົາບໍ່ສາມາດຈະສລະທຸກສິ່ງທຸກຢ່າງເພື່ອຫມາໂຕນັ້ນໄດ້. ພວກເຮົາເວົ້າອີກວ່າ, "ຂ້ອຍຮັກເພື່ອນຂອງຂ້ອຍ"

ແຕ່ເຮົາບໍ່ອາດສາມາດຈະສລະທຸກສິ່ງທຸກຢ່າງໃຫ້ເພື່ອນເຮົາໄດ້. ແຕ່ພວກເຮົາເວົ້າວ່າ, "ຂ້ອຍຮັກລູກຂອງຂ້ອຍ". ໃນກໍຣະນີນີ້ ເພາະວ່າແມ່ນລູກຂອງພວກເຮົາ ເຮົາຈະສລະກະທັ່ງຊີວິດກໍໄດ້. ສະນັ້ນ ໃນພາສາລາວຂອງເຮົາ ຄຳວ່າຮັກນັ້ນ ພວກເຮົາຍັງຮູ້ບໍ່ໄດ້ວ່າ ຜູ້ທີ່ເຂົາເວົ້າມານັ້ນ ພວກເຮົາບໍ່ຮູ້ວ່າເຂົາຮັກເຮົາຫລາຍປານໃດ. ແຕ່ສຳລັບພາສາກຣີກ (Greek) ນັ້ນ ຄຳວ່າຮັກ ເຂົາເຈົ້າຈຳແນກອອກ ທັງຄວາມໝາຍ ແລະ ຕົວອັກສອນດ້ວຍ, ເຊັ່ນ: ຖ້າໝູ່ຂອງພວກເຮົາເວົ້າວ່າ, "ຂ້ອຍຮັກເຈົ້າ" ໂດຍໃຊ້ຄຳ <u>ຟີເລັຽ</u> (philia) ເຮົາກໍຮູ້ໄດ້ທັນທີວ່າ ໝູ່ຜູ້ນີ້ຄົບຫາສາມາຄົມກັບພວກເຮົາພຽງແຕ່ຂັ້ນຣະດັບເພື່ອນເທົ່ານັ້ນ. ແຕ່ຖ້າໝູ່ຂອງພວກເຮົາໃຊ້ຄຳວ່າ <u>ອາກາເປ</u> (agapa) ເຮົາຮູ້ວ່າໝູ່ຄົນນີ້ເປັນໝູ່ກິນສຸກກິນດິບ ເປັນໝູ່ເປັນໝູ່ຕາຍນຳກັນໄດ້. ມີອີກຄຳນຶ່ງເຊັ່ນ: <u>ແອຣອສ</u> (eros) ຄຳນີ້ກໍມີຄວາມໝາຍວ່າ ຮັກເຊັ່ນກັນ ແຕ່ຄວາມໝາຍໃນທີ່ນີ້ ແມ່ນຮັກທາງດ້ານຢາກມີເພດສັມພັນຮ່ວມກັນຣະຫວ່າງຊາຍກັບຍິງ. ຜູ້ຊາຍຄົນນັ້ນຮັກຜູ້ຍິງຄົນນັ້ນເພາະລາວເປັນທີ່ພໍໃຈຂອງຊາຍຜູ້ນັ້ນ.

ສະນັ້ນ ຄຳວ່າ <u>ຟີເລັຽ</u> (philia) ແລະ ຄຳວ່າ <u>ແອຣອສ</u> (eros) ຄົນນິຍົມໃຊ້ຫລາຍ ແລະ ທົ່ວໄປໃນສມັຍພຣະສັນຍາໃໝ່. ແຕ່ຄຳເວົ້າສອງຄຳນີ້ ນ້ອຍເທື່ອຈະໄດ້ໃຊ້ໃນພຣະຄັມພີພຣະສັນຍາໃໝ່. ແຕ່ສຳລັບຄຳທີ່ໃຊ້ຫລາຍທີ່ສຸດນັ້ນແມ່ນ <u>ອາກາເປ</u> (agape). ໂດຍສະເພາະແລ້ວ ຈົດໝາຍສະບັບຕົ້ນຂອງອັຄສາວົກໂຢຮັນໄດ້ໃຊ້ເຖິງ ໒໑ ຄັ້ງ. ຄວາມໝາຍຂອງຄວາມຮັກທີ່ໃຊ້ຄຳວ່າ <u>ອາກາເປ</u> (agape) ນີ້ ແມ່ນໝາຍເຖິງການເສັຽສລະຊີວິດຂອງຕົວເອງ ເພື່ອຄົນທີ່ພວກເຮົາຮັກນັ້ນເຖິງແມ່ນວ່າຈະບໍ່ໄດ້ອັນໃດເປັນການຕອບແທນ. ແມ່ນຄວາມຮັກທີ່ພຣະເຈົ້າມີຕໍ່ມະນຸສໂລກ. ໂດຍສະເພາະແລ້ວ ໃນຈົດໝາຍສະບັບນີ້ ອັຄສາວົກໂຢຮັນໄດ້ເນັ້ນໜັກແມ່ນໃຫ້ຄຣິສຕຽນຮັກຊຶ່ງກັນແລະກັນ ແລະ ເພື່ອໃຫ້ຄົນອື່ນໆຮູ້ວ່າເປັນຄຣິສຕຽນແທ້ນັ້ນ ຈຶ່ງໃຫ້ຄຣິສຕຽນຮັກຄົນທົ່ວໆໄປດ້ວຍ. ນີ້ແມ່ນຄຳສັ່ງ ບໍ່ແມ່ນຄຳແນະນຳ. ພຣະເຢຊູໄດ້ໃຫ້ຂໍ້ບັນຍັດວ່າ, "ນີ້ແຫລະເປັນຂໍ້ບັນຍັດຂອງເຮົາ ຄືໃຫ້ທ່ານທັງຫລາຍ ຮັກຊຶ່ງກັນແລະກັນ ເໝືອນດັ່ງເຮົາໄດ້ຮັກພວກທ່ານ." (ໂຢຮັນ 15:12-17). ນີ້ແມ່ນຂໍ້ບັນຍັດທີ່ພຣະອົງໄດ້ມອບໄວ້ໃຫ້ແກ່ພວກສາວົກຂອງພຣະອົງ. ສະນັ້ນແລ້ວ ຄວາມຮັກນີ້ ບໍ່ແມ່ນຄວາມຮູ້ສຶກ ແຕ່ແມ່ນການຕັດສິນໃຈແລ້ວປະຕິບັດຕາມ. ຄວາມຮັກນີ້ພວກເຮົາຈະເຫັນໄດ້ວ່າແມ່ນຄວາມຮັກທີ່ມາຈາກພຣະເຈົ້າ. ພຣະອົງເປັນບໍ່ເກີດຂອງຄວາມຮັກເພາະພຣະອົງຊົງເປັນຄວາມຮັກ. (1ໂຢຮັນ 4:7). ໃນຂໍ້8 ຈະມີການສົມທຽບຣະຫວ່າງຜູ້ທີ່ມີຄວາມຮັກ ແລະ ຜູ້ທີ່ບໍ່ມີຄວາມຮັກ. ສຳລັບຜູ້ທີ່ມີຄວາມຮັກຕໍ່ຄົນອື່ນນັ້ນ ຜູ້ນັ້ນໄດ້ບັງເກີດມາຈາກພຣະເຈົ້າ. ແຕ່ສຳລັບຜູ້ທີ່ບໍ່ມີຄວາມຮັກຕໍ່ຄົນອື່ນນັ້ນ ຜູ້ນັ້ນຍັງບໍ່ທັນຮູ້ຈັກພຣະເຈົ້າເທື່ອ. ສະນັ້ນ ໃນຂໍ້ນີ້ບົ່ງບອກໃຫ້ເຫັນຢ່າງແຈ່ມແຈ້ງວ່າ ຖ້າຜູ້ໃດເວົ້າວ່າຕົນເອງເປັນຄຣິສຕຽນ ແຕ່ລາວບໍ່ມີຄວາມຮັກຕໍ່ຄົນອື່ນໆ ຄຳເວົ້າຂອງລາວກໍບໍ່ເປັນຄວາມຈິງ ເພາະຄຳເວົ້າຂອງລາວນັ້ນມັນບໍ່ກົງກັບພຣະຄຳຂອງພຣະເຈົ້າ. ພຣະເຈົ້າຊົງຮັກມະນຸດ ແລະໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກ ເພື່ອເຮົາທັງຫລາຍຈະໄດ້ມີຊີວິດດ້ວຍພຣະບຸດນັ້ນ. ພຣະເຈົ້າຊົງເປັນຄວາມຮັກ ດ້ວຍຄວາມຮັກທີ່ມີຕໍ່ພວກເຮົາພຣະອົງໄດ້ຊົງໃຊ້ພຣະບຸດຂອງພຣະອົງມາ ເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ. ຖ້າພຣະເຈົ້າໄດ້ຊົງຮັກພວກເຮົາທັງຫລາຍພວກເຮົາຈຳຕ້ອງຮັກຊຶ່ງກັນແລະກັນ.

ພວກເຮົາອາດຈະຄິດວ່ານີ້ແມ່ນຂໍ້ບັນຍັດ ແລະ ເປັນໜ້າທີ່ຮັບຜິດຊອບຂອງຄຣິສຕຽນ. ແຕ່ຄວາມຈິງແລ້ວບໍ່ເປັນດັ່ງນັ້ນ ເພາະວ່າ ເມື່ອພຣະເຈົ້າຊົງຮັກພວກເຮົາແລ້ວ ຄວາມຮັກນັ້ນລົ້ນຖ້ວມຈິດໃຈຂອງພວກເຮົາ ຈຶ່ງເຮັດໃຫ້ມີການປ່ຽນແປງໃນຊີວິດຂອງພວກເຮົາດ້ວຍຄວາມປິຕິຍິນດີ. ພວກເຮົາຈຶ່ງຢາກໃຫ້ຄວາມຮັກນີ້ໄປເຖິງຄົນອື່ນ ເພື່ອພວກເຂົາຈະໄດ້ມີປະສົບການນີ້ ເໝືອນດັ່ງພວກເຮົາ ຄືຄວາມຮັກທີ່ມາຈາກພຣະເຈົ້າ.

ຄວາມຮັກສະຖິດຢູ່ໃນພວກເຮົາທັງຫລາຍ (4:12-16)

ພວກເຮົາໄດ້ສຶກສາກັນມາແລ້ວເຖິງບໍ່ເກີດຂອງຄວາມຮັກ ແລະ ພຣະເຈົ້ານັ້ນຊົງເປັນຄວາມຮັກ. ຕໍ່ໄປພວກເຮົາຈະໄດ້ສຶກສາກັນຕໍ່ໄປເຖິງຄວາມຮັກທີ່ໄດ້ສະຖິດຢູ່ໃນພວກເຮົາຜູ້ທີ່ເຊື່ອ ແລະໄວ້ວາງໃຈໃນພຣະບຸດຂອງພຣະເຈົ້າ ຄືພຣະເຢຊູຄຣິດ. ໃນຂໍ້12 ໄດ້ບັນທຶກໄວ້ວ່າ, "ຝ່າຍພຣະເຈົ້າບໍ່ມີໃຜໄດ້ເຫັນຈັກເທື່ອ..." ແຕ່ຄວາມຮັກທີ່ມາຈາກພຣະເຈົ້າໄດ້ປາກົດແຈ້ງ ເມື່ອພວກເຮົາຮັກຊຶ່ງກັນແລະກັນ. ພວກເຮົາບໍ່ເຫັນພຣະເຈົ້າ ແຕ່ພວກເຮົາເຫັນຄວາມຮັກຂອງພຣະເຈົ້າຊຶ່ງໄດ້ປາກົດອອກໃນການປະຕິບັດຂອງພວກເຮົາ. ພຣະຄັມພີຈຶ່ງຢັ້ງຢືນໃຫ້ພວກເຮົາໄດ້ເຫັນວ່າ, "ພຣະເຈົ້າກໍຊົງສະຖິດຢູ່ໃນເຮົາທັງຫລາຍ." ຄວາມຮັກທີ່ມາຈາກພຣະເຈົ້າ ໄດ້ສະຖິດຢູ່ໃນຈິດໃຈຂອງພວກເຮົານັ້ນ ໄດ້ຈະເຣີນເຕີບໂຕໃຫຍ່ຂຶ້ນ ກໍສົມບູນໃນພວກເຮົາ. ຊີວິດຄຣິສຕຽນທີ່ມີຄວາມຮັກມາຈາກພຣະເຈົ້າ ຈະຕ້ອງປາກົດອອກໃຫ້ຄົນທົ່ວໄປເຫັນ ດ້ວຍການປະຕິບັດຕໍ່ຄົນທົ່ວໄປດ້ວຍຄວາມຮັກ. ພຣະທັມ 1ໂຢຮັນ 4:13,15,16 ຄຳວ່າ "ສະຖິດຢູ່" ເປັນຄຳດຽວກັນ ທີ່ໃຊ້ຢູ່ໃນພຣະທັມໂຢຮັນ ບົດທີ15 ເຊັ່ນຄຳວ່າ, "ເຈົ້າສນິດຢູ່ໃນເຮົາ ຫລື ເຈົ້າສະຖິດຢູ່ໃນພຣະຄຣິດ." ອັຄສາວົກໂປໂລກໍໃຊ້ຄຳວ່າ, "ໃນພຣະຄຣິດຫລື ໃນພຣະເຢຊູຄຣິດ." ເພື່ອຊີ້ໃຫ້ພວກເຮົາເຫັນວ່າ ຄວາມສຳພັນຂອງຜູ້ທີ່ມີຄວາມເຊື່ອໃນພຣະເຢຊູຄຣິດ.

ອັຄສາວົກ ໂຢຮັນ ກໍຍັງເນັ້ນອີກວ່າ, "ດັ່ງນັ້ນແຫລະ, ເຮົາທັງຫລາຍຊຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່ໃນພວກເຮົາເພາະພຣະອົງໄດ້ຊົງໂຜດປະທານພຣະວິນຍານຂອງພຣະອົງແກ່ພວກເຮົາ." ພວກເຮົາບໍ່ເຫັນພຣະວິນຍານຂອງພຣະອົງ ແຕ່ພວກເຮົາຮູ້ໄດ້ເພາະໝາກຜົນພຣະວິນຍານທີ່ຈະເຣີນຂຶ້ນ ໃນຊີວິດຂອງພວກເຮົາ. (ຄາລາເຕັຽ 5:22-23) ການທີ່ພວກເຮົາຕິດສນິດກັບພຣະອົງ ແລະພຣະອົງຊົງສະຖິດຢູ່ກັບພວກເຮົານັ້ນ ຈະສ້າງຄວາມໝັ້ນໃຈໃຫ້ແກ່ພວກເຮົາ ໃນເວລາພວກເຮົາຍັງອາສັຍຢູ່ໃນໂລກນີ້. ບໍ່ວ່າພວກເຮົາຈະໄປທີ່ໃດ ຫລືຈະຢູ່ທີ່ໃດກໍຕາມພຣະອົງຊົງສະຖິດຢູ່ກັບພວກເຮົາສເມີໄປ, "...ນີ້ແຫລະ, ເຮົາຈະຢູ່ກັບທ່ານທັງຫລາຍທຸກ ໆ ວັນຈົນໝົດກັບ." (ມັດທາຍ 28:20).

ຄວາມຮັກທີ່ສຳເຣັດໃນເຮົາທັງຫລາຍ (4:17-21)

ເມື່ອຄວາມຮັກຂອງພຣະອົງສົມບູນໃນພວກເຮົາ ແລະຄວາມຮັກນັ້ນເປັນທີ່ສຳເຣັດໃນພວກເຮົາທັງຫລາຍ ພວກເຮົາກໍບໍ່ມີຄວາມຢ້ານອີກຕໍ່ໄປ. ພວກເຮົາບໍ່ມີຄວາມຢ້ານໃນວັນພິພາກສາ ເພາະວ່າພວກເຮົາມີຄວາມແນ່ໃຈໃນພຣະອົງຜູ້ຊົງສະຖິດຢູ່ໃນພວກເຮົາ.

ຄວາມສຳເຣັດກໍພິສູດໄດ້ ຄວາມຮັກທີ່ສຳເຣັດນັ້ນປະທານຄວາມກ້າຫານ ຄືຄວາມກ້າຫານທີ່ຈະຮັກຄົນທົ່ວໄປໄດ້ ກ້າຫານພໍທີ່ຈະສລະຊີວິດຂອງຕົວເອງເພື່ອຄົນທົ່ວໄປໄດ້. ພວກເຮົາອາດໄດ້ເຫັນພາດຫົວເຣື່ອງໃນຂ່າວສານຕ່າງໆ ທີ່ມີຫລາຍ ໆຄົນມີຄວາມກ້າຫານ ສ່ຽງຊີວິດຂອງພວກເຂົາເພື່ອຊື່ສຽງຂອງພວກເຂົາເທົ່ານັ້ນ. ໃນບົດຮຽນນີ້ ພວກເຮົາໄດ້ເນັ້ນເຖິງ ຜູ້ທີ່ມີຄວາມເຊື່ອໃນອົງພຣະເຢຊູຄຣິດ ມີຄວາມກ້າຫານພໍທີ່ຈະຮັກຄົນທົ່ວໄປ. ທີ່ຈະໃຫ້ພວກເຮົາຮັກຄົນທີ່ບໍ່ເປັນຕາໜ້າຮັກນັ້ນ ມັນກໍເປັນການຍາກຫລາຍທີ່ຈະປະຕິບັດໄດ້ ໃນຊີວິດປະຈຳວັນຂອງພວກເຮົາ.

ແຕ່ມີຜູ້ປະກາດຂ່າວປະເສີດພາຍໃນປະເທດ ແລະຕ່າງປະເທດ ຫລາຍຄົນທີ່ພວກເຂົາໄດ້ເປັນແບບຢ່າງໃຫ້ແກ່ພວກເຮົາ ພວກເຂົາມີຄວາມຮັກຕໍ່ຄົນທົ່ວໄປ ພວກເຂົາມີຄວາມກ້າຫານ ພໍທີ່ຈະພາລູກເມັຽ ເດັກເລັກເດັກນ້ອຍ ຈາກບ້ານເກີດເມືອງນອນຂອງພວກເຂົາ ໄປປະກາດຂ່າວປະເສີດ ເປັນພຍານໃຫ້ອົງພຣະເຢຊູ

ຄຣິດ ເພື່ອຄົນທົ່ວໄປໃນຕ່າງປະເທດຈະໄດ້ຮັບຄວາມພົ້ນຈາກການເປັນຂ້າທາດຂອງຄວາມຜິດບາບ. ແຕ່ເມື່ອຄວາມຮັກຍັງບໍ່ທັນເຖິງທີ່ສຳເຣັດນັ້ນພາໃຫ້ເກີດຄວາມຢ້ານເພາະຢ້ານຖືກລົງໂທດ. ແຕ່ຄວາມຮັກທີ່ມີໃນພຣະອົງເປັນທີ່ສຳເຣັດແລ້ວ ພວກເຮົາຈະບໍ່ຢ້ານອີກຕໍ່ໄປ ເພາະພວກເຮົາຮູ້ຢ່າງແນ່ໃຈວ່າພຣະອົງຈະບໍ່ລົງໂທດຜູ້ທີ່ຮັກພຣະອົງ.

ພວກເຮົາຈະເຫັນໄດ້ອີກວ່າມີການຜິດຖຽງບໍ່ຖືກຕ້ອງປອງດອງກັນໃນຄຣິສຕະຈັກ. ເຫດການຢ່າງນີ້ກໍບໍ່ແຕກຕ່າງກັນຫຍັງຫມົດກັບຄົນພາຍນອກ ທີ່ພວກເຂົາກໍບໍ່ຖືກຕ້ອງກັນຢູ່ແລ້ວ. ສະນັ້ນ ພິສູດໄດ້ວ່າຄວາມຮັກຂອງຄຣິສຕຽນທີ່ຢູ່ໃນຄຣິສຕະຈັກຍັງບໍ່ທັນເຖິງທີ່ສຳເຣັດເທື່ອ. ຖ້າຄຣິສຕຽນມີຄວາມຮັກທີ່ສຳເຣັດແລ້ວ ພວກເຂົາຈະຕ້ອງຮັກຊຶ່ງກັນແລະກັນ. ຖ້າມີຄວາມເຂົ້າໃຈຜິດກໍມີການແກ້ໄຂບັນຫາ ເພື່ອທຳຄວາມເຂົ້າໃຈກັນໃຫ້ດີຂຶ້ນຕາມຫລັກຄຳສອນຂອງອົງພຣະຜູ້ເປັນເຈົ້າ.

ຖ້າຜູ້ໃດຫາກກະທຳສິ່ງທີ່ເປັນໜ້າກຽດຊັງໃຫ້ແກ່ເຮົາແລ້ວໃຫ້ເຮົາອະທິຖານເພື່ອເຂົາ ແລະສຶກສາເບິ່ງຊີວິດຂອງເຂົາໂດຍປາສຈາກການຕັດສິນເຂົາໃດໆທັງສິ້ນ. ສ່ວນຫລາຍແລ້ວ ຄົນພວກນີ້ເຂົາຈະມີອຸປສັກໃນຊີວິດຂອງພວກເຂົາ ພວກເຂົາຈຶ່ງໄດ້ເອົາມາລະບາຍອອກໃສ່ຄົນໃນຄອບຄົວຂອງພວກເຂົາ ແລະຄົນອື່ນໆທີ່ພົວພັນກັບພວກເຂົາ. ຖ້າຫາກພວກເຮົາຄິດວ່າ ພວກເຮົາເຕີບໃຫຍ່ໃນພຣະຄຣິດແລ້ວ ໃຫ້ພວກເຮົາອົດສາພຍາຍາມເຂົ້າໃຈເຂົາ ເຮັດທຸກສິ່ງທຸກຢ່າງເພື່ອຈະຊ່ອຍພວກເຂົາ ໃຫ້ຫລຸດຈາກບັນຫານັ້ນ ເພື່ອພວກເຂົາຈະໄດ້ຮັກຄົນທົ່ວໄປດ້ວຍ.

ຖ້າວ່າ ພວກເຮົາຍັງມີຄວາມຂົມຂື່ນຕໍ່ພີ່ນ້ອງຄຣິສຕຽນຜູ້ທີ່ເຄີຍຜິດຖຽງກັນກັບພວກເຮົານັ້ນ. ພວກເຮົາຮັກພວກເຂົາບໍ່ໄດ້ ພວກເຮົາກໍເປັນຄົນເວົ້າຕົວະ ພຣະຄັມພີຕອນນີ້ໄດ້ຊີ້ບອກໃຫ້ເຫັນວ່າ, "ຖ້າຜູ້ໃດເວົ້າວ່າ, "ຂ້າພະເຈົ້າຮັກພຣະເຈົ້າ" ແລະຍັງກຽດຊັງພີ່ນ້ອງຂອງຕົນຜູ້ນັ້ນກໍເປັນຄົນເວົ້າຕົວ" (4:20). ສະນັ້ນ ຖ້າຫາກພວກເຮົາເວົ້າວ່າ ພວກເຮົາຮັກພຣະເຈົ້າ ພວກເຮົາຈະຕ້ອງຮັກພີ່ນ້ອງຂອງພວກເຮົາເຫມືອນກັນ ຈຶ່ງຈະພິສູດໄດ້ວ່າເປັນຄວາມຮັກທີ່ສຳເຣັດແລ້ວ.

<u>ຄຳຖາມ</u>

1. ຈະເຮັດວິທີໃດໃຫ້ຄົນທົ່ວໄປເຂົ້າໃຈເຖິງຄວາມຮັກທີ່ຄຣິສຕຽນມີຕໍ່ຄົນທົ່ວໄປນັ້ນແມ່ນຄວາມຮັກທີ່ມາຈາກພຣະເຈົ້າ?
2. ພວກເຮົາມີວິທີໃດ ຈະໃຫ້ຄົນທົ່ວໄປເຫັນວ່າພວກເຮົາໄດ້ປ່ຽນຈາກເປັນຄົນເຄີຍມີຄວາມກຽດຊັງຄົນທີ່ປະພຶດບໍ່ດີຕໍ່ເຮົາ ແລ້ວມາກາຍເປັນຄົນອົດທົນຕໍ່ຄົນນັ້ນ ເພື່ອທຳຄວາມເຂົ້າໃຈຊີວິດຂອງເຂົາ ແລະມີຄວາມຮູ້ເຫັນໃຈເຂົາ ເພື່ອຈະຊ່ອຍໃຫ້ເຂົາປ່ຽນເປັນຄົນດີຂຶ້ນ?
3. ອ່ານຄາລາເຕັຽ 5:22-23 ແລ້ວສຶກສາເບິ່ງຊີວິດຂອງຄຣິສຕຽນຜູ້ທີ່ເຮົາຮູ້ ແລ້ວສັງເກດເບິ່ງຜົນຂອງພຣະວິນຍານບໍຣິສຸດທີ່ປາກົດອອກມາໃນຊີວິດປະຈຳວັນຂອງເຂົາ. ເຮົາຈະຮູ້ສຶກຢ່າງໃດເມື່ອເຮົາເຫັນຜົນຂອງພຣະວິນຍານບໍຣິສຸດໃນຊີວິດຂອງເຂົາ?
4. ຄວາມຮັກແລະຄວາມກ້າຫານນັ້ນມີຄວາມສຳພັນຢ່າງໃດ? ເຮົາຈະເຫັນໄດ້ຢູ່ບ່ອນໃດທີ່ຄວາມຮັກໄດ້ກາຍເປັນຄວາມກ້າຫານ?
5. ເຮົາຈະມີວິທີໃດແດ່ທີ່ຈະຊ່ອຍໃຫ້ຄົນໃນຄຣິສຕະຈັກ, ໃນກຸ່ມ, ຫລືໃນຄອບຄົວໃຫ້ມີຄວາມຮັກຊຶ່ງກັນ ແລະກັນຫລາຍຂຶ້ນກວ່າເກົ່າ?

# ບົດຮຽນທີ 12
# ຄຳສັນຍາເຣື່ອງການສະເດັດມາ

---

| | |
|---|---|
| ຂໍ້ພຣະຄຳພີສຳລັບບົດຮຽນ: | 2 ເປໂຕ 3:3-15 ກ |
| ຂໍ້ພຣະຄຳພີສຳລັບເບື້ອງຫລັງ: | 2 ເປໂຕ 3:3-15 ກ |
| ຈຸດສຳຄັນຂອງບົດຮຽນນີ້: | ເພາະວ່າພຣະຄຣິດສັນຍາວ່າຈະສະເດັດມາພວກເຮົາຈະຕ້ອງດຳເນີນຊີວິດຂອງພວກເຮົາດ້ວຍຄວາມສັດຊື່. |
| ຄຳຖາມເພື່ອການສຳຫລວດ: | ເມື່ອພຣະອົງສະເດັດກັບມາ ພຣະອົງຈະພົບວ່າພວກເຮົາຍັງສັດຊື່ຕໍ່ພຣະອົງຫລືບໍ່? |
| ຈຸດປະສົງຂອງບົດຮຽນນີ້: | ພິສູດເຖິງເຫດຜົນທີ່ເຊື່ອວ່າພຣະອົງຈະສະເດັດກັບມາອີກ ແລະພຣະອົງຈະພົບວ່າພວກເຮົາຍັງຕັ້ງຫມັ້ນຄົງຢູ່ດ້ວຍຄວາມສັດຊື່ຕໍ່ພຣະອົງ. |

## ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດນັ້ນເປັນໃຈຄວາມສຳຄັນຂອງພຣະສັນຍາໃຫມ່. ເພື່ອຫນູນຈິດໃຈຊາວຄຣິສຕຽນໃຫ້ດຳເນີນຊີວິດດ້ວຍຄວາມສັດຊື່ຈົນກວ່າພຣະອົງຈະສະເດັດກັບມາ.
ຂ້າພະເຈົ້າເຕີບໃຫຍ່ໃນຄຣິສຕະຈັກ ທີ່ເພິ່ນບໍ່ໄດ້ຖືຫລັກຄຳສອນການສະເດັດມາຂອງອົງພຣະເຢຊູຄຣິດນີ້ເປັນພິທີພິຖັນປານໃດ. ຫລາຍກຸ່ມກໍໄດ້ຄາດຄະເນເຖິງວັນ ແລະເວລາການສະເດັດມາຂອງພຣະອົງ ຍ້ອນຕີຄວາມຫມາຍຂອງພຣະຄັມພີ ແລະບໍ່ເຂົ້າໃຈຫນັກແຫນ້ນ. ແຕ່ວ່າໃຈຄວາມສຳຄັນເຂົາເຈົ້າບໍ່ໄດ້ເນັ້ນເຖິງ ເຊັ່ນພວກເຂົາຈະດຳເນີນຊີວິດຢ່າງໃດ. ໃນຂນະລໍຄອຍການສະເດັດມາຂອງພຣະອົງ.
ໃນຂນະທີ່ພວກເຮົາສຶກສາພຣະທັມຕອນນີ້. ພວກເຮົາຈະຊອກຄົ້ນຫາຄວາມຫມາຍຂອງພຣະຄັມພີເພື່ອຈະເອົາມາຫນູນໃຊ້ໃນການດຳເນີນຊີວິດປະຈຸບັນນີ້. ສັງເກດຫາຂໍ້ຄິດເພື່ອຈະຊ່ອຍນຳພວກເຮົາໃຫ້ຈະເຣີນເຕີບໃຫຍ່ໃນຄວາມເຊື່ອ. ບໍ່ແມ່ນຈະໃຫ້ພວກເຮົາມາພາກັນຄາດຄະເນເຖິງວັນຫລືເວລາທີ່ພຣະອົງຈະສະເດັດມາ. ພຣະທັມຕອນນີ້ເປັນຕອນນຶ່ງທີ່ສຳຄັນ ເພື່ອຊີ້ບອກເຖິງເຫດການໃນຄາວສຸດທ້າຍ. ໃນພຣະທັມພຣະສັນຍາໃຫມ່ມີຫລາຍໆຕອນກໍໄດ້ກ່າວເຖິງເຫດການນີ້ ແລ້ວກໍໄດ້ມາສຶກສາເບິ່ງໃຈຄວາມເພື່ອທຳຄວາມເຂົ້າໃຈໃຫ້ຫລາຍຂຶ້ນໃນພຣະທັມຕອນນີ້.

<u>ພຣະອົງຈະສະເດັດກັບມາຫລືບໍ່?</u> (3:3-7)
ອັຄສາວົກເປໂຕໄດ້ກ່າວເຖິງຄົນເຍາະເຍີ້ຍ (2 ເປໂຕ 3:3). ພວກເຂົາສະແດງອອກໃຫ້ເຫັນເຫມືອນວ່າພວກເຂົາຮູ້ທຸກສິ່ງທຸກຢ່າງ ເພື່ອເຍາະເຍີ້ຍແນວທາງ ແລະຄວາມຄິດເຫັນຂອງຄົນອື່ນ. ອຸປນິສັຍເຍາະເຍີ້ຍຄົນອື່ນນັ້ນບໍ່ຄວນມີໃນຕົວຄຣິສຕຽນ. ແຕ່ກົງກັນຂ້າມ ຄຣິສຕຽນຄວນດຳເນີນຊີວິດຢູ່ໃນຄວາມເຊື່ອທີ່ມີໃນພຣະ

ຄຣິດ ແລະມີອຸປນິສັຍກິຣິຍາທ່າທີເໝືອນເປັນຜູ້ມີຄຸນສົມບັດທີ່ກ່າວໄວ້ໃນພຣະທັມ 2 ເປໂຕ 1:5-8. ຈະເປັນຄໍາເວົ້າ ຫລື ການສະແດງກິຣິຍາທ່າທີເຍາະເຍີ້ຍຄົນອື່ນ ນັ້ນແມ່ນນິສັຍທີ່ເປັນຄົນອວດອົ່ງທະນົງຕົວ ແລະປາສຈາກການເປັນຫ່ວງໃຍຕໍ່ຄົນອື່ນ.

ຄົນເຍາະເຍີ້ຍທີ່ອັຄສາວົກກ່າວເຖິງນີ້ພວກເຂົາຈະຖາມວ່າ (3:4), "ຄໍາທີ່ຊົງສັນຍາໄວ້ວ່າພຣະອົງຈະສະເດັດມານັ້ນຢູ່ໃສ?" ຄໍາວ່າ "ການສະເດັດມາ" ພາສາກຣີກນັ້ນແມ່ນ <u>ພາຣາວຊີອາ</u> (Parousia) ຄໍານີ້ມີຄວາມໝາຍວ່າ ປາກົດຕົວ, ມາເຖິງ, ຫລືການມາຮອດມາເຖິງຂອງຄົນໃດຄົນນຶ່ງ. ມີອີກຄໍານຶ່ງທີ່ມີການພົວພັນກັບຄໍານີ້ແມ່ນ <u>ເອັໂພເຄີລິບສ</u> (Apocalypse) ຊຶ່ງມີຄວາມໝາຍວ່າ <u>ເປີດເຜີຍອອກ</u> ຫລື <u>ພຣະນິມິດ</u> ເຊັ່ນໃນພຣະສັນຍາໃໝ່ ພຣະທັມພຣະນິມິດ.

ມີພຣະທັມຫລາຍຕອນໄດ້ກ່າວເຖິງເຣື່ອງຂ່າວຄາວສຸດທ້າຍ, ພຣະທັມ ເປໂຕ ສະບັບທີສອງ ບົດທີ 3 ກໍຢູ່ໃນກຸ່ມນີ້. ໃນພຣະສັນຍາເດີມເຊັ່ນພຣະທັມດານີເອນ. ໃນພຣະສັນຍາໃໝ່ນັ້ນແມ່ນພຣະທັມພຣະນິມິດ.

ຄຣິສຕຽນລຸ້ນແລກເນັ້ນໜັກເຖິງການສະເດັດກັບມາຄັ້ງທີສອງຂອງອົງພຣະເຢຊູຄຣິດ. ເພາະວ່າພວກເຂົາຄິດວ່າພຣະອົງຈະສະເດັດກັບມາໃນເວລາບໍ່ຊ້າ ຫລັງຈາກພຣະອົງສະເດັດຂຶ້ນສູ່ສວັນຕາມທີ່ໄດ້ບັນທຶກໄວ້ໃນພຣະທັມກິຈການບົດທີນຶ່ງ ແລະຫລັງຈາກນັ້ນພຣະອົງບໍ່ໄດ້ສະເດັດມາຕາມທີ່ພວກເຂົາຄາດໝາຍໄວ້. ອາດມີຄຣິສຕຽນບາງຄົນ ຂາດຄວາມອົດທົນໃນການລໍຄອຍການສະເດັດມາ ກໍໃຊ້ຄໍາເຍາະເຍີ້ຍໝູ່ຄຣິສຕຽນຜູ້ທີ່ຍັງລໍຄອຍຢູ່. ແຕ່ສ່ວນໃຫຍ່ແລ້ວ ຈະແມ່ນຄົນນອກຄືພວກບໍ່ເປັນຄຣິສຕຽນນັ້ນ ເຍາະເຍີ້ຍຄຣິສຕຽນຫລາຍກວ່າ. ພວກເຂົາຖາມວ່າຜູ້ປະກາດພຣະທັມ ແລະພວກອັຄສາວົກກໍລ່ວງລັບໄປແລ້ວ. ແຕ່ຍັງບໍ່ມີວີແວວໃຫ້ເຫັນວ່າພຣະອົງຈະສະເດັດມາ ທຸກສິ່ງທຸກຢ່າງກໍຢູ່ໃນສະພາບເດີມຕັ້ງແຕ່ເລີ້ມຕົ້ນສ້າງໂລກ. ຄວາມໝາຍຂອງພວກເຂົາກໍຄືວ່າ ພຣະເຈົ້າຂອງຄຣິສຕຽນບໍ່ມີຄວາມສາມາດທີ່ຈະປະຕິບັດຕາມທີ່ພຣະອົງໄດ້ສັນຍາໄວ້.

ຄຣິສຕຽນໄດ້ລໍຄອຍການສະເດັດມານີ້ໄດ້ສອງພັນປີແລ້ວ. ແຕ່ພຣະອົງຍັງບໍ່ທັນໄດ້ສະເດັດມາຕາມພຣະທັມກິຈການບົດທີ 1 ບັນທຶກໄວ້. ຄໍາເຍາະເຍີ້ຍຂອງຄົນເຫລົ່ານັ້ນກະທົບກະເທືອນຕໍ່ຄວາມເຊື່ອຂອງຄຣິສຕຽນຫລາຍ. ສະນັ້ນ ຄຣິສຕຽນບາງກຸ່ມຈຶ່ງໄດ້ຄາດໝາຍວັນເວລາການສະເດັດມາຂອງພຣະອົງ. ບາງກຸ່ມກໍຫົວຂວັນເຍາະເຍີ້ຍກັນ. ບາງກຸ່ມກໍຜິດຫວັງໃນຄວາມຕັ້ງໃຈ ກໍເລີຍເລີກລົ້ມຫລັກຄໍາສອນການສະເດັດມາຂອງພຣະອົງ.

ຕາມຄວາມຈິງແລ້ວອັຄສາວົກເປໂຕໄດ້ຊີ້ແຈງໃຫ້ເຂົ້າໃຈເຣື່ອງການສະເດັດມາຂອງພຣະອົງຢ່າງແຈ່ມແຈ້ງ. ເພື່ອໃຫ້ພວກທີ່ເຍາະເຍີ້ຍ ເຣື່ອງດັ່ງກ່າວນີ້ໃຫ້ເຫັນພຣະທັມຄັມພີໄດ້ບັນທຶກໄວ້ຕັ້ງແຕ່ປະຖົມການ. ພຣະອົງໄດ້ຈັດຕຽມໂລກທີ່ພຣະອົງຊົງສ້າງນີ້ໄວ້ວັນເວລາການສະເດັດມາ, "ເພາະວ່າເຂົາ (ຜູ້ເຍາະເຍີ້ຍ) ແກ້ງລືມຂໍ້ນີ້ເສັຽ, ຄືດ້ວຍພຣະທັມຂອງພຣະເຈົ້າ ຟ້າສວັນຈຶ່ງໄດ້ຕັ້ງແຕ່ບູຮານ ແລະແຜ່ນດິນໂລກຈຶ່ງໄດ້ເກີດຂຶ້ນຈາກນໍ້າ ແລະດ້ວຍທາງນໍ້າ. ດ້ວຍນໍ້ານັ້ນແຫລະ, ມະນຸດໂລກທີ່ມີຢູ່ໃນຂນະນັ້ນໄດ້ຈິບຫາຍໄປດ້ວຍນໍ້າຖ້ວມ" (3:5-6). ຄົນເຫລົ່ານັ້ນໄດ້ເຍາະເຍີ້ຍພຣະເຈົ້າ ແລະພຣະອົງໄດ້ຊົງຕັດສິນລົງໂທດມະນຸດໃນສມັຍຜ່ານມາ. ການຕັດສິນລົງໂທດໃນສມັຍກ່ອນແມ່ນນໍ້າ ແຕ່ວ່າການຕັດສິນໃນສມັຍທີ່ຈະມານີ້ແມ່ນໄຟ.

<u>ວັນຂອງພຣະຜູ້ເປັນເຈົ້າ</u> (3:8-10) (The Day of the Lord)

ໃນບົດ 3:8-10 ໄດ້ອະທິບາຍໃຫ້ເຂົ້າໃຈວ່າ ວັນແລະເວລາຂອງພຣະເຈົ້ານັ້ນບໍ່ເໝືອນກັບມະນຸດຄິດໄວ້ວ່າຄືກັນ. ຈາກພຣະທັມເພງສັນລະເສີນ 90:4 "ສໍາລັບພຣະອົງພັນປີເທົ່າກັບມື້ດຽວ". ຄວາມໝາຍຂອງພຣະ

ທັມຕອນນີ້ ບໍ່ໄດ້ໝາຍຄວາມເຈາະຈົງວ່າພັນປີນັ້ນເທົ່າກັບມື້ດຽວ. ອັຄສາວົກເປໂຕໄດ້ອະທິບາຍໃຫ້ເຂົ້າໃຈວ່າມະນຸດຈະຢັ່ງຮູ້ວັນແລະເວລາຂອງພຣະເຈົ້າບໍ່ໄດ້.
ໃນຂນະທີ່ພວກເຮົາຄິດເຖິງຄຳວ່າ ວັນ ເວລາຕາມລຳດັບ. ພຣະອົງມີພຣະປະສົງເໜືອກວ່າ ພຣະອົງບໍ່ໄດ້ບໍຣິຫານປົກຄອງສັປທຸກສິ່ງທີ່ພຣະອົງຊົງສ້າງຕາມກາລະເວລາເໝືອນແນວຄິດຂອງມະນຸດ. ເຊັ່ນພວກເຮົາເຄີຍໄດ້ຍິນກອງໂຍທາສ້າງທາງບໍ່ແລ້ວຕາມເວລາຄາດໝາຍໄວ້.ພວກເຂົາກໍຕ້ອງເຍື້ອນເວລາອອກຈົນທາງນັ້ນແລ້ວ. ແຕ່ພຣະເຈົ້າບໍ່ເປັນຢ່າງນັ້ນ ທຸກສິ່ງທຸກຢ່າງຢູ່ໃຕ້ການຊົງນຳຂອງພຣະອົງ. ບໍ່ມີສິ່ງໃດທີ່ຈະເໜືອພຣະອົງໄດ້ ຮ່ວມທັງເວລາດ້ວຍ.
ການຊັກຊ້າ ການສະເດັດມາຂອງພຣະອົງນັ້ນ. ພຣະອົງມີພຣະປະສົງ ແລະຍັງເປັນບົດຮຽນສຳຄັນທີ່ພວກເຮົາຈະຕ້ອງຮຽນຮູ້ດ້ວຍ. ພວກເຮົາຮຽນຮູ້ເຖິງການອົດກັ້ນພຣະທັຍຂອງພຣະອົງ, ພຣະອົງເປັນທີ່ເຊື່ອຖືໄດ້, ແລະພຣະອົງເປັນທີ່ໄວ້ວາງໃຈໄດ້. "ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງ" (3:9 ກ). ແຕ່ເໜືອໄປກວ່ານັ້ນ ແມ່ນພຣະຄຸນທີ່ພຣະອົງຊົງມີຕໍ່ມະນຸສໂລກ ພຣະອົງຈຶ່ງໄດ້ຊັກຊ້າຂອງການສະເດັດມາ. "ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫລາຍ. ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ປະສົງທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃໝ່" (3:9 ຂ). ພຣະອົງໄດ້ຜ່ອນຜັນເວລາໃຫ້ໂອກາດ ເພື່ອໃຫ້ຄົນທັງປວງມີໂອກາດຖິ້ມໃຈເກົ່າເອົາໃຈໃໝ່. ໝາຍຄວາມວ່າໃຫ້ພວກເຂົາກັບໃຈໃໝ່. ປ່ຽນຈາກຊີວິດທີ່ປະຕິເສດພຣະເຈົ້າໃຫ້ກັບມາຮັບເອົາພຣະອົງ. ໃນຂນະທີ່ພຣະອົງຜ່ອນຜັນເວລາໃຫ້ໂອກາດໃນການກັບໃຈນັ້ນ. ໃຫ້ພວກເຮົາມີຄວາມອົດທົນດ້ວຍຄວາມຫວັງ ສູ້ທົນໃນພາວະອັນຍາກລຳບາກນີ້ຈົນກວ່າເຖິງວັນທີ່ພຣະອົງຈະສະເດັດມາ.
"The Day of the Lord" ແປວ່າ <u>ວັນຂອງອົງພຣະຜູ້ເປັນເຈົ້າ</u> ເປັນຄຳສັບທີ່ຜູ້ປະກາດພຣະທັມໃຊ້ໃນພຣະສັນຍາເດີມ (ອາໂມດ 5:18,20). ສັບນີ້ໃຊ້ຢູ່ເລື້ອຍໆປະມານສີ່ຮ້ອຍປີຣະຫວ່າງພຣະສັນຍາເດີມຈົນເຖິງພຣະສັນຍາໃໝ່. ຄວາມໝາຍຂອງສັບນີ້ໝາຍເຖິງຄາວສຸດທ້າຍ. ພຣະທັມ 2 ເປໂຕ 3:10 ໄດ້ກ່າວເຖິງ "ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງ" ນັ້ນ "ເໝືອນດັ່ງຂະໂມຍມາ". ມີຄວາມໝາຍຄືກັນກັບໃນມັດທາຍ 24:36 ເພາະວ່າໃນພຣະທັມຕອນນັ້ນພຣະເຢຊູກ່າວວ່າ "ບໍ່ມີໃຜຮູ້". ເມື່ອຂະໂມຍມາກໍເຊັ່ນດຽວກັນບໍ່ມີໃຜຮູ້. ສະນັ້ນແຫລະ ພວກເຮົາຈະຕ້ອງຕຽມພ້ອມຢູ່ສເມີ.
ອັຄສາວົກເປໂຕໃຊ້ຄຳວ່າໄຟເປັນການຕັດສິນຂອງອົງພຣະຜູ້ເປັນເຈົ້າ (3:7). ເລີຍມີຄຣິສຕຽນບາງຄົນໄດ້ຕີຄວາມໝາຍໃນພຣະທັມຕອນນີ້ວ່າຈະເກີດສົງຄາມປາຣະມະນູ ຫລືຕາເວັນຈະຫລຸດຈາກໂຄຈອນຂອງມັນ. ໂລກຈະປະທະກັບດວງດາວຕ່າງໆໃນອາກາດ. ຜູ້ສັງເກດເຖິງທີ່ມາຂອງໄຟກໍໄຮ້ປໂຍດ. ເຖິງຢ່າງໃດກໍຕາມພວກເຮົາກໍຮູ້ຢູ່ແລ້ວວ່າໄຟ. ສຳລັບຜູ້ສັງເກດການເຖິງວັນເວລາກໍເຊັ່ນກັນ ພຣະອົງໄດ້ບອກແລ້ວວ່າບໍ່ມີໃຜຮູ້ ມັດທາຍ 24:36; 2 ເປໂຕ 3:10 ບົ່ງບອກວ່າວັນເວລານັ້ນມອບໄວ້ກັບພຣະເຈົ້າ. ຄົນເຍາະເຍີ້ຍນັ້ນພວກເຂົາມາແລ້ວພວກເຂົາກໍຈາກໄປຕາມສມັຍ ໄດ້ຫລາຍສັຕວັດມາແລ້ວ. ແຕ່ວ່າ ພຣະຄຸນຂອງພຣະເຈົ້າທີ່ນຳການກັບໃຈໃໝ່ຂອງຄົນທັງປວງນັ້ນຍັງເຕັມລົ້ນຢູ່ສເມີ. ແຕ່ການຕັດສິນລົງໂທດສຳລັບຜູ້ບໍ່ເຊື່ອຟັງນັ້ນຈະເກີດຂຶ້ນແນ່ນອນ. ໃນຂນະດຽວກັນ ໃຫ້ຜູ້ທີ່ມີຄວາມເຊື່ອຈົ່ງຕຽມພ້ອມຢູ່ສເມີ ແລະປະກາດຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ຄົນທັງປວງ ເພື່ອຊັກຊວນໃຫ້ພວກເຂົາກັບໃຈໃໝ່ ໃຫ້ມາຮັບເຊື່ອ ແລະໄວ້ວາງໃຈໃນພຣະເຢຊູຄຣິດ ເປັນພຣະຜູ້ໂຜດໃຫ້ພົ້ນ.

<u>ພວກເຮົາຈະເປັນຄົນປະເພດໃດໃນການລໍຄອຍຢູ່?</u> (3:11-15 ກ)
ໃນບົດທີ 3:3-15 ກ ອັຄສາວົກເປໂຕໄດ້ທ້າທາຍຜູ້ທີ່ເຊື່ອໃນສມັຍນັ້ນສອງປະການ. ປະການທີນຶ່ງ ພວກເຂົາຈະຮັບຄໍາເຍາະເຍີ້ຍວິທີໃດ? ເມື່ອຖືກເຍາະເຍີ້ຍກໍເຫມືອນກັບວ່າ ຖືກທ້າທາຍເຖິງຄວາມເຊື່ອຂອງພວກເຂົາ. ແຕ່ວ່າໃນຂນະຖືກເຍາະເຍີ້ຍ ພວກເຂົາກໍຍັງໄດ້ຮັບກໍາລັງໃຈ ແລະມີຄວາມຫວັງ. ເຖິງແມ່ນວ່າມີອຸປສັກອັນໃດ ຫລື ທຸກປານໃດກໍຕາມ ແຕ່ພວກເຂົາໄດ້ຮັບສັນຕິສຸກໃນຈິດໃຈ ເພາະວ່າພຣະອົງນັ້ນຊົງເປັນຜູ້ຄຸ້ມຄອງໃນສັພທຸກສິ່ງທີ່ພຣະອົງຊົງສ້າງຢູ່ສເມີ.

ປະການທີສອງ ທ້າທາຍເຖິງການດໍາເນີນຊີວິດອັນບໍຣິສຸດ ແລະ ການອຸທິດຕົວແກ່ພຣະເຈົ້າ. ພວກເຂົາປະເຊີນກັບບັນຫາຖືກເຍາະເຍີ້ຍ ແລະ ບັນຫາການດໍາເນີນຊີວິດອັນບໍຣິສຸດ ແລະ ການອຸທິດຕົນແກ່ພຣະເຈົ້າ . ຄຣິສຕຽນບາງຄົນອາດບໍ່ເອົາຫົວໃສ່ໃຈຊາ ແລະກາຍເປັນຄຣິສຕຽນຂີ້ຄ້ານ. "ເມື່ອຮູ້ແລ້ວວ່າສິ່ງທັງປວງຈະສລາຍໄປຢ່າງນີ້ທ່ານທັງຫລາຍຄວນຈະເປັນຄົນຢ່າງໃດ?" (3:11). ອັຄສາວົກເປໂຕທ້າທາຍພວກເຂົາໃນສອງປະການທີ່ກ່າວມານັ້ນແລ້ວກໍໃຫ້ຄໍາແນະນໍາແກ່ພວກເຂົາຄືຜູ້ທີ່ມີຄວາມເຊື່ອຈະຕ້ອງດໍາເນີນຊີວິດອັນ<u>ບໍຣິສຸດ</u>ແລະອຸທິດຕົນແກ່ພຣະເຈົ້າ. ຄໍາວ່າ <u>ບໍຣິສຸດ</u> ມີພື້ນຖານມາຈາກພຣະສັນຍາເດີມ. ມີຄວາມຫມາຍວ່າ ຜູ້ທີ່ມີຄວາມສໍາພັນກັບພຣະເຈົ້ານັ້ນ ພວກເຂົາຈະຕ້ອງແຍກຕົວຈາກ ການຫລີກລ້ຽງສິ່ງໃດໆທີ່ຈະເປັນເຫດໃຫ້ພວກເຂົາບໍ່ເຊື່ອຟັງ, ບໍ່ຢໍາເກງ, ແລະບໍ່ມີຄວາມຮັກພຣະເຈົ້າ.

ຄວາມສໍາພັນນີ້ບໍ່ພຽງແຕ່ກັບພຣະເຈົ້າເທົ່ານັ້ນ ພວກເຂົາຈະຕ້ອງມີຄວາມສໍາພັນກັບຄົນທົ່ວໄປດ້ວຍ. ການດໍາເນີນຊີວິດຂອງພວກເຂົາຈະຕ້ອງໃຫ້ຄົນທົ່ວໄປເຫັນພຣະລັກສະນະຂອງພຣະເຈົ້າໃນຊີວິດຂອງພວກເຂົາ. ລັກສະນະຂອງຜູ້ມີຄວາມເຊື່ອອີກປະການນຶ່ງກໍຄື ການດໍາເນີນຊີວິດດ້ວຍຄວາມອົດທົນ ແລະເຮັ່ງຮີບຄອຍຖ້າການສະເດັດມາຂອງພຣະອົງ (3:12).

ສໍາລັບຜູ້ທີ່ດໍາເນີນຊີວິດອັນບໍຣິສຸດ, ອຸທິດຕົນແກ່ພຣະເຈົ້າ, ແລະມີຄວາມອົດທົນຢູ່ ຜູ້ນັ້ນແຫລະ ເຫມາະສົມກັບວ່າ ຜູ້ທີ່ກໍາລັງຄອຍຖ້າການສະເດັດມາຂອງພຣະອົງ. ພວກເຂົາຈະໄດ້ຮັບຟ້າອາກາດໃຫມ່ ແລະແຜ່ນດິນໂລກໃຫມ່ຊຶ່ງຄວາມຊອບທັມຕັ້ງຫມັ້ນຢູ່ (3:13). ອັຄສາວົກເປໂຕໄດ້ໃຫ້ພວກເຂົາເຫັນເຖິງພາບພົດ ແລະປະສົງຢາກໄດ້ຄວາມຊອບທັມທີ່ຈະມາເຖິງນັ້ນ. ຄວາມຊອບທັມຫມາຍເຖິງ ການດໍາເນີນຊີວິດທີ່ມີຄວາມຊອບທັມຕາມພຣະລັກຊນະຂອງພຣະເຈົ້າ.

ເຫດສັນນັ້ນ (3:14) ຕາມດັ່ງກ່າວທີ່ໄດ້ອະທິບາຍມາແລ້ວ ພວກເຂົາຈະພົບສັນຕິສຸກກັບພຣະເຈົ້າ. ຄໍາວ່າສັນຕິສຸກໃນທີ່ນີ້ ໃນພຣະສັນຍາເດີມເຊັ່ນຄໍາວ່າ <u>ຊາໂລມ</u> (Shalom) ຈຶ່ງເປັນສຸກເຖີດ ເມື່ອຢືນຢູ່ຕໍ່ພຣະພັກຂອງພຣະອົງດ້ວຍຄວາມບໍຣິສຸດ, ຄຸນຄວາມດີ, ແລະຄໍາສັນລະເສີນ ເມື່ອພຣະອົງຊົງສະເດັດມາໃນຄັ້ງທີສອງ.

**<u>ຄໍາຖາມ</u>**

1. ອຸປສັກບັນຫາທຸກດ້ານໃນຊີວິດຂອງທ່ານຈະຊ່ອຍໃຫ້ທ່ານເຕີບໃຫຍ່ໃນຄວາມເຊື່ອຂອງທ່ານໄດ້ຢ່າງໃດ?
2. ທ່ານເຫັນພ້ອມຫລືບໍ່ໃນຂໍ້ຄວາມດັ່ງກ່າວນີ້? ດ້ວຍເຫດໃດ? ຖ້າແຕ່ສັງເກດວັນເວລາການສະເດັດມາຂອງພຣະອົງ ຈະຊັກຈູງໃຫ້ຄຣິສຕຽນຂາດຄວາມຕັ້ງໃຈທາງດ້ານການນໍາຄົນໃຫ້ກັບໃຈໃຫມ່ ແລະປະກາດຂ່າວປະເສີດກັບຄົນທົ່ວໄປ.
3. ການສຶກສາສົນທະນາພຣະທັມ 2 ເປໂຕ ຈະຊ່ອຍໃຫ້ພວກເຮົາມີກໍາລັງໃຈ ແລະຫນູນນໍ້າໃຈໄດ້ຢ່າງໃດ?

# ບົດຮຽນທີ 13
# ພຣະເມສານ້ອຍຊົງພຣະກຽດຕິຍົດ

---

<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u> ພຣະນິມິດ 5

<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u> ພຣະນິມິດ 4-5

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເມສານ້ອຍໄດ້ສິ້ນພຣະຊົນຂອງພຣະອົງ ເພື່ອໄຖ່ໂທດຄວາມຜິດບາບຂອງພວກເຮົາ ຊຶ່ງໄດ້ນຳພວກເຮົາມາສູ່ຄວາມພົ້ນ. ເທິງສວັນ ແລະແຜ່ນດິນໂລກຈຶ່ງສັນລະເສີນ ພຣະກຽດຕິຍົດພຣະອົງພຽງຜູ້ດຽວ. ໃຫ້ພວກເຮົາມານະມັສການພຣະອົງສຸດຈິດ ສຸດໃຈ ແລະສຸດກຳລັງຂອງພວກເຮົາເຖີດ.

<u>ຄຳຖາມເພື່ອການສຳຫລວດ:</u> ແມ່ນຜູ້ໃດທີ່ພວກເຮົາໄດ້ຍົກໄວ້ເປັນທີ່ສູງສຸດໃນຊີວິດຂອງພວກເຮົາ?

<u>ຈຸດປະສົງຂອງບົດຮຽນນີ້:</u> ມອບຈິດຖວາຍກາຍນະມັສການພຣະອົງ.

## <u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການຕິດຕໍ່ຄົນທັງປວງ.

ພວກເຮົາຈະເບິ່ງພຣະທັມ ພຣະນິມິດນີ້ຂ້າມໄປ ຖ້າພວກເຮົາຄິດວ່າພຣະທັມເຫລົ່ານີ້ ເວົ້າແຕ່ສິ່ງທີ່ຈະເກີດຂຶ້ນໃນອະນາຄົດຢ່າງດຽວ. ພຣະທັມເຫລົ່ານີ້ໄດ້ຊີ້ໃຫ້ເຫັນເຖິງແບບແຜນການນະມັສການທີ່ດີທີ່ສຸດ ໃນພຣະສັນຍາໃຫມ່. ບົດຮຽນນີ້ໄດ້ເນັ້ນເຖິງ ພຣະຄຣິດ, ພຣະເມສານ້ອຍຊຶ່ງເປັນທີ່ນະມັສການ ແລະຖວາຍກຽດແດ່ພຣະອົງ.

"ແມ່ນໜ້າທີ່ອັນໃດທີ່ສຳຄັນທີ່ສຸດຢູ່ໃນຄຣິສຕະຈັກ?" ຄຣູສອນຖາມຂຶ້ນ. ຫລັງຈາກນັ້ນລູກຫ້ອງກໍໃຊ້ເວລາຄິດຈັກໜ້ອຍນຶ່ງແລ້ວພາກັນຍົກມື. ແຕ່ລະຄົນກໍຕອບຕາມລຳດັບ.

ຜູ້ທຳອິດໄດ້ຕອບວ່າ, "ການສຶກສາ".

ຜູ້ຕໍ່ມາກໍຕອບວ່າ, "ສາມັກຄີທັມ".

ຜູ້ທີ່ສາມ, "ການອອກນຳຄົນ".

ຫລັງຈາກທຸກໆຄົນມີໂອກາດອອກຄວາມຄິດຄວາມເຫັນແລ້ວ. ຜູ້ເປັນຄຣູກໍໄດ້ເວົ້າຂຶ້ນວ່າ, "ຄຳຕອບທຸກໆຄຳກໍດີທັງນັ້ນ. ແຕ່ວ່າທຸກຢ່າງທີ່ກ່າວມານີ້ກໍຢູ່ໃຕ້ການນຳພາຂອງການນະມັສການ.

ທຸກສິ່ງທຸກຢ່າງທີ່ພາກັນປະຕິບັດຢູ່ໃນຄຣິສຕະຈັກນັ້ນກໍມາຈາກການນະມັສການທັງນັ້ນ. ຖ້າຫາກວ່າຄຣິສຕະຈັກຂາດພະລັງຈາກພຣະວິນຍານບໍຣິສຸດ ໃນການນະມັສການພຣະເຈົ້າ ໂດຍຜ່ານທາງພຣະເຢຊູຄຣິດແລ້ວ. ການປຸກຣະດົມໃຫ້ມີຄຣິສຕຽນສຶກສາ, ສາມັກຄີທັມ, ຫລື ການອອກນຳຄົນກໍຈະຂາດພະລັງ.

<u>ກ່ຽວກັບປຶ້ມພຣະນິມິດ</u>

ພຣະທັມພຣະນິມິດເປັນພຣະທັມທີ່ເຂົ້າໃຈຍາກທີ່ສຸດ ເມື່ອທຽບກັບພຣະທັມເຫລົ່ານອື່ນໆ ໃນພຣະສັນຍາໃຫມ່.

ອ່ານໄດ້ແຕ່ເຂົ້າໃຈຍາກ, ຕີຄວາມຫມາຍກໍຍາກ ແລະຈະນໍາມາໃຊ້ໃນຊີວິດປະຈໍາວັນກໍຍາກ. ຫລາຍສິ່ງຫລາຍຢ່າງທີ່ກ່າວໃນພຣະທັມນັ້ນ ເພິ່ນໄດ້ໃຊ້ເປັນເຄື່ອງຫມາຍ. ສະນັ້ນແຫລະ ຜູ້ອ່ານໃນສມັຍນີ້ບໍ່ເຂົ້າໃຈ. ຫລາຍຄັ້ງມັກເຫດ ຫລື ຜູ້ອ່ານມັກຈະຂ້າມພຣະທັມເຫລັ້ມນີ້ໄປ. ມັກຈະໃຊ້ ແລະອ່ານພຣະທັມເຫລັ້ມອື່ນໆຂອງພຣະສັນຍາໃຫມ່. ບາງຄົນກໍຖືວ່າພຣະທັມເຫລັ້ມນີ້ເຕັມໄປແຕ່ຂໍ້ເລິກລັບ ແລ້ວກໍເລີຍບໍ່ແຕະຕ້ອງພຣະທັມເຫລັ້ມນີ້ເລີຍ. ສ່ວນຫລາຍແລ້ວແມ່ນຂາດຄວາມເຂົ້າໃຈພື້ນຖານຂອງພຣະທັມເຫລັ້ມນີ້ ເມື່ອພະຍາຍາມຈະຕີຄວາມຫມາຍຂອງພຣະທັມເຫລັ້ມນີ້.

ປະວັດສາດໄດ້ຊີ້ບອກໃຫ້ພວກເຮົາເຫັນວ່າຕີຄວາມຫມາຍພຣະຄັມພີທີ່ໃຊ້ເຄື່ອງຫມາຍໄດ້ຊີ້ບອກເຫດການທີ່ຈະເກີດຂຶ້ນຈະຕີຜິດເປົ້າຫມາຍ ແລະຈຸດປະສົງຂອງພຣະທັມຕອນນັ້ນ.

ຫລາຍຄັ້ງຜູ້ທໍານວາຍມັກຈະໃຊ້ເຄື່ອງຫມາຍໃນພຣະທັມເຫລັ້ມນີ້ມາຊີ້ບອກເຖິງວັນນັ້ນ ຫລື ເວລານັ້ນຈະມີເຫດການເກີດຂຶ້ນຢ່າງນັ້ນຫລືຢ່າງນີ້ ແລະບາງຄັ້ງກໍອາດຊີ້ບອກວ່າເປັນຜູ້ນັ້ນ ຫລື ຜູ້ນີ້ຕາມພຣະທັມໄດ້ກ່າວໄວ້ລ່ວງຫນ້າກ່ອນແລ້ວ. ພວກນີ້ໄດ້ໃຊ້ພຣະທັມຂອງພຣະເຈົ້າມາຂາຍກິນ ໂຄສະນາຕົວະຍົວະຊວນເຊື່ອເປັນເຫດໃຫ້ຫລາຍຄົນຕິດຕາມໃນທາງຜິດ.

ພວກເຮົາກໍຈະນໍາພາຜິດຄືກັນຖ້າພວກເຮົາເຈາະຈົງວ່າ ພຣະທັມເຫລັ້ມນີ້ ຊີ້ບົ່ງບອກເຖິງແຕ່ເຫດການຈະເກີດຂຶ້ນໃນສມັຍນີ້. ເຊັ່ນຫລາຍຄົນພາກັນແຕກຕື່ນປີ2000. ບໍ່ຮູ້ແຕ່ກັບແກ້ງວ່າຮູ້ ແລ້ວຕີຄວາມຫມາຍໄປຢ່າງບໍ່ຖືກຕ້ອງ. ຖ້າຜູ້ໃດສຶກສາພຣະທັມເຫລັ້ມນີ້ຢ່າງເລິກເຊິ່ງແລ້ວ. ລາວຈະຮູ້ສຶກວ່າ ໃຈຄວາມຂອງພຣະທັມເຫລັ້ມນີ້. ໄດ້ຊີ້ບອກເຖິງພຣະເຈົ້າ, ຣາຊອານາຈັກຂອງພຣະເຈົ້າ, ການຊົງໄຖ່ບາບຂອງພຣະເຢຊູຄຣິດ ແລະພາຣະກິດຂອງພຣະວິນຍານບໍຣິສຸດ. ບໍ່ມີອັນໃດຈະວັດແທກຢັ່ງຮູ້ເຖິງຄວາມເລິກ,ຄວາມກວ້າງສຸດເຫນືອທີ່ຈະອາດມະໂນພາບໄດ້ທີ່ພຣະອົງໄດ້ກະທໍາຢູ່ຕລອດມາ.

ອາຈານສອນພຣະສັນຍາໃຫມ່ໄດ້ແນະນໍາໄວ້ວ່າ ຖ້າຢາກເຂົ້າໃຈເຖິງຄວາມຫມາຍຂອງພຣະທັມພຣະນິມິດໃຫ້ເຮັດດັ່ງຕໍ່ໄປນີ້:

1. ຈໍາໄວ້ວ່າໃຈຄວາມຂອງພຣະທັມເຫລັ້ມນີ້ແມ່ນ ພຣະນິມິດ 1:1. "ການຊົງສະແດງຂອງພຣະເຢຊູ".
2. ອ່ານຈາກຕົ້ນຂອງພຣະທັມໄປຈົນສຸດ. ອ່ານໃຫ້ໄວເທົ່າທີ່ຈະໄວໄດ້ ແຕ່ໃຫ້ເຂົາໃຈເນື້ອຫາທີ່ອ່ານຜ່ານໄປນັ້ນ.
3. ຫລັງຈາກອ່ານແລ້ວ, ໃຫ້ໄປເລົ່າໃຫ້ເດັກນ້ອຍອາຍຸສິບສອງປີ ແລະອະທິບາຍໃຫ້ເດັກນັ້ນຟັງ.

ວິທີທີ່ກ່າວມານີ້ຈະຊ່ອຍໃຫ້ຜູ້ອ່ານນັ້ນຍຶດເອົາໃຈຄວາມສໍາຄັນຂອງພຣະທັມນີ້.ແຕ່ຈະບໍ່ໄດ້ລາຍລະອຽດທຸກໆຕອນ. ໃຈຄວາມສໍາຄັນຂອງພຣະທັມເຫລັ້ມນີ້ກໍມີໃຈຄວາມອັນດຽວໂດຍທົ່ວໄປຂອງພຣະສັນຍາໃຫມ່ຫມົດທັງເຫລັ້ມ ຄືນໍາຂ່າວປະເສີດຂອງອົງພຣະເຢຊູຄຣິດອອກໄປໃຫ້ຄົນທຸກທົ່ວມຸມໂລກ. ພວກເຮົາຈະຕ້ອງຣະວັງຢ່າໄດ້ເດີນຜິດເປົ້າຕາມພຣະຣາຊດໍາຣັດສັ່ງຂອງພຣະຄຣິດ.

ສາຍເຫດອາຈານສອນພຣະສັນຍາໃຫມ່ໄດ້ແນະນໍາຢ່າງນີ້ ກໍເພາະວ່າຖ້າພວກເຮົາສາມາດເລົ່າເຣື່ອງທີ່ພວກເຮົາໄດ້ອ່ານໃຫ້ຄົນອື່ນຟັງ. ຫມາຍຄວາມວ່າພວກເຮົາເຂົ້າໃຈໃນພຣະທັມນັ້ນ. ສະນັ້ນແຫລະ ຖ້າພວກເຮົາບໍ່ສາມາດເລົ່າໃຫ້ຄົນອື່ນຟັງ ກໍຫມາຍຄວາມວ່າພວກເຮົາບໍ່ທັນໄດ້ເຂົ້າໃຈເທື່ອ. ເມື່ອພວກເຮົາເລົ່າໃຫ້ຄົນອື່ນຟັງໃນເຣື່ອງທີ່ພວກເຮົາອ່ານໄປນັ້ນ. ມັນຈະຊ່ອຍໃຫ້ພວກເຮົາເອົາແນວຄິດອອກມາຈາກພຣະທັມນັ້ນແລ້ວມາໃຊ້ເປັນຄໍາເວົ້າທີ່ຄົນອື່ນເຂົ້າໃຈໄດ້.

ພວກເຮົາອາດຈະຖາມວ່າເປັນຫຍັງອາຈານສອນພຣະສັນຍາໃຫມ່ຈຶ່ງເວົ້າຢ່າງນີ້? ຄໍາຕອບກໍຄືວ່າຖ້າພວກເຮົາພະຍາຍາມເກັບເອົາຂໍ້ຄວາມທຸກຕອນໃນພຣະນິມິດມາແລ້ວຈະທໍາຄວາມເຂົ້າໃຈຫມົດໃຫ້ລະອຽດ. ພວກ

ເຮົາກໍຈະຈັບໃຈຄວາມຂອງພຣະທັມນັ້ນບໍ່ໄດ້. ເພາະມີຄໍາເວົ້າເຣື່ອງ ເຄື່ອງໝາຍໃນພຣະທັມນັ້ນທີ່ພວກເຮົາບໍ່ອາດເຂົ້າໃຈ.

<u>ໜັງສືມ້ວນທີ່ມີຄ່າ</u> (5:1-5)
ໃນສມັຍນີ້ເອີ້ນກັນວ່າປຶ້ມ, ແຕ່ໃນສມັຍກ່ອນນັ້ນເປັນໜັງສືມ້ວນ. ໃນສມັຍນີ້ ປຶ້ມມີຫລາຍເຕັມຫ້ອງຕລາດ ແລະຕາມບ້ານເຮືອນ ບໍ່ວ່າຢູ່ບ່ອນໃດກໍເຫັນແຕ່ປຶ້ມຈົນວ່າປຶ້ມນັ້ນເບິ່ງເປັນຂອງທັມດາ. ແຕ່ສມັຍຂອງອັຄສາວົກໂຢຮັນນັ້ນ ເປັນໜັງສືມ້ວນ. ໜັງສືມ້ວນນັ້ນມີຄຸນຄ່າຫລາຍ ແລະບໍ່ແມ່ນທຸກໆຄົນຈະມີຢູ່ຕາມບ້ານເຮືອນ. ເປັນສິ່ງຂອງທີ່ຫາຍາກ ກ່ອນຈະເປັນໜັງສືມ້ວນຕ້ອງໃຊ້ເວລາຂຽນດົນນານຈຶ່ງໄດ້ເປັນມ້ວນ. ສະນັ້ນ ຄົນໃນສມັຍນັ້ນຈຶ່ງຖືວ່າໜັງສືມ້ວນນັ້ນມີຄຸນຄ່າສູງ. ທີ່ອັຄສາວົກເຫັນນັ້ນ ບໍ່ແມ່ນໜັງສືມ້ວນທັມດາ ແຕ່ເປັນໜັງສືມ້ວນທີ່ມີຄ່າ. ເພາະໜັງສືມ້ວນນີ້ຢູ່ພຣະຫັດເບື້ອງຂວາຂອງພຣະເຈົ້າ. ປົກກະຕິແລ້ວ ໜັງສືມ້ວນນັ້ນເຂົາຈະຂຽນແຕ່ຂ້າງໃນແລ້ວມ້ວນໃຫ້ເປັນມ້ວນ. ແຕ່ໜັງສືມ້ວນນີ້ "ຂຽນໄວ້ທັງຂ້າງໃນ ແລະຂ້າງນອກ ຕິຕາປະທັບໄວ້ເຈັດດວງ" (5:1).
ໃນສມັຍຂອງໂຣມເປັນຜູ້ປົກຄອງ ໜັງສືພິນັຍກັມຕ້ອງມີພະຍານເຈັດຄົນ ແລ້ວເຈັດຄົນນັ້ນ ປະທັບຕາຂອງໃຜຂອງລາວໃສ່ຈຶ່ງເປັນທາງການ. ເມື່ອເວລາຈະມາຍໜັງສືມ້ວນນັ້ນ ກໍຕ້ອງໃຫ້ເຈັດຄົນມາພ້ອມໜ້າພ້ອມຕາກັນຈຶ່ງແກະໄດ້. ແຕ່ໃນພຣະທັມພຣະນິມິດຕ້ອງການແຕ່ພຽງຜູ້ດຽວ ເປັນຜູ້ແກະຕາປະທັບທັງເຈັດຂອງໜັງສືມ້ວນນັ້ນ. ເທວະດາຜູ້ມີຣິດຕົນນຶ່ງໄດ້ທ້າທາຍດ້ວຍສຽງອັນດັງວ່າ, "ຜູ້ໃດໜໍ ເປັນຜູ້ສົມຄວນຈະແກະຕາປະທັບ ແລະມາຍມ້ວນໜັງສືນີ້ອອກ" (5:2). "ບໍ່ມີຜູ້ໃດໃນສວັນ, ເທິງແຜ່ນດິນໂລກ, ຫລືໃຕ້ແຜ່ນດິນກໍດີທີ່ສາດມາຍໜັງສືນັ້ນ" (5:3). ອັຄສາວົກໂຢຮັນຄ້ອຍໃຈຈົນຮ້ອງໄຫ້ຮໍ່າໄຮ ເພາະລາວໄດ້ຍິນເທວະດາຜູ້ມີຣິດເວົ້າວ່າ, "ບໍ່ມີຜູ້ໃດ". ພວກເຮົາຈະເຫັນວ່າເຣື່ອງຕ່າງໆໃນອັນນະຄະດີ ແຕ່ລະເຣື່ອງຈະຕ້ອງມີວີຣະບູຣຸດໄປຕໍ່ສູ້ເອົາຊັຍຊະນະຈາກຄວາມຊົ່ວຮ້າຍ. ປາສະຈາກວີຣະບູຣຸດຜູ້ນັ້ນຄວາມຊັຍຊະນະກໍຈະບໍ່ມີ. ໃຈຄວາມຂອງພຣະນິມິດ ບົດທີ່ຫ້າກໍຄືວ່າຊອກສະແຫວງຫາວີຣະບູຣຸດທີ່ຈະມາມາຍມ້ວນໜັງສືນີ້.
ເຫດການເກີດຂຶ້ນຢ່າງໄວ ຄືມີຜູ້ນຶ່ງໃນພວກອາວຸໂສທັງຫລາຍ ໃນຣາຊບັນລັງໄດ້ຊີ້ໃຫ້ເຫັນວີຣະບູຣຸດຜູ້ນຶ່ງຄືພຣະເມຊີອາ. "ເບິ່ງແມ, ສິງແຫ່ງຕະກຸນຢູດາ" (5:5) ໄດ້ຊີ້ບົ່ງບອກໃຫ້ຮູ້ ແລະເຂົ້າໃຈເຖິງບັນພະບຸຣຸດຂອງອົງພຣະເຢຊູຄຣິດ. ພຣະເມຊີອາຂອງຊາວຢິວທີ່ພວກເຂົາລໍຄອຍນັ້ນ ແມ່ນພຣະອົງຈະມາໃນຮູບນັກຮົບ ຊຶ່ງໄດ້ກ່າວໄວ້ເປັນເວລາຫລາຍສັດຕະວັດມາແລ້ວ. ພຣະອົງຈະມາປົດປ່ອຍຊາວຢິວໃຫ້ເປັນອິສຣະຈາກການບີບບັງຄັບຂອງໂຣມັນ. ບໍ່ວ່າໃຜກໍຕາມຈະມາແກະຕາທີ່ປະທັບຢູ່ໜັງສືມ້ວນນີ້ ຈະຕ້ອງເປັນຜູ້ມີຣິດອໍານາດເໜືອກວ່າຜູ້ປົກຄອງທີ່ມີອໍານາດຢູ່ໃນໂລກ. ໃນທີ່ສຸດກໍໄດ້ພົບວີຣະບຸຣຸດຜູ້ນັ້ນ ຄືພຣະເມສານ້ອຍ.

<u>ພຣະເມສານ້ອຍ</u> (5:6-8)
ອັຄສາວົກໂຢຮັນຫວັງວ່າຈະໄດ້ເຫັນສິງແຫ່ງຕະກຸນຢູດາ. ແຕ່ພາບທີ່ລາວໄດ້ເຫັນນັ້ນບໍ່ເປັນຄືຄວາມຕັ້ງໃຈ. ລາວເຫັນພຣະເມສານ້ອຍແທນທີ່ຈະເຫັນສິງ. ພຣະເມສານ້ອຍໄດ້ເຂົ້າມາຮັບເອົາໜັງສືມ້ວນນັ້ນ ຈາກພຣະຫັດເບື້ອງຂວາຂອງພຣະເຈົ້າ. ພາບພົດຂອງພຣະເມສານ້ອຍເປັນເໝືອນຖືກຂ້າແລ້ວ (5:6). ໃນພາບພົດຂອງພວກເຮົາຈະເຫັນວ່າ ພຣະເມສານ້ອຍບໍ່ມີຄວາມສາມາດຈະແກະຕາທີ່ປະທັບໄວ້. ພວກເຮົາຈະອາດມະໂນພາບໄວ້ວ່າ ພຣະເມສານ້ອຍນີ້ຈະຕ້ອງນອນແຜ່ຢູ່ເທິງແທ່ນບູຊາ. ແຕ່ພຣະເມສານ້ອຍອົງນີ້ຢືນຢູ່ ມີເຂົາເຈັດອັນ ແລະມີຕາເຈັດໜ່ວຍ. ພຣະເຈົ້າຜູ້ນັ່ງຢູ່ບັນລັງຮູ້ຈັກພຣະເມສານ້ອຍ. ພຣະອົງຈຶ່ງອະນຸຍາດໃຫ້

ພຣະພຣະເມສານ້ອຍໄດ້ແກະຕາທີ່ປະທັບເທິງໜັງສືມ້ວນ. ພຣະອົງຈະປາກົດຢູ່ໃນພຣະທັມ ພຣະນິມິດນີ້ຈົນໝົດເຣື່ອງທີ່ອັຄສາວົກໂຢຮັນໄດ້ບັນທຶກໄວ້. ເລີ່ມຈາກບົດທີຫົກຂອງພຣະທັມ ພຣະນິມິດ ພຣະເມສານ້ອຍຈະເລີ່ມແກະຕາທີ່ປະທັບຢູ່ໃນໜັງສືມ້ວນ. ພຣະອົງນີ້ແຫລະ ຈະເປັນຜູ້ທຳລາຍອຳນາດຂອງມານ ແລະພຣະອົງຈະປະທານຄວາມພົ້ນໃຫ້ມະນຸສໂລກ.

ພວກເຮົາຈະເຂົ້າໃຈຢ່າງໃດໃນເຣື່ອງທີ່ໄດ້ເປີດເຜີຍໃຫ້ເຫັນໃນປະຈຸບັນນີ້. ເມື່ອພຣະທັມເຫລັ້ມນີ້ໄດ້ກ່າວເຖິງການສະແດງຂອງອົງພຣະເຢຊູຄຣິດນັ້ນ ແລະໃຫ້ເລີ່ມຕິດຕາມຕໍ່ໄປ. ພວກເຮົາຈະບໍ່ໄກຈາກເປົ້າໝາຍ ຫລືໃຈຄວາມຂອງພຣະທັມບົດນີ້ ເມື່ອເຂົ້າໃຈວ່າ ຊາວຢິວມີຄວາມຫວັງໃຈວ່າ ພຣະເຢຊູນັ້ນ ຈະເປັນວີຣະບູຣຸດ (ສິງຂອງຕະກຸນຢູດາ) ທີ່ຈະຂີ່ຣົດຮົບໄປໂຄ່ນລົ້ມໂຣມເພື່ອຈະໃຫ້ຊາວຢິວເປັນອິສລະ. ແຕ່ພຣະເມຊີອາໄດ້ໃຊ້ວິທີທາງອື່ນ ແທນທີ່ຈະມາໃນຮູບສິງ. ແຕ່ພຣະອົງມາໃນຮູບພຣະເມສານ້ອຍທີ່ຖືກນຳໄປຂ້າ ຄືພຣະອົງຊົງຍອມໃຫ້ເຂົາຄຶງຢູ່ເທິງໄມ້ກາງແຂນ. ນີ້ເປັນວິທີຂອງພຣະອົງທີ່ຈະນຳອານາຈັກຂອງພຣະເຈົ້າ ມາສູ່ມະນຸດໂລກດ້ວຍວິທີທາງຂອງພຣະອົງ. ວິທີສິ້ນພຣະຊົນທາງທໍຣະມານນີ້ ເປັນວິທີນາບຂູ່ໃຫ້ຜູ້ໃດຜູ້ນຶ່ງຈະມາເປັນພຣະຜູ້ໂຜດໃຫ້ພົ້ນ. ແຕ່ພຣະອົງໄດ້ເອົາຊັຍຊະນະຄວາມຕາຍ ແລະອຸບມຶງບໍ່ສາມາດຈະບັນຈຸພຣະອົງໄດ້. ຕາເຈັດໜ່ວຍໝາຍເຖິງພຣະອົງສະຖິດຢູ່ທຸກຫົນທຸກແຫ່ງ ແລະເຂົາເຈັດອັນໝາຍເຖິງພຣະອົງຊົງມີຣິດອຳນາດຢ່າງຄົບບໍຣິບູນ.

ໃນບົດທີ 5:6-8 ເປັນຂ່າວປະເສີດຊຶ່ງ ພຣະບິດາຊົງຢູ່ພຣະຣາຊບັນລັງ. ພຣະອົງໃຊ້ໃຫ້ພຣະບຸດຄືພຣະເຢຊູຄຣິດໄປປະຕິບັດຕາມແຜນການທີ່ມອບໝາຍໃຫ້ ແລະພຣະຜູ້ເລົ້າໂລມຄືພຣະວິນຍານບໍຣິສຸດກໍປະຕິບັດຕາມພຣະຣາຊກິດຂອງພຣະອົງ.

<u>ພຣະເມສານ້ອຍຊົງໄດ້ຮັບພຣະກຽດຕິຍົດໃນການນະມັສການ</u> (5:9-14)

ມາເຖິງຕອນນີ້ ກໍໄດ້ເຫັນເຫດການເກີດຂຶ້ນຫລາຍຢ່າງໃນຣາຊບັນລັງ. ໃນບົດທີ 5:14 ຈະມີເຫດການອັນດຽວກັນກັບບົດທີ 4:11. ໃນສອງບົດນີ້ພວກເຮົາຈະເຫັນ ຈາກພຣະເຈົ້າໄປເຖິງພຣະຄຣິດ ຕໍ່ຈາກນັ້ນກໍເຫັນສັດທັງສີ່ກັບພວກອາວຸໂສຊາວສີ່ທ່ານ ຕໍ່ໄປກໍແມ່ນໄພ່ພົນທັງປວງຂອງພຣະເຈົ້າ ໄດ້ນະມັສການພຣະເຈົ້າຄືຜູ້ຊົງສ້າງ ແລະພຣະຜູ້ຊົງໂຜດໃຫ້ພົ້ນ.

ໃຫ້ພວກເຮົາວາດມະໂນພາບເບິ່ງ ພີ່ນ້ອງຄຣິສຕຽນທີ່ຖືກຂົ່ມເຫງໃນສມັຍຂອງອັຄສາວົກໂຢຮັນ. ພວກເຂົາກຳລັງອ່ານພຣະທັມພຣະນິມິດນີ້ ຫລັງຈາກພວກເຂົາອ່ານຈົບແລ້ວ. ພວກເຂົາກໍມີພື້ນຖານແຫ່ງຄວາມເຊື່ອທີ່ໝັ້ນຄົງ ແລະເຂົ້າໃຈວ່າຊີວິດຂອງພວກເຂົານັ້ນກໍໄດ້ຮັບຄວາມປອດພັຍໃນພຣະອົງ. ບໍ່ມີອຳນາດໃດໆໃນໂລກນີ້ຈະຢູ່ເໜືອຄວາມຍິ່ງໃຫຍ່ຂອງພຣະເມສານ້ອຍ.

ຝູງຊົນທີ່ເຂົ້າເຝົ້າພຣະເຈົ້າທີ່ຣາຊບັນລັງໄດ້ຮັບຮູ້ ແລະເປັນພະຍານເຖິງແຜນການ ຂອງການຊົງໄຖ່ມະນຸດໂລກທີ່ມີພຣະເຈົ້າຊົງເປັນພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ ໄດ້ປະສານງານກັນໃນພຣະຣາຊກິດອັນຍິ່ງໃຫຍ່ນີ້.

ໃນຂໍ້ 9-10 ເປັນເພງສັນລະເສີນຊຶ່ງຮ້ອງສລັບກັນ.ຂໍ້ 11-12 ໄດ້ບັນລະຍາຍເຖິງສຽງຂອງພວກເທວະດາຈຳນວນຫລາຍເປັນໂກດໆ ແສນໆ ຢູ່ອ້ອມຣາຊບັນລັງ. ເປັນຈຳນວນຫລາຍຈົນນັບບໍ່ໄດ້. ພຣະເມສານ້ອຍເປັນທີ່ຍ້ອງຍໍສັນລະເສີນໃນການນະມັສການ.

ທ້າຍສຸດນີ້ຂໍ້ 13 ສິ່ງທີ່ມີຊີວິດທີ່ພຣະເຈົ້າໄດ້ຊົງສ້າງອອກເປັນສຽງດຽວກັນຮ້ອງເພງສັນລະເສີນ ນັກຮ້ອງຂະບວນໃຫຍ່ທັງໃນສວັນ, ເທິງແຜ່ນດິນໂລກ, ໃຕ້ແຜ່ນດິນ, ແລະມະຫາສມຸດ ຕ່າງກໍຮ້ອງສັນລະເສີນນະມັສ

ການພຣະເຈົ້າ. ຈຸດເປົ້າໝາຍຂອງພຣະທັມຂໍ້ນີ້ ກໍຄືວ່າໃຫ້ຜູ້ອ່ານຂອງອັຄສາວົກນັ້ນມີຄວາມຮູ້ສຶກມີການນະມັສການພຣະເຈົ້າ. ສຳລັບຜູ້ອ່ານສມັຍນີ້ກໍໃຫ້ມີຄວາມຮູ້ສຶກເຊັ່ນດຽວກັນ. ພວກເຮົາບໍ່ເຫັນນິມິດເໝືອນດັ່ງອັຄສາວົກໂຢຮັນ. ເຖິງຢ່າງໃດກໍຕາມພວກເຮົາກໍເປັນສ່ວນນຶ່ງທີ່ພຣະເຈົ້າໄດ້ຊົງສ້າງ ເໝືອນດັ່ງໄດ້ບັນລະຍາຍໃນພຣະນິມິດບົດທີ 5.

**<u>ຄຳຖາມ</u>**

1. ບົດຮຽນນີ້ໄດ້ຊ່ອຍໃຫ້ທ່ານເຂົ້າໃຈເຖິງພຣະທັມພຣະນິມິດ ແລະນຳໄປໃຊ້ໄດ້ຢ່າງໃດ?
2. ທ່ານພິຈາຣະນາຕຶກຕອງຢ່າງໃດກັບພຣະທັມຂອງພຣະເຈົ້າ?
3. ໃຫ້ທວນຄິດເຖິງສະຖານທີ່ ແລະເວລາທີ່ທ່ານໄດ້ນະມັສການຮ່ວມກັບໄພ່ພົນຂອງພຣະເຈົ້າ ແລະຮູ້ສຶກວ່າມີຄວາມໝາຍຫລາຍໃນຄາວນັ້ນ.
4. ທ່ານມີປະສົບການຢ່າງໃດເມື່ອທ່ານນະມັສການສັນລະເສີນພຣະເຈົ້າ ຖ້າມກາງຄວາມສົດສວຍງົດງາມຂອງທຸກສິ່ງທີ່ພຣະເຈົ້າໄດ້ສ້າງຂຶ້ນມາ ເຊັ່ນເມື່ອຕາເວັນຂຶ້ນ ຫລື ຕາເວັນຕົກດິນ?
5. ອ່ານພຣະທັມພຣະນິມິດບົດທີ 5 ໃຫ້ອ່ານອອກສຽງຈະອ່ານຜູ້ດຽວ ຫລືອ່ານເປັນໝູ່ກໍໄດ້, ຕໍ່ມາໃຫ້ອ່ານບໍ່ອອກສຽງແລ້ວໃຫ້ມາສົມທຽບເບິ່ງວ່າຈະມີຜົນສະທ້ອນຢ່າງໃດ?